ປຶ້ມຂໍ້ມູນບ້ານເລກທີ 03

ຂໍ້ມູນປະຫວັດຄວາມເປັນມາ, ຊີວິດການເປັນຢູ່, ຊັບພະຍາກອນທຳມະຊາດ ແລະ ແຜນທີ່

ປຶ້ມຂໍ້ມູນບ້ານ

ຂອງ

ບ້ານ ໂນນຮັ່ງ

ເມືອງ ອາດສະພັງທອງ ແຂວງສະຫວັນນະເຂດ

ຂຽນໂດຍ: ອົງການປົກຄອງບ້ານ ໂນນຮັ່ງ Nonhang Village Authority

ອົງການອາສາສະໝັກຍີ່ປຸ່ນ Japan International Volunteer Center (JVC)

ປຶ້ມຂໍ້ມູນບ້ານເລກທີ 03

ຂໍ້ມູນປະຫວັດຄວາມເປັນມາ, ຊີວິດການເປັນຢູ່, ຊັບພະຍາກອນທຳມະຊາດ ແລະ ແຜນທີ່

ປຶ້ມຂໍ້ມູນບ້ານ

ຂອງ

ບ້ານ ໂນນຮັ່ງ

ເມືອງ ອາດສະພັງທອງ ແຂວງສະຫວັນນະເຂດ

[ສະບັບທີ 1]

ວັນທີ 24 ເດືອນ ກຸມພາ ປີ 2020

ຂຽນໂດຍ: ອົງການປົກຄອງບ້ານ ໂນນຮັ່ງ ເມືອງ ອາດສະພັງທອງ ແຂວງ ສະຫວັນນະເຂດ

ອົງການອາສາສະໝັກຍີ່ປຸ່ນ Japan International Volunteer Center (JVC)

ຊື່ປຶ້ມ

ປຶ້ມຂໍ້ມູນບ້ານ ຂໍ້ມູນປະຫວັດຄວາມເປັນມາ, ຊີວິດການເປັນຢູ່, ທຳມະຊາດ ແລະ ແຜນທີ່ຂອງບ້ານ ໂນນຮັ່ງ ເມືອງ ອາດສະພັ່ງທອງ ແຂວງສະຫວັນນະເຂດ: [ສະບັບທີ1] (ເລກທີ 03 ຂອງຊຸດປຶ້ມຂໍ້ມູນ ບ້ານ)

ຂຽນໂດຍ

ອົງການປົກຄອງບ້ານ ໂນນຮັ່ງ ເມືອງ ອາດສະພັ່ງທອງ ແຂວງ ສະຫວັນນະເຂດ
ອົງການອາສາສະໝັກຍີ່ປຸ່ນ Japan International Volunteer Center (JVC)

ຜູ້ຂຽນທາງບ້ານ: ທ. ຄຳຜັນ ນາຍບ້ານ, ທ. ທອງໄຊ ຮອງນາຍບ້ານ, ພ້ອມດ້ວຍອົງການຈັດຕັ້ງບ້ານ

ຊີ້ນຳໂດຍ

ທ. ສີສະຫວັນ ອິນທະໂຄນ (Sisavanh INTHAKHONH), ທ. ເຄນອິຈິໂຣ ອິວາຕະ (Kenichiro IWATA) ແລະ ທ. ຣຽວເຮ ຢາມາມູໂຣະ (Ryohei YAMAMURO).

ຈັດພິມໂດຍ

ອົງການອາສາສະໝັກຍີ່ປຸ່ນ (ເຈວີຊີ,JVC), ຢູ່ ນະຄອນໄກສອນພົມວິຫານແຂວງສະຫວັນນະເຂດ. ໃນ ວັນທີ 24 ເດືອນ ກຸມພາ ປີ 2020.

ໝາຍເຫດ

ປຶ້ມຂໍ້ມູນບ້ານນີ້ໄດ້ຖືກຂຽນໃນສ່ວນໜຶ່ງຂອງ 'ໂຄງການຄ້ຳປະກັນສະບຽງອາຫານຕິດພັນກັບການເຮັດ ກະສິກຳ ແລະ ບໍລິຫານຊັບພະຍາກອນທຳມະຊາດ (ປີ 2018 ຫາ 2021)' ຂອງຄູ່ຮ່ວມງານພາກລັດ ແລະ ອົງການອາສາສະໝັກຍີ່ປຸ່ນ (ເຈວີຊີ, JVC).
ຮູບຖ່າຍໃນປຶ້ມນີ້ບໍ່ໄດ້ລະບຸຊື່ຜູ້ທີ່ຖ່າຍແຕ່ບັນດາຮູບແມ່ນຖືກຖ່າຍໂດຍອົງການອາສາສະໝັກຍີ່ປຸ່ນ.
ໄຟລພາບປຶ້ມນີ້ສາມາດດາວໂລດໄດ້ໃນແຫຼ່ງຂໍ້ມູນທາງດ້ານອິນເຕີເນັດໃນ
https://www.ngo-jvc.net/en/ourprojects/activities-in-laos/

ອົງການອາສາສະໝັກຍີ່ປຸ່ນ Japan International Volunteer Center (ເຈວີຊີ, JVC)

ອົງການເຈວີຊີແມ່ນອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຖືກຕັ້ງໃນປີ 1980. ເຈວີຊີ ມີຈຸດມຸ້ງຫມາຍໃນການສ້າງສັງຄົມໃຫ້ມີຄວາມໝັ້ນຄົງເພື່ອໃຫ້ຄົນກັບທຳມະຊາດຢູ່ຮ່ວມກັນ ແບບປອງດອງ.ອົງການເຈວີຊີໄດ້ເຮັດກິດຈະກຳຢູ່ສ. ປ. ປ. ລາວນັບແຕ່ປີ 1988, ໃນປະຈຸບັນນີ້ແຕ່ປີ2019 ໄດ້ຮັບໃບອນຸຍາດປະຕິບັດວຽກງານ (Operation Permit) No. 116 / AE.OI.3 ຈາກກະຂວງການ ຕ່າງປະເທດ. ເຈວີຊີໄດ້ເຮັດກິດຈະກຳບໍລິຫານຊັບພະຍາກອນທຳມະຊາດ ແລະ ກະສິກຳຢູ່ ແຂວງສະຫວັນນະ ເຂດ ຕັ້ງແຕ່ ປີ 2008.

ຕິດຕໍ່: ຫ້ອງການປະຈຳລາວຢູ່ແຂວງສະຫວັນນະເຂດ
ທີ່ຢູ່: ໜ່ວຍ 20 ເຮືອນເລກທີ 460 ບ້ານໂພນສະຫວັນ,ນະຄອນໄກສອນພົມວິຫານ,ແຂວງສະຫວັນນະ ເຂດ, ສ.ປ.ປ. ລາວ
ເບີໂທ: 041-252-263 / ເຟັກ: 041-252-480
ໄປສະນີ: P.O.Box 876 ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ, ສ.ປ.ປ. ລາວ
ອີເມລ: info@ngo-jvc.net
ແຫຼ່ງຂໍ້ມູນທາງດ້ານອິນເຕີເນັດ: https://www.ngo-jvc.net/en/

ສາລະບານ Table of Contents

ກ່ຽວກັບປຶ້ມຂໍ້ມູນບ້ານ About Village Data Book……..2

ກ່ຽວກັບບ້ານ ໂນນຮັ່ງ About Nonhang Village……..……5

I. ປະຫວັດຄວາມເປັນມາຂອງບ້ານໂນນຮັ່ງ History of Nonhang Village……7

II. ສະພາບທົ່ວໄປຂອງບ້ານ General Data on Village……..10

2.1 ທົ່ວໄປ General

2.2 ຊັບພະຍາກອນທຳມະຊາດ Natural Resources

2.3 ກະສິກຳ Agriculture

2.4 ຊີວະນາໆພັນ Biodiversity

2.5 ປະຕິທິນຂອງບ້ານ Calendar of Village

2.6 ຜົນຜະລິດຂອງຊາວບ້ານທີ່ຂາຍ Sold Produce by Villagers

III. ແຜນທີ່ ແລະ ຂໍ້ມູນຈຸດພິກັດ GPS Map and GPS Data……17

3.1 ແຜນທີ່ສະແດງທີ່ຕັ້ງຂອງບ້ານ ໂນນຮັ່ງ Location of Nonhang Village

3.2 ແຜນທີ່ເຂດຄຸ້ມຄອງຂອງບ້ານ ໂນນຮັ່ງ Boundary Map of Nonhang Village

3.3 ແຜນທີ່ເຂດຄຸ້ມຄອງຂອງບ້ານ ໂນນຮັ່ງ ແລະ ພາບຖ່າຍອາກາດ Boundary Map of Nonhang Village with Aerial Photograph

3.4 ແຜນທີ່ພູມສັນຖານຂອງບ້ານ ໂນນຮັ່ງ Topographical Map of Nonhang Village

3.5 ແຜນທີ່ສາຍນ້ຳຂອງບ້ານ ໂນນຮັ່ງ.. Hydrology System Map of Nonhang Village

3.6 ແຜນທີ່ການນຳໃຊ້ທີ່ດິນຂອງບ້ານ ໂນນຮັ່ງ Land Use Map of Nonhang Village

3.7 ແຜນທີ່ເຂດປຸກສ້າງຂອງບ້ານ ໂນນຮັ່ງ Residence Map of Nonhang Village

3.8 ແຫຼ່ງຂໍ້ມູນຈຸດພິກັດGPS ສຳລັບເຂດຄຸ້ມຄອງ, ປຸກສ້າງ, ສາທາລະນະ, ປ່າໄມ້ຊຸມຊົນ ແລະ ສະຖານທີ່ສຳຄັນຂອງບ້ານ ໂນນຮັ່ງ Source of GPS Data of Boundary, Land for Residence, Public Use, Community Forest and Landmarks of Nonhang Village

IV. ກິດຈະກຳຮ່ວມກັບເຈວີຊີActivitywithJVC……32

V. ເອກະສານຕິດຂັດAppendix……39

ກ່ຽວກັບປຶ້ມຂໍ້ມູນບ້ານ About Village Data Book

ກຸມພາ ປີ 2020

ຂຽນໂດຍ: ອົງການອາສາສະໝັກຍີ່ປຸ່ນ (ເຈວີຊີ ຫຼື JVC) (ຜູ້ຮັບຜິດຊອບ: ຣຽວເຮ ຢາມາມູໂຣາະ)

“ປຶ້ມຂໍ້ມູນບ້ານ” ນີ້ໄດ້ຂຽນໃນສ່ວນໜຶ່ງຂອງ “ໂຄງການຄໍ້າປະກັນສະບຽງອາຫານຕິດພັນກັບການເຮັດກະສິກຳ ແລະ ບໍລິຫານຊັບພະຍາກອນທຳມະຊາດ” ຫຼື “ໂຄງການສະໜັບສະໜູນການບໍລິຫານ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໂດຍປະຊາຊົນທີ່ອາໄສຢູ່ເຂດຊົນນະບົດແຂວງສະຫວັນນະເຂດ” (ປີ 2018 ຫາ 2021) ເຊິ່ງຂຽນໂດຍຊາວບ້ານໃນເຂດເມືອງ ອາດສະພັງທອງ ແລະ ເມືອງ ພີນ ແຂວງສະຫວັນນະເຂດ ແລະ ອົງການອາສາສະໝັກຍີ່ປຸ່ນ (ເຈວີຊີ, JVC).

ຢູ່ໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ຫຼາຍກ່ວາ 60 ເປີເຊັນຂອງປະຊາກອນອາໄສຢູ່ເຂດຊົນນະບົດ. ຊາວບ້ານໃນເຂດຊົນນະບົດປູກເຂົ້າເປັນອາຫານຫຼັກ ແລະ ຜັກຜັກໂດຍການເຮັດໄຮ່, ເຮັດນາ ເຊິ່ງຫາເກັບເຄື່ອງປ່າຂອງດົງເຊັ່ນ: ເຫັດ, ໜໍ່ໄມ້, ຜັກເປັນຢາ, ໄມ້ເພື່ອກໍ່ສ້າງ, ຝືນ, ເຄື່ອຍ້ອມສີ, ລ່າສັດປ່າເຊັ່ນ: ສັດເລືອຄານ , ໝູປ່າ ແລະ ຫາສັດນ້ຳເຊັ່ນ: ປາ, ກະປູ ແລະ ອື່ນໆ ຈາກປ່າ ຫຼື ສາຍນ້ຳອ້ອມຂ້າງບ້ານ. ເຊິ່ງໃຊ້ເປັນອາຫານປະຈຳວັນ,ພ້ອມທັງເປັນແຫຼ່ງລາຍຮັບສຳລັບການຊື້ເຂົ້າກິນ ຫຼື ສິ່ງທີ່ຈຳເປັນໃນຊີວິດປະຈຳວັນ. ການຮັບປະກັນການນຳໃຊ້ປ່າໄມ້ ແລະ ສາຍນ້ຳຂອງຊາວບ້ານເປັນພື້ນຖານດຳລົງຊີວິດແມ່ນສິ່ງທີ່ຈຳເປັນສຳລັບການພັດທະນາແບບຍືນຍົງຂອງສັງຄົມໃນລາວ.

ຢູ່ຫຼາຍບ້ານໃນເຂດຊົນນະບົດປະເທດລາວມີຊາວບ້ານຈຳນວນຫຼາຍທີ່ການເກັບກ່ຽວຜະລິດຕະພັນປ່າໄມ້ ແລະ ສັດນ້ຳເປັນວິທີການຕົ້ນຕໍສຳລັບໄດ້ເຂົ້າກິນໂດຍການແລກປ່ຽນ. ເພື່ອໃຫ້ປະຊາຊົນເຂດຊົນນະບົດດຳລົງຊີວິດຢ່າງໝັ້ນຄົງສິ່ງສຳຄັນແມ່ນການຄຸ້ມຄອງປ່າໄມ້ ແລະ ສາຍນ້ຳທີ່ໃກ້ຄຽງບ້ານເປັນຂອງຊາວຕົນເອງໂດຍການຮ່ວມກັບພາກສ່ວນກ່ຽວຂ້ອງ.

ເຖິງຢ່າງໃດກໍ່ຕາມເກືອບບໍ່ມີຂໍ້ມູນເປັນແຜນທີ່ ຫຼື ເອກະສານແຕ່ລະບ້ານເຊັ່ນ: ແຜນທີ່ບ້ານ ແລະ ຂໍ້ມູນກ່ຽວກັບພື້ນທີ່ກະສິກຳ, ປ່າໄມ້ ແລະ ສາຍນ້ຳທີ່ຊາວບ້ານໃຊ້ ແລະ ຜົນປະໂຫຍດທີ່ໄດ້ຮັບຈາກສິ່ງດັ່ງກ່າວ. ສະນັ້ນ “ປຶ້ມຂໍ້ມູນບ້ານ”ນີ້ ເພື່ອສະໜັບສະໜູນໃຫ້ຊາວບ້ານທີ່ຕ້ອງການມີຊີວິດການເປັນຢູ່ແບບຍືນຍົງໃນຂະນະທີ່ການຄຸ້ມຄອງ, ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດຂອງບ້ານ, ໄດ້ລວບລວມຂໍ້ມູນຂອງບ້ານກ່ຽວກັບສິ່ງແວດລ້ອມຕ່າງໆທີ່ໄດ້ເກັບຂໍ້ມູນມານຳຊາວບ້ານ. ຂໍ້ມູນເຫຼົ່ານີ້ຄາດວ່າຈະຊ່ວຍຫຼາຍດ້ານ, ຕົວຢ່າງ: ຊ່ວຍໃຫ້ຄົນພາຍນອກເຂົ້າໃຈສະຖານະການຂອງບ້ານຢ່າງຮູບປະທຳ ແລະ ໃຫ້ຊາວບ້ານເຂົ້າຮ່ວມການສົນທະນາຢ່າງເຕັມສ່ວນໃນໂຄງການພັດທະນາ. ເມື່ອຊາວບ້ານຄິດກ່ຽວກັບອະນາຄົດຂອງບ້ານຕົນເອງ, ຂໍ້ມູນເຫຼົ່ານີ້ຈະເປັນປະໂຫຍດສຳລັບການຮັບຮູ້ວ່າຍັງມີທຳມະຊາດແນວໃດ ແລະ ການພິຈາລະນາວິຖີຊີວິດຂອງຕົນ ເພື່ອການອະນຸລັກສິ່ງແວດລ້ອມ.

ພາກທີ 1 ເວົ້າເຖິງປະຫວັດຄວາມເປັນມາຂອງບ້ານ, ແບ່ງຕາມປະເພດຂໍ້ມູນ ເຊັ່ນ: ຫົວຂໍ້ທົ່ວໄປຄື ຈຳນວນຄົວເຮືອນ, ພື້ນຖານໂຄງລ່າງ, ກະສິກຳ, ປ່າໄມ້ ແລະ ຊີວະນາໆພັນ. ສະນັ້ນໄດ້ພະຍາຍາມໃຫ້ຄົນເຫັນວ່າວິຖີຊີວິດຂອງບ້ານໄດ້ມີການປ່ຽນແປງແນວໃດ, ໄດ້ຮັບຮູ້ການສູນເສຍຫຍັງໄປ, ເປັນແນວທາງໃນການຄິດເຖິງອະນາຄົດຂອງບ້ານ.

ພາກທີ 2 ເວົ້າເຖິງສະພາບທົ່ວໄປຂອງບ້ານໃນປະຈຸບັນ ເຊັ່ນ: ປະຊາກອນ, ກະສິກຳ, ຊັບພະ ຍາກອນທຳມະຊາດ, ປະຕິທິນຂອງບ້ານ ແລະ ອື່ນໆ. ໃນຂໍ້ມູນກ່ຽວກັບຊັບພະຍາກອນທຳມະຊາດມີຜະລິດຕະພັນປ່າໄມ້ ຫຼື ຊະນິດພັນປາທີ່ພົບເຫັນໃນບ້ານ. ສິ່ງເຫຼົ່ານີ້ສະແດງໃຫ້ເຫັນສ່ວນໜຶ່ງຂອງສະພາບແວດລ້ອມຂອງບ້ານໃນປະຈຸບັນ, ແລະ ສາມາດນຳໃຊ້ເປັນຕົວສົມທຽບເມື່ອຢາກຮູ້ວ່າການປ່ຽນແປງຂອງສະພາບແວດລ້ອມໂດຍການປຽບທຽບຂໍ້ມູນນີ້ໃນອະນາຄົດ.

ພາກທີ 3 ລວບລວມແຜນທີ່ຕ່າງໆ, ໃຫ້ຫຼາຍຄົນລວມທັງຊາວບ້ານເອງສາມາດເຂົ້າໃຈຮູບແບບ ແລະ ເນື້ອທີ່ຂອງບ້ານ, ແຜນທີ່ຫຼາຍດ້ານນີ້ຈະສາມາດນຳໃຊ້ ເຊັ່ນ: ແຜນທີ່ການນຳໃຊ້ທີ່ດິນລວມປ່າໄມ້ຊຸມຊົນ ຫຼື ວັງສະຫງວນ ເພື່ອອະນຸລັກຊັບພະຍາກອນປ່າໄມ້ ແລະ ປາທຳມະຊາດທີ່ຊາວບ້ານໃຊ້, ປ່າຊ້າ, ປ່າມະເຫສັກ, ແລະ

ແຜນທີ່ສາຍນ້ຳຂອງບ້ານຈະປະກອບສ່ວນໃນການພັດທະນາ ແລະ ການປົກປັກຮັກສາສິ່ງແວດລ້ອມທີ່ເປັນແບບຄຳນຶງເຖິງຊີວິດການເປັນຢູ່ ແລະ ສິດທິຂອງປະຊາຊົນຜູ້ທີ່ອາໄສຊັບພະຍາກອນທຳມະຊາດພ້ອມທັງການປ້ອງກັນໄພພິບັດ.

ພາກທີ 4 ບັນທຶກກິດຈະກຳຮ່ວມກັບກັບ JVC ແລະ ພາກທີ 5 ສັງລວມກິດລະບຽບຕ່າງໆກ່ຽວກັບປ່າໄມ້ຊຸມຊົນ ຫຼື ວັງສະຫງວນຂອງບ້ານເປັນເອກະສານຕິດຂັດ.

ປຶ້ມຂໍ້ມູນບ້ານເຫຼັ້ມນີ້ເປັນພຽງແຕ່ຂໍ້ມູນພື້ນຖານຂອງບ້ານເທົ່ານັ້ນ, ຫວັງວ່າຊາວບ້ານຈະເພີ່ມເຕີມຂໍ້ມູນ ແລະ ນຳໃຊ້ປຶ້ມນີ້ໃນການພັດທະນາບ້ານແບບຍືນຍົງໃນອະນາຄົດ.

About Village Data Book ກ່ຽວກັບປຶ້ມຂໍ້ມູນບ້ານ

February 2020

Written by: Japan International Volunteer Center (JVC) (Person in Charge: Ryohei YAMAMURO)

This ‘Village Data Book’ is written as a part of the Project for food security through agriculture and management of natural resources in Savannakhet province in Lao P.D.R. or Project for Assisting Management and Use of Natural Resources by Rural Residents in Savannakhet Province (2018-21), jointly by villagers who seek a sustainable lives in Atsaphangtong and Phin district, Savannakhet Province and JVC (Japan International Volunteer Center).

In the Lao People's Democratic Republic, more than 60% of the population lives in rural areas. Rural residents cultivate rice and vegetables as staple food in paddy fields or swidden around the village. They gather forest products such as mushrooms, bamboo shoots, medicinal herbs, building materials, firewood and dyes from the surrounding forest and terrestrial animals such as reptiles and wild boars and aquatic animals such as fish and crabs from the river nearby and use them as a source of income for purchasing staple rice and daily necessities as well as daily food. Supporting the forests and rivers they use and the lifestyles based on them is essential to the sustainable development of society in Laos.

In rural villages in Laos, the harvesting of forest products and aquatic animals is the main means to obtain rice by exchanging for some villagers who cannot feed themselves. In order for rural residents to maintain a stable life, it is important to manage forests and rivers around with independence and in cooperation with various stakeholders. .

However, there is little map or textual data on each village, for example the farmlands, forests and rivers that villagers usually use and the benefits they get. Therefore, in order to support villagers who want to live a sustainable life while managing and using the land and natural resources of own village, this “Village Data Book” organizes village data gathered with villagers about environment and so on. These data are expected, for example in development projects, to help outsiders accurately grasp the situation of the village and to help villagers fully participate in the discussion. When villagers think about the future of their villages, these data will also be useful for objectively grasping what kind of life they have had and what kind of nature remains and for environmental conservation.

Chapter 1 summarizes the history of the village, divided into general items such as the number of households and infrastructure, agriculture, forests and biodiversity. We devised so that readers think about the future of the village through they see how the life of village has changed and what the villagers gained and lost.

Chapter 2 provides a current overview of the village, including population, agriculture, natural resources and calendar of village on annual events. Of these, data on natural resources summarize forest products and fish species found in the village. These show a part of the current environment of the village and are intended to be used as a bio-indicator when trying to know changes in the environment by comparing these data in the future.

Chapter 3 contains various maps, allowing readers including the villagers themselves to grasp the shape and area of the village. For example, there are land use map of a village that may include community forest, fish conservation zone for conserving forest resources or natural aquatic animals used by villagers, grave forests or spirit forests and hydrology system map showing river flows and ponds nearby. These maps are expected to be used so that development and environmental protection projects pay careful attention to lives and rights of people who depend on natural resources, as well as for disaster prevention.

Chapter 4 records the activities with the JVC and Chapter 5 summarizes the regulation and so on of community forests or fish conservation zone of village that have been compiled so far as attachments.

The data that can be included in this booklet is only a very basic part of the village. We hope that villagers will further enrich and utilize the data for the sustainable development of the village in the future.

ກ່ຽວກັບບ້ານໂນນຮັ່ງ About Nonhang village

ຂຽນໂດຍ: ອົງການປົກຄອງບ້ານ ໂນນຮັ່ງ ແລະ ອົງການອາສາສະໝັກຍີ່ປຸ່ນ (ເຈວີຊີ ຫຼື JVC)

ປະຊາກອນ ແລະ ທີ່ຕັ້ງຂອງບ້ານ

ບ້ານໂນນຮັ່ງແມ່ນບ້ານທີ່ອີງໃສ່ການເຮັດກະສິກຳ, ນອນຢູ່ເມືອງອາດສະພັງທອງ, ແຂວງສະຫວັນນະເຂດ. ມີ 141 ຫຼັງຄາ, 159 ຄອບຄົວ, ປະຊາກອນ 1,024 ຄົນ (ຂໍ້ມູນປີ 2017). ບ້ານປະກອບມີ 2 ຄຸ້ມ (ໂນນຮັ່ງ ແລະ ໂພນຕາດ), ແຕ່ບ້ານຫາເສັ້ນທາງປູຢາງຫລວງແຫ່ງຊາດເລກ 9 (ທາງດ່ວນອາຊີ 16) 9 ກິໂລແມັດ, ສຳນັກງານປົກຄອງເມືອງຫ່າງຈາກບ້ານໄປທາງທິດຕາເວັນຕົກສຽງໃຕ້ 16 ກິໂລແມັດໄປຕາມເສັ້ນທາງຫລວງແຫ່ງຊາດເລກທີ 9, ຫາໃຈກາງແຂວງໄປທາງທິດຕາເວັນຕົກຂອງບ້ານ 84 ກິໂລແມັດ (ເບິ່ງຮູບ“ 3.1ແຜນທີ່ສະແດງທີ່ຕັ້ງຂອງບ້ານໂນນຮັ່ງ”). ການເດີນທາງດ້ວຍລົດຈາກບ້ານຫາສະຫວັນນະເຂດ (ນະຄອນໄກສອນພົມວິຫານ, ໃຈກາງຂອງແຂວງ), ໃຊ້ເວລາ 1.5 ຊົ່ວໂມງໃນລະດູແລ້ງ ແລະ 2 ຊົ່ວໂມງປາຍໃນລະດູຝົນ.

ຊົນເຜົ່າ ແລະ ຮີດຄອງປະເພນີ

ອີງຕາມການສຳພາດຊາວບ້ານ, ນາຍບ້ານໄດ້ຮູ້ວ່າຊາວບ້ານສ່ວນຫລາຍແມ່ນຊົນເຜົ່າມັ່ງກອງ (ບຣູ) ໃນການເວົ້າແມ່ນໃຊ້ພາສາບຣູເປັນພາສາພື້ນເມືອງທີ່ແຕກຕ່າງຈາກພາສາທາງການຂອງລາວ, ນັບຖືສາສະໜາຜີ (ຜີທຳມະຊາດ ແລະ ຜີບັນພະບຸລຸດ) ໃນຊຸມປີມໍ່ໆມານີ້ສາສະໜາພຸດໄດ້ແຜ່ຂະຫຍາຍ ແລະ ຫຼາຍຄົນໄດ້ເຄົາລົບບູຊາໃນໝູ່ບ້ານ. ງານບຸນປະເພນີໃນບ້ານມີ: ບຸນປີໃໝ່ລາວ (ບຸນຫົດນ້ຳ), ບຸນປີໃໝ່ຂອງຊົນເຜົ່າ (ບຸນເປີດປະຕູເລົ້າ), ບຸນຫໍ່ເຂົ້າປະດັບດິນ, ບຸນຫໍ່ເຂົ້າສະຫຼາກ ແລະ ບຸນປະຈຳປີຂອງບ້ານທຸກໆປີ.

ປະຫວັດຄວາມເປັນມາຂອງບ້ານ

ອີງຕາມການສຳພາດນາຍບ້ານ ທ. ບົວໂລດ (ຕອນນັ້ນ) ໄດ້ຮູ້ວ່າ: ບ້ານໂນນຮັ່ງຍ້າຍອອກມາຈາກບ້ານນາໄລ່ດົ່ງ (ຕິດຈອດຢູ່ທິດໃຕ້ ແລະ ຕາເວັນຕົກ) ເລີ່ມມາຕັ້ງເປັນບ້ານໃນປີ 1932, ສາຍເຫດຂອງການຍ້າຍຍ້ອນວ່າປະຊາຊົນມີນາຢູ່ຝາກເໜືອຫ້ວຍຜັ່ງໂຮຫຼາຍ (ບໍລິເວນໃກ້ຄຽງເຂດປູກສ້າງບ້ານປະຈຸບັນ) ແລະ ມີຄວາມຫຍຸ້ງຍາກໃນການຂ້າມຫ້ວຍໄປເຮັດນາໃນຊ່ວງລະດູຝົນ. ກ່ອນປີ 1975 ອາຊີບຫຼັກຂອງຊາວບ້ານແມ່ນເຮັດໄຮ່ຢ່າງດຽວ. ເມື່ອປະເທດຊາດໄດ້ຮັບການປົດປ່ອຍ, ແຕ່ວ່າສະພາບຂອງບ້ານສະໄໝນັ້ນຍັງບໍ່ມີຄວາມສະຫງົບ. ປີ 1993 ປະຊາຊົນບາງສ່ວນໃນບ້ານໂນນຮັ່ງກໍ່ໄດ້ຍ້າຍອອກໄປທາງທິດຕາເວັນອອກປະມານ 2 ກິໂລແມັດ ໄປຕັ້ງເຮືອນຢູ່ເປັນບ້ານໂພນຕາດ. ປີ 2003 ສັດປ່າຫຼາຍຊະນິດເຊັ່ນ: ໝູປ່າ, ຝານ ເລີ່ມຫຼຸດລົງ, ອາຊີບຂອງຊາວບ້ານເລີ່ມປ່ຽນຈາກເຮັດໄຮ່ຢ່າງດຽວມາເຮັດນາສຳຮອງ. ປີ 2007 ອາຊີບຂອງຊາວບ້ານໄດ້ປ່ຽນແປງໂດຍການເຮັດນາເປັນຫຼັກ. ປີ 2008 ໄດ້ສ້ອມແປງທາງເຂົ້າບ້ານ, ປີ 2011 ໄດ້ສຳຫຼວດມອບດິນ-ມອບປ່າ. ປີ 2012 ມີໄຟຟ້າໃຊ້ແລ້ວ, ເລີ່ມມີລົດໄຖນາ, ກະປູກເຂົ້າເລີ່ມນຳໃຊ້ປຸ໋ຍເຄມີ ແລະ ແນວພັນເຂົ້າປັບປຸງ. ປີ 2015 ບ້ານໂພນຕາດຕົ້ໂຮມມາເປັນບ້ານໂນນຮັ່ງ. ປີ 2017 ການປູກເຂົ້າໄດ້ເລີ່ມນຳໃຊ້ຢາຂ້າຫຍ້າ, ປີ 2018 ອົງການອາສາສະໝັກຍີ່ປຸ່ນໄດ້ສຳຫຼວດຂໍ້ມູນບ້ານ, ປີ 2019 ໄດ້ສຳຫຼວດຂອບເຂດຊາຍແດນບ້ານກັບບ້ານອ້ອມຂ້າງ. ປີ 2020 ໄດ້ເຮັດເອກະສານທາງການຂອງປ່າຊຸມຊົນດົ່ງຂວາງ.

ການນຳໃຊ້ທີ່ດິນ

ບ້ານໂນນຮັ່ງມີເນື້ອທີ່ດິນທັ້ງໝົດ 2.73 ກິໂລຕາແມັດ (2,731 ເຮັກຕາ).

ອີງໃສ່ການສຳພາດຈາກຊາວບ້ານຕອນປີ 2018 ໄດ້ຮູ້ວ່າ: ດິນເປົ່າວ່າງ 1.2 ກິໂລຕາແມັດ (120 ເຮັກຕາ), ດິນປູກສ້າງ 0.26 ກິໂລຕາແມັດ (2.6 ເຮັກຕາ), ດິນກະສິກຳ 2.52 ກິໂລຕາແມັດ (252,52 ເຮັກຕາ). ສ່ວນຫຼາຍຊາວບ້ານເຮັດນາ, ເຮັດສວນເຂົ້າຕາມແຄມນາເພື່ອປູກຜັດປະສົມປະສານກັບການປູກເຂົ້າ ເຊິ່ງປູກພໍແຕ່ໄດ້ແຕ່ກິນພາຍໃນຄອບຄົວ, ຜັດສ່ວນຫຼາຍທີ່ປູກເຊັ່ນ: ໝາກຖົ່ວ, ໝາກແຕ່ງ, ສາລີ ແລະ ອື່ນໆ. ສາຍນ້ຳພາຍໃນບ້ານມີສາຍຫ້ວຍກະແສນ, ຫ້ວຍຍຶດທີ່ເປັນສາຂາຂອງຫ້ວຍຜັ່ງໂຮ ແລະ ຫ້ວຍຜັ່ງໂຮທີ່ສາຂາຂອງເຊຈຳພອນ (ດັ່ງທີ່ຮູບ “3.6 ແຜນທີ່ການນຳໃຊ້ທີ່ດິນຂອງບ້ານໂນນຮັ່ງ”).

ວິຖີການດຳລົງຊີວິດ (ກະສິກຳ, ຮັບຈ້າງ, ຫາເຄື່ອງປ່າຂອງດົ່ງ, ສັດນ້ຳ ແລະ ສັດປ່າ)

ຊາວບ້ານສ່ວນໃຫຍ່ດຳລົງຊີວິດໂດຍການເຮັດກະສິກຳ ແລະ ການປູກເຂົ້າເພື່ອກິນເປັນອາຫານຫຼັກພາຍໃນຄອບຄົວ. ຈາກການສຳພາດຊາວບ້ານ, ຄະນະປົກຄອງບ້ານ ທຸກຄອບຄົວມີນາ ແຕ່ມີຈຳນວນບໍ່ຫຼາຍຄອບຄົວມີນາແຕ່ບໍ່ມີແຮງງານເຮັດ, ເມື່ອກ່ອນມີດິນສຳປະທານໃນການປູກອ້ອຍແຕ່ປະຈຸບັນແມ່ນຍ້າຍອອກແລ້ວ. ໃນລະດູ

ແລ້ງຊາວບ້ານບາງຄອບຄົວປູກໝາກແຕງ, ຜັກກາດ ຕາມແຄມສາຍຫ້ວຍພັງໂຮເພື່ອກິນພາຍໃນຄອບຄົວ. ປະຊາຊົນຫຼາຍຄອບຄົວຂາຍສັດ, ຄວາຍ, ງົວ, ໝູ ແລະ ສັດລ້ຽງອື່ນໆໃຫ້ພໍ່ຄ້າຄົນກາງ, ບາງຄອບຄົວໄດ້ໄປຮັບຈ້າງເຊັ່ນ: ການຕັດອ້ອຍໃນຊ່ວງທ້າຍລະດູການປູກເຂົ້າ. ປະມານ 20 ຄອບຄົວ ຫຼື 14% ຂອງຄອບຄົວທັງໝົດທີ່ມີເຂົ້າບໍ່ກຸ້ມກິນຕະຫຼອດປີ, ໃນເວລາຂາດເຂົ້າຊາວບ້ານຈະຫາເຄື່ອງປ່າຂອງດົງຈາກປ່າທຳມະຊາດ, ຫາປາຈາກສາຍນ້ຳທຳມະຊາດເພື່ອຂາຍຊື້ເຂົ້າ ຫຼື ໄປຊ່ວຍວຽກພີ່ນ້ອງ ແລະ ຂໍຍາດພີ່ນ້ອງເພື່ອໄດ້ເຂົ້າມາກິນໃນຄອບຄົວ.

ເພື່ອຊີວິດການເປັນຢູ່ຂອງຊາວບ້ານທີ່ກຸ້ມຕົນເອງ ແລະ ໝັ້ນຄົງ

ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດຄັ້ງທີ VIII ໄດ້ກ່າວວ່າການເຕີບໂຕຂອງເສດຖະກິດສ່ວນໃຫຍ່ຍັງອີງໃສ່ການຂຸດຄົ້ນແຫຼ່ງຊັບພະຍາກອນທຳມະຊາດ, ແຕ່ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃນຫຼາຍກໍລະນີຍັງມີລັກສະນະບໍ່ຍືນຍົງ, ມີການນຳໃຊ້ແບບຟຸມເຟືອຍ ແລະ ບໍ່ເປັນມິດຕໍ່ສິ່ງແວດລ້ອມ ເຊິ່ງບັນຫາດັ່ງກ່າວໄດ້ສ້າງຜົນຮ້າຍໃຫ້ແກ່ປະຊາຊົນເຮົາໃນຫລາຍທ້ອງຖິ່ນມາແລ້ວ[1]. ແລ້ວໄດ້ກ່າວວ່າຈະມີນະໂຍບາຍການຮັກສາ ແລະ ຄຸ້ມຄອງແຫລ່ງນ້ຳ, ການຄ້ຳປະກັນແຫຼ່ງອາຫານ ແລະ ນະໂຍບາຍສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງກ່ຽວກັບການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ຊີວະນານາພັນໃນການຮັກສາຄວາມສົມດຸນລະຫວ່າງການປົກປັກຮັກສາ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ[2].

ເຖິງວ່າບ້ານໂນນຮັງໄດ້ມີໂອກາດໃນການຫາລາຍຮັບ ໂດຍການຮັບຈ້າງແຕ່ລະວັນໃນການປູກອ້ອຍນັບແຕ່ປີ 2006 ທີ່ບໍລິສັດນ້ຳຕານສະຫວັນເຂົ້າມາ, ໂດຍທົ່ວໄປແລ້ວບໍລິສັດເລີ່ມໄດ້ຫຼຸດການປູກລົງ ຫຼື ລາຄາຊື້ຈາກຊາວບ້ານກໍ່ຖືກລົງເລື້ອຍໆ, ພ້ອມກັນນັ້ນການນຳໃຊ້ປຸ໋ຍເຄມີ ແລະ ຢາຂ້າແມງໄມ້ອາດຈະສົ່ງຜົນກະທົບຕໍ່ສຸຂະພາບຂອງສັດນ້ຳ, ສັດປີກ, ສັດລ້ຽງ ແລະ ຄົນ, ເຮັດໃຫ້ຄວາມໝັ້ນຂອງເຄື່ອງປ່າຂອງດົງ ແລະ ອາຫານທຳມະຊາດຫຼຸດລົງ. ເມື່ອກ່ອນເຄີຍມີຄວາມອຸດົມສົມບູນມີ: ໝູປ່າ, ໝາໄນ, ເສືອ ແລະ ອື່ນໆ ແຕ່ວ່າປ່າໄມ້ລວມຂອງບ້ານເກືອບທັງ ໝົດນອກຈາກດົງຂວາງ (ປ່າໄມ້ຊຸມຊົນ), ປ່າຊ້າ ແລະ ເລັກໜ້ອຍອີກພາຍໃນບ້ານແມ່ນໄດ້ສູນຫາຍໄປ, ເມື່ອກ່ອນຫຼາຍໆພື້ນທີ່ຂອງແມ່ນ້ຳບໍ່ຂາດນ້ຳ ແຕ່ຊຸມປີມໍ່ໆມານີ້ນ້ຳຕາມແມ່ນ້ຳໄດ້ບີກແຫ້ງໃນລະດູແລ້ງ. ຊາວບ້ານບາງຄົນໄດ້ອອກໄປເຮັດຫາວຽກເຮັດຢູ່ຕ່າງເມືອງ ຫຼື ຕ່າງປະເທດເປັນເວລາຫຼາຍປີ.

ເຖິງຢ່າງໃດກໍ່ຕາມຊາວບ້ານສ່ວນຫຼາຍຍັງດຳລົງຊີວິດໂດຍການເຮັດກະສິກຳແບບລ້ຽງຕົນເອງ, ຊາວບ້ານຫຼາຍຄົນຍັງອາໄສການຫາເຄື່ອງປ່າຂອງດົງຈາກປ່າ ແລະ ຫາສັດນ້ຳຈາກແຫຼ່ງນ້ຳທຳມະຊາດຕ່າງໆ ເພື່ອເປັນອາຫານ ຫຼື ຂາຍ, ແລະ ບາງຄອບຄົວໄດ້ເຂົ້າກິນໂດຍການຂາຍ ຫຼື ແລກປ່ຽນເຄື່ອງປ່າຂອງດົງ ແລະ ອື່ນໆເພື່ອໄດ້ເຂົ້າກິນໃນເວລາຂາດເຂົ້າ. ເພື່ອບໍ່ໃຫ້ວິຖີຊີວິດຂອງຊາວບ້ານຖືກທຳລາຍ, ໂດຍການສູນເສຍທີ່ດິນກະສິກຳ ແລະ ຊັບພະຍາກອນທຳມະຊາດ, ຊາວບ້ານຕ້ອງມີການຄຸ້ມຄອງນຳໃຊ້ຢ່າງເປັນລະບົບໂດຍຕົນເອງ ແລະ ດຳເນີນການປູກຝັງທີ່ບໍ່ມີຜົນກະທົບຕໍ່ດິນກະສິກຳ, ສາຍນ້ຳ ແລະ ອື່ນໆ. ນີ້ແມ່ນສິ່ງທີ່ຈຳເປັນສຳລັບວິຖີຊີວິດຂອງຊາວບ້ານໃນການດຳລົງຊີວິດແບບກຸ້ມຕົນເອງ ແລະ ມີຄວາມໝັ້ນຄົງ.

[1] ກະຊວງແຜນການ ແລະ ການລົງທຶນ, 2016, *ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII(2016-2020):ຜ່ານກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ VIII ຄັ້ງວັ ທີ 20-23 ເມສາ 2016 ທີ່ສະພາແຫ່ງຊາດ*, ນະຄອນຫຼວງວຽງຈັນ: ໜ້າທີ64.

[2] ກະຊວງແຜນການ ແລະ ການລົງທຶນ, 2016: ໜ້າທີ 125.

I. ປະຫວັດຄວາມເປັນມາຂອງບ້ານ ໂນນຮັ່ງ History of Nonhang village

ສຳຫຼວດ ວັນທີ 6 ເດືອນ 9 ປີ 2018 ຫາ ວັນທີ 7 ເດືອນ 12 ປີ 2019.

ຜູ້ສະໜອງຂໍ້ມູນ: ທ ຄຳພັນ(ນາຍບ້ານ) ທ ທອງໄຊ (ຮອງນາຍບ້ານ) ແລະ ຊາວບ້ານຄົນອື່ນໆ.

ປີ	ນາຍບ້ານ	ຄົວເຮືອນ, ການເມືອງ, ພື້ນຖານໂຄງລ່າງ, ເສດຖະກິດ, ພັດທະນາຊີວິດການເປັນຢູ່	ກະສິກຳ	ປ່າໄມ້	ຊົ່ວນາໆພັນ
1965-1970	**ທ. ຊົນ**	ໄດ້ມີການສ້າງຫໍແຈກຫຼັງເກົ່າ (ປະຈຸບັນມ້າງແລ້ວ), ໄດ້ສ້າງກຸດຕີຫຼັງເກົ່າ, ການເຮັດວຽກຂອງນາຍບ້ານຕ້ອງມີຄວາມໜັກແໜ້ນ, ໃຊ້ກະລໍໃນການຕີເອີ້ນຊາວບ້ານມາປະຊຸມ, ແມ່ຍິງແມ່ນບໍ່ມີສິດເທົ່າທຽມກັບຜູ້ຊາຍ, ເວລາເຈັບເປັນແມ່ນບໍ່ມີແພດໝໍ, ກິນແຕ່ຢາພື້ນເມືອງ, ການເຢົາ ແລະ ໝໍຜີ, ການເດີນທາງແມ່ນຍ່າງໄປຕາມປ່າດົງ.	ເຮັດໄຮ່ເປັນຫຼັກ	ອຸດົມສົມບູນ	ສັດປ່າມີຫຼາຍ: ເສືອ, ໝູປ່າ, ກະຮອກ, ກະແຕ, ຝານ, ກວາງ ແລະ ກະຕ່າຍ. ການຫາອາຫານແມ່ນອາຫານຈາກປ່າ ແລະ ລ້ຽງສັດ
1970-1976	**ທ. ຈອດ**	ເປັນປີທີ່ມີການທ້ອມໂຮມປະຊາຊົນ “ລາວລອມລາວ” ໃນປີ 1975 ມີການລະດົມງົວ, ຄວາຍເພື່ອໄປລ້ຽງທະຫານສັດຕູ, ຖ້າໃຜຖືກເປັນທະຫານຕ້ອງໄດ້ໄປຖ້າບໍ່ໄປແມ່ນຕ້ອງໄດ້ຈ້າງຄົນອື່ນດ້ວຍງົວຄວາຍເພື່ອໄປແທນ, ການເດີນທາງແມ່ນຍ່າງ, ທັງໝົດບ້ານມີ 50 ຫຼັງຄາ.			
1976-1981	**ທ. ແຕ**	ປະເທດຊາດໄດ້ຮັບການປົດປ່ອຍ ແຕ່ວ່າສະພາບບ້ານຍັງບໍ່ທັນມີຄວາມສະຫງົບຍ້ອນຍັງມີກຸ່ມຄົນບໍ່ດີຫຼາຍ, ບ້ານຂຶ້ນຢູ່ກັບຕາແສງດົງກື່ມ.			
1981-1985	**ທ. ວາ**	ສະພາບບ້ານຍັງມີຄວາມຫຍຸ້ງຍາກ, ບໍ່ມີຄວາມສະຫງົບ, ນອນນາບໍ່ໄດ້, ງົວ, ຄວາຍບໍ່ເຂົ້າປ່າດົງຍ້ອນມີເຫຼືອກຫຼາຍ, ການເຈັບເປັນແມ່ນປິ່ນປົວດ້ວຍການເຢົາ ແລະ ຢາພື້ນເມືອງ.			
1985-1989	**ທ. ເອນ**	ໃນຊ່ວງນີ້ກຸ່ມຄົນບໍ່ດີໃນປ່າດົງຍັງມີຫຼາຍ, ບ້ານຍັງບໍ່ທັນມີຄວາມສະຫງົບ, ໄປນາ, ໄປໄຮ່ບໍ່ໄດ້ຖືເຂົ້າ, ເພາະວ່າຢ້ານເອົາໄປລ້ຽງສັດຕູ, ການເດີນທາງໄປຕາມປ່າຕາມດົງພົບຄວາມຫຍຸ້ງຍາກ, ເວລາກາງຄືນໃຕ້ໄຟດ້ວຍກະບອງ, ເຮືອນຫຼັງນ້ອຍແອ້ມດ້ວຍຝາໃບຕອງກຸງ, ການພັດທະນາມີໜ້ອຍ, ບໍ່ມີລົດ, ດຳລົງຊີວິດໂດຍອາໄສທຳມະຊາດ, ເວລາເຈັບເປັນແມ່ນໃຊ້ຢາພື້ນເມືອງ, ໃຊ້ໝໍເຢົາ ແລະ ໝໍຜີ.			

1989-2003	**ທ. ບົວໂລດ** 	ໄດ້ສ້າງໂຮງຮຽນ 1 ຫຼັງໃນການສ້າງແມ່ນໄດ້ລະດົມທຶນຈາກຊາວບ້ານ 35,000 ກີບ/ຫຼັງຄາ. ປີ 1993 ປະຊາ ຊົນບາງສ່ວນໃນບ້ານໂນນຮັງກໍ່ໄດ້ຍ້າຍອອກໄປທາງທິດຕາເວັນອອກປະມານ 2 ກິໂລແມັດ ໄປຕັ້ງເຮືອນຢູ່ເປັນບ້ານໂພນຕາດ. ປີ 2002 ເລີ່ມມີຈັກປັ່ນເຂົ້າ, ການເດີນທາງລະຫວ່າງບ້ານຫາເມືອງແມ່ນໄປຕາມດົງຕາມປ່າ ແມ່ນໃຊ້ການຍ່າງມີຄວາມລຳບາກໃຊ້ເວລາປະມານ 3-4 ວັນ, ການເຈັບເປັນບາງຄອບຄົວໄປໂຮງໝໍເມືອງ ແລະ ບາງຄອບຄົວແມ່ນເຢົາພາຍໃນບ້ານ.	ເຮັດໄຮ່ເປັນອາຊີບຫຼັກ, ເຮັດນາສຳຮອງ,		
2003-2005	**ທ. ບຸນຊຸ**	ໄດ້ເສັ້ນທາງເຂົ້າບ້ານ, ໄດ້ສ້າງກຸດຕິໃນວັດໜຶ່ງຫຼັງ, ປະຊາຊົນມີຄວາມສະບາຍຍ້ອນມີຄວາມສະຫງົບ, ບ້ານຂຶ້ນກັບເຂດຕາແສງດົງກຶມ			ໃນຊ່ວງນີ້ຍັງບໍ່ມີພໍ່ຄ້າເຂົ້າມາຊື້ສັດປ່າເທື່ອ.
2005-2007	**ທ. ບົວໂລດ**	ຫຼັງຄາເຮືອນທັງໝົດປະມານ 80 ຫຼັງຄາ, ໄດ້ສ້າງຫໍແຈກ 1 ຫຼັງ, ບໍ່ທັນມີການຊື້ຂາຍສັດລ້ຽງ, ມີແຕ່ແລກປ່ຽນກັນກິນໃນບ້ານ, ບ້ານຍັງບໍ່ມີໄຟຟ້າ, ຕ້ອງໄດ້ໄຕ້ກະບອງໃນເວລາກາງຄືນ.	ເຮັດນາຫຼາຍກວ່າເຮັດໄຮ່ ການເຮັດນາຍັງໃຊ້ດ້ວຍຄວາຍ	ປ່າໄມ້ຍັງມີຫຼາຍ	ສັດປ່າທີ່ຍັງພົບເຫັນ: ຝານ, ໝູປ່າ, ນົກ, ເຫງັນ, ແລນ, ກະຮອກ, ກະແຕ ແລະ ອື່ນໆ.
2007-2009	**ທ. ກ່າຍ** 	ມີຫຼາຍຄົນໄປເຮັດວຽກຢູ່ຕ່າງແຂວງ ແລະ ຕ່າງປະເທດ, ບາງຄົນທີ່ບໍ່ມີເອກະສານຜ່ານແດນ, ໄດ້ສ້າງຫຼັກຕ້າຍວັດ, ສ້າງຂົວຂ້າມຫ້ວຍສະແລນໃນປີ 2008, ຫຼາຍຄອບຄົວເຂົ້າບໍ່ກຸ້ມກິນແຕ່ວ່າບໍ່ໄດ້ໄປຂໍນຳບ້ານອື່ນມີແຕ່ຢືມຈາກພີ່ນ້ອງກິນ ແລະ ບາງຄອບຄົວກໍ່ໄດ້ກິນກອຍແທນ, ໃນຊ່ວງຂາດເຂົ້າຄວາຍໂຕ 1 ສາມາດປ່ຽນເຂົ້າໄດ້ສອງກະສອບ, ການເດີນທາງຈາກບ້ານສູ່ບ້ານແມ່ນຍ່າງ.			
2009-2012	**ທ. ທອງດີ**	ບາງຄອບຄົວມີເຮືອນມຸງສັງກະສີ, ມຸງແປ້ນ, ຜາໄມ້ເຮ້ຍ ຫຼື ໃບຕອງກຸງ, ເຮັດສາດເອງ, ຕ່ຳສີ້ນນຸ່ງເອງ, ສີ້ນຝ້າຍ, ຍ້ອມນ້ຳຄາມ, ເສື້ອດຳ, ເຮືອນຫຼັງນ້ອຍ, ມີລົດໄຖນາ 7 ຄັນ, 7 ຫຼັງຄາ (ທ.ທອງດີ, ເລັ່ງ, ອາຈຽງ, ບົວໂລດ, ຄຳໄຂ, ຕິວ, ຄຳກໍ, ເລີ່ມໄດ້ທາງແດງ, ໄດ້ຂົວອູ່ (ສ້າງຂົວອູ່ໂດຍຄົນປະເທດອິດສະຫຼະແອນ).			
2012-2015	**ທ. ບົວໂລດ**	ໄດ້ສ້າງໂຮງຮຽນປະຖົມສົມບູນ, ໄດ້ສ້າງເສັ້ນທາງແດງໃນປີ ເຮືອນມີການມຸງສັງກະສີ ແລະ ກະເບື້ອງ, ໃຊ້ນ້ຳບາດານທີ່ມີໃດປ້ຳ, ສ້າງກຸຕິ ແລະ ຫ້ອງນ້ຳໃຫ້ວັດ, ສ້ອມແປງທາງເຂົ້າບ້ານໃນທຸກໆປີ. ເພງໃນການມ່ວນຊື່ນ, ມີການຕ່ຳຫູກເຮັດເສື່ອ, ຜ້າຫົ່ມ, ໝ	ການປູກເຂົ້າແນວພັນປັບປຸງ ເຊັ່ນ: ແນວພັນເຊປັ້ງໄຟ,	ປ່າໄມ້ຫຼຸດລົງຫຼາຍເຖິງປີ 2018	ສັດປ່າແມ່ນຫາຍາກ, ເຄື່ອງປ່າຂອງດົງແມ່ນຍັງມີເຫັດ, ຂີ້ຊີ ແລະ ປາ,

ແລະ 2015-2018		ອນ ແລະ ສາດຜື ເພື່ອໄວ້ໃຊ້ເອງ, ໄດ້ໄຟຟ້າໃຊ້ແລ້ວ, ການເຈັບເປັນບາງຄອບຄົວຍັງໃຊ້ຢາພື້ນເມືອງໃນການຮັກສາ ແຕ່ບາງຄອບຄົວກະໄປໂຮງໝໍເມືອງ. ປີ 2015 ໄດ້ເຕົ້າໂຮມບ້ານນ້ອຍເປັນບ້ານໃຫຍ່ ກໍ່ຄືເຕົ້າໂຮມບ້ານໂພນຕາດ ເຂົ້າເປັນບ້ານໂນນຮັ່ງ. ການແຕ່ງງານມີການໃຊ້ດີນຕີມີ. ປີ 2017 ມີ 141 ຫຼັງຄາ, 159 ຄອບຄົວ, ປະຊາກອນ 1,024 ຄົນ,	ເຂົ້າຫອມນວນ, ເຂົ້າກໍຂໍ 8 , ກໍຂໍ 6 ມີການໃສ່ປຸ໋ຍເຄມີ,		ກີບ, ຂຽດ ແລະ ກະປູນາ
2018-	**ທ. ຄຳພັນ** 	ທັງໝົດບ້ານມີ 168 ຫຼັງຄາ (ໂນນຮັ່ງ 105 ຫຼັງຄາ, ໂພນຕາດ 63 ຫຼັງຄາ), 229 ຄອບຄົວ, ການຂາຍສັດພາຍໃນບ້ານແມ່ນມີລາຄາເພີ່ມຂຶ້ນ ແບ້ແມ່ 35,000 ກີບ/ກິໂລ, ແບ້ຜູ້ 50,000 ກີບ/ກິໂລ, ໝູນ້ອຍ 200,000-300,000 ກີບ/ໂຕ, ຂີ້ຊີ 12,000 ກີບ/ກິໂລ	ການປູກເຂົ້າທຸກຄອບຄົວນຳໃຊ້ລົດໄຖ, ເກືອບທຸກຄອບຄົວນຳໃຊ້ປຸ໋ຍເຄມີໃນການປູກເຂົ້າ ແລະ ນຳໃຊ້ແນວພັນເຂົ້າປັບປຸງ	ປີ 2020 ໄດ້ເຮັດເອກະສານທາງການຂອງປ່າຊຸມຊົນດົງຂວາງ.	ສັດປ່າທີ່ຍັງພົບເຫັນ ກະຮອກ, ກະແຕ, ງູ, ໝູທ້ອງຂາວ, ນົກ. ຍັງສາມາດຫາຂີ້ຊີ. ມາເຖິງເວລານີ້: ໝູ່ປ່າ, ຝານ ບໍ່ມີແລ້ວ.

II. ສະພາບທົ່ວໄປຂອງບ້ານ General Data on Village

ສຳຫຼວດ ວັນທີ 06 ເດືອນ 09 ປີ 2018

ຜູ້ທີ່ສະໜອງຂໍ້ມູນ: ທ ຄຳພັນ ຮອງນາຍບ້ານ ແລະ ທ ທອງວັນ ອາສາສະໝັກສາທາລະນະສຸກບ້ານ

2.1 ທົ່ວໄປ General

- **ທີ່ຢູ່**

  ບ້ານ ໂນນຮັງ (ບ້ານ ໂນນຮັງ+ບ້ານ ໂພນຕາດ) ຂຶ້ນກຸ່ມບ້ານ ເລກທີ 2 ຊື່ກຸ່ມ ນາໄລ່ ເມືອງ ອາດສະພັງທອງ ແຂວງ ສະຫວັນນະເຂດ

- **ອົງປະກອບການຈັດຕັ້ງບ້ານ(ບ້ານນ້ອຍ ຫຼື ໜ່ວຍ)**

  ບ້ານ ໂພນຕາດ ແລະ ບ້ານ ໂນນຮັງ 2 ບ້ານ ລວມກັນ ເປັນບ້ານດຽວເຊິ່ງເອີ້ນວ່າບ້ານ ໂນນຮັງ

- **ຈຳນວນປະຊາກອນ ແລະ ຄົວເຮືອນ**

  ປີ 2017 ມີ 141 ຫຼັງຄາ, 159 ຄອບຄົວ, ປະຊາກອນ 1,024 ຄົນ.

- **ໄລຍະທາງຫາ (ສະຫວັນນະເຂດ, ຫ້ອງການປົກຄອງເມືອງ, ຕະຫຼາດ, ບ່ອນຮັບຈ້າງໃກ້ສຸດ ແລະ ອື່ນໆ)**

  ຕະຫຼາດທີ່ໃກ້ທີ່ສຸດຕະຫຼາດດົງເຫັນ ປະມານ 16 ກິໂລແມັດ, ໂຮງງານທີ່ຊາວບ້ານເຄີຍໄປເຮັດວຽກແມ່ນໂຮງງານນ້ຳຕານ ສະຫວັນປະມານ 8 ກິໂລແມັດ, ຈາກຫ້ອງການປົກຄອງເມືອງຫາສະຫວັນນະເຂດໃຈກາງຂອງແຂວງ 84 ກິໂລແມັດ.

- **ຊົນເຜົ່າ ແລະ ສາສະນາ**

  ຊົນເຜົ່າມັງກອງ (ບຣູ), ນັບຖືຜີ ແລະ ສາສະນາພຸດ.

- **ອົງການຈັດຕັ້ງບ້ານ**

  ນາຍບ້ານ: ທ. ຄຳພັນ ເບີໂທ 020 91975164, ທ ຄຳບົງ ຮອງນາຍບ້ານ

- **ໂຄງການຊ່ວຍເຫຼືອຜ່ານມາ**

  ໂຄງການທີ່ເຄີຍເຂົ້າມາຊ່ວຍເຫຼືອມີໂຄງການ ຢູເອັດເອດ ເຮັດກ່ຽວກັບສຸຂະອະນາໄມ, ໂພສະນາການ ເຂົ້າມາໃນປີ 2018 ໂຄງການເອື້ອຜັນເດັກຊ່ວຍເຫຼືອກ່ຽວກັບການສຶກສາໂຮງຮຽນ 1 ຫຼັງ, ເຂົ້າມາໃນຊ່ວງປີ 2017-2018 ແລະ ອົງການສຸພານິມິດຊ່ວຍເຫຼືອກ່ຽວກັບນ້ຳບາດານ.

- **ອາຊີບຫຼັກ**

  ອາຊີບຫຼັກແມ່ນເຮັດນາ, ສຳຮອງລ້ຽງສັດ ແລະ ປູກຜືດປູກຜືດ.

- **ເນື້ອທີ່**

  ເນື້ອທີ່ທັງໝົດປະມານ 27.3 ກິໂລຕາແມັດ (2,731 ເຮັກຕາ).

  ດິນເປົ່າວ່າງ 1.2 ກິໂລຕາແມັດ (120 ເຮັກຕາ), ດິນປຸກສ້າງ 0.3 ກິໂລຕາແມັດ (3 ເຮັກຕາ), ດິນກະສິກຳ 2.5 ກິໂລຕາ ແມັດ (252 ເຮັກຕາ) ແລະ ສ່ວນທີ່ແມ່ນດິນອື່ນໆ.

- **ແມ່ນ້ຳ**

  ຫ້ວຍກະແສນ ແລະ ຫ້ວຍຍຶດເປັນສາຂາຂອງຫ້ວຍຝັງໂຮ, ຫ້ວຍຝັງໂຮເປັນສາຂາຂອງເຊຈຳພອນ.

- **ແຫຼ່ງລາຍຮັບ**

  ຈາກການຂາຍເຂົ້າ, ຂາຍສັດລ້ຽງ, ເຄື່ອງປ່າຂອງດົງອື່ນໆ, ຮັບຈ້າງໃນສວນອ້ອຍ ແລະ ບາງຄົນໄປເຮັດວຽກຕ່າງເມືອງ ຫຼື ຕ່າງປະເທດ.

- **ບ້ານຕິດກັບ ຫຼື ຊາຍແດນບ້ານ**

  ທິດເໜືອ: ຕິດກັບບ້ານສີງສະຫວ່າງ

  ທິດໃຕ້: ຕິດກັບບ້ານນາໄລ່ດົງ

  ທິດຕາເວັນອອກ: ຕິດດກັບບ້ານສີງສະຫວ່າງ ແລະ ໂຄກສະຫວ່າງ

  ທິດຕາເວັນຕົກ: ຕິດກັບບ້ານດົງຫວາຍດິນ ແລະ ບ້ານນາໄລ່ດົງ

2.2 ຊັບພະຍາກອນທຳມະຊາດ Natural Resources

- **ເຄື່ອງປ່າຂອງດົງທີ່ປະຊາຊົນນຳໃຊ້**

  ເຄື່ອງປ່າຂອງດົງທີ່ຊາວບ້ານສາມາດຫາເປັນອາຫານໄດ້ມີດັ່ງນີ້: ຈີ່ຫຼໍ່, ກົບ, ຂຽດ, ຫວາຍ ແລະ ໜໍ່ໄມ້ ຊ່ວງເວລາທີ່ສາມາດ ຫາຫຼາຍໄດ້ແມ່ນໃນຊ່ວງເດືອນ 4-5 ແລະ ເດືອນ 9-11, ຜ່ານມາທາງບ້ານແມ່ນບໍ່ມີກົດລະບຽບໃນການຫາສະເພາະໃນດົນ ສ່ວນຕົວ, ແຕ່ວ່າມີບາງຄອບຄົວກໍ່ບໍ່ອະນຸຍາດໃຫ້ຫາໃນຂອບເຂດດິນນາຂອງຕົນເອງ.

- **ສັດປ່າທີ່ປະຊາຊົນນຳໃຊ້**

  ສັດປ່າບາງຊະນິດທີ່ຍັງພົບເຫັນແຕ່ມີໜ້ອຍເຊັ່ນ: ໄກ່ປ່າ, ໝາຈອກ. ສ່ວນຫຼາຍຈະພົບເຫັນໃນລະດູແລ້ງ ແຕ່ຍັງມີສັດປ່າຈຳ

ນວນໜຶ່ງທີ່ຊາວບ້ານເຫັນ ແລະ ຈັບໄດ້ເລື້ອຍໆເຊັ່ນ: ໜູ, ງູ, ແລນ, ກະຮອກ ແລະ ກະແຕ.

◆ **<u>ສັດນ້ຳທີ່ປະຊາຊົນນຳໃຊ້</u>**

ຍັງມີປາດຸກ, ປາຄໍ່, ປາຂາວ, ປາຂາວມັນ ສ່ວນຫຼາຍຈະພົບເຫັນໃນຊ່ວງເດືອນ 9-12 ແຕ່ວ່າໃນບ້ານຍັງບໍ່ທັນມີກົດລະບຽບໃນການຫາປາ, ນອກຈາກນັ້ນຊາວບ້ານບາງຄອບຄົວແມ່ນລ້ຽງປາເຊັ່ນ: ປານິນ, ປາໃນ ແລະ ປາເກັດແລບ.

2.3 ຊີວະນາໆພັນ Biodiversity

◆ **<u>ເຄື່ອງປ່າຂອງດົງ (ຊະນິດພັນທີ້ເຫັນປະຈຸບັນ ແລະ ເຫັນໃນອະດີດແຕ່ບໍ່ເຫັນປະຈຸບັນ)</u>**

ລຳດັບ	ຊະນິດ	ຈຸດປະສົງ				ປະເມີນຜົນຜະລິດທີ່ເກັບກູ້	
		ຂາຍ	ຊົມໃຊ້	ອາຫານ	ຢາປົວ ພະຍາດ	ຈ/ນ ຄ/ຄ	ມູນຄ່າ (ກີບ)
1	ໜໍ່ໄມ້	✓	✓	✓		ໜົດບ້ານ	20,000
2	ຜັກຫວານ		✓	✓		ໜົດບ້ານ	30,000
3	ຫວາຍ	✓	✓	✓		ໜົດບ້ານ	5,000
4	ໜໍ່ສານ			✓		ໜົດບ້ານ	5,000
5	ຂີ້ຊີ	✓			✓	ໜົດບ້ານ	80,000
6	ຜັກຂະ			✓		ໜົດບ້ານ	10,000
7	ຜັກກະເດົາ			✓	✓	ໜົດບ້ານ	20,000
8	ຜັກດາງຂົມ			✓		ໜົດບ້ານ	2,000
9	ຜັກຕົ້ວ			✓		ໜົດບ້ານ	1,000
10	ຜັກສະເໜັກ			✓		ໜົດບ້ານ	3,000
11	ຜັກກະໂດນ			✓		ໜົດບ້ານ	1,000

◆ **<u>ສັດປ່າ (ຊະນິດພັນທີ້ເຫັນປະຈຸບັນ ແລະ ເຫັນໃນອະດີດແຕ່ບໍ່ເຫັນປະຈຸບັນ)</u>**

ລ/ດ	ຊື່ສັດປ່າ	ປ່າໄມ້ທີ່ອາໄສຢູ່	ສະຖານະພາບ	% ການ ປ່ຽນແປງ ພາຍ ໃນ 5 ປີ	ສາເຫດການ ປ່ຽນແປງ
1	ກະຮອກ	ປ່າໂຄກ	ຫຼຸດ	50%	ລ່າ
2	ກະແຕ	ປ່າເຫຼົ່າ	ຫຼຸດ	50%	ລ່າ
3	ກະຕ່າຍ	ປ່າໂຄກ	ຫຼຸດ	70%	ທຳລາຍປ່າ
4	ກະເລັນ	ປ່າເຫຼົ່າ	ຫຼຸດ	20%	ບໍ່ມີອາຫານ
5	ນົກປົດປະລິ່ວ	ປ່າເຫຼົ່າ	ຫຼຸດ	10%	ລ່າ
6	ໄກ່ປ່າ	ປ່າເຫຼົ່າ	ຫຼຸດ	30%	ການລ່າ
7	ນົກເຂົາ	ປ່າເຫຼົ່າ	ຫຼຸດ	30%	ການລ່າ
8	ນົກເປົາ	ປ່າໂຄກ	ຫຼຸດ	50%	ການລ່າ
9	ໜູຫວາຍ	ປ່າໂຄກ	ຫຼຸດ	40%	ການລ່າ
10	ອົ້ນ	ປ່າໂຄກ	ຫຼຸດ	80%	ການລ່າ
11	ນົກກົດ	ປ່າເຫຼົ່າ	ຫຼຸດ	50%	ການລ່າ
12	ເປັດປ່າ	ປ່າເຫຼົ່າ	ຫຼຸດ	20%	ການລ່າ

◆ ສັດນ້ຳ (ຊະນິດພັນທີ່ເຫັນປະຈຸບັນ ແລະ ເຫັນໃນອະດີດແຕ່ບໍ່ເຫັນປະຈຸບັນ)

	ພາສາລາວ	ພາສາບຣູ	ເດືອນໃດ	ວິທີການຫາ	ສະຖານທີ່ຫາ
1	ປາປາກ	ເຊັ້ຍ ປາປາກ	ເດືອນ 11	ແຫ, ຕ້ອນ, ຈີບ	ຫ້ວຍ
2	ປາໄນ	ເຊັ້ຍ ປາໄນ	ເດືອນ 9 10	ເບັດ, ຈີບ	ຫ້ວຍ, ນາ
3	ປາຫຼາດ	ເຊັ້ຍ ອາກຣຸນ	ເດືອນ 1 2	ເບັດ, ຈີບ	ຫ້ວຍ
4	ປາຫຼິດ	ເຊັ້ຍ ປາຫຼິດ	ເດືອນ 5 6	ເບັດ, ຈີບ	ຫ້ວຍ
5	ປາສະກາງ	ເຊັ້ຍ ສະກາງ	ເດືອນ 11 12	ຈີບ, ແຫ	ຫ້ວຍ, ນາ
6	ປາຫຼັງເຫາະ	ເຊັ້ຍ ຫຼັງເຫາະ	ເດືອນ 1 2	ສະດຸ້ງ	ຫ້ວຍ
7	ປາສູດ	ເຊັ້ຍ ເຊັ້ຍ ປຣາວ	ເດືອນ 10	ສະດຸ້ງ, ຈີບ	ຫ້ວຍ
8	ປາຄໍ່	ເຊັ້ຍ ອາຈີງ	ເດືອນ 9 10	ແຫ, ຈີບ	ຫ້ວຍ
9	ປາກົດ	ເຊັ້ຍ ສະດວງ	ເດືອນ 5	ຈີບ, ມອງ, ແຫ	ຫ້ວຍ
10	ປາເຊືອມ	ເຊັ້ຍ ອີຕີງ	ເດືອນ 7 8	ຈີບ, ມອງ, ແຫ	ຫ້ວຍ
11	ປາຂາວ	ເຊັ້ຍ ຂາວ	ເດືອນ 7 8	ສະດຸ້ງ, ແຫຍງ	ຫ້ວຍ
12	ປາຈາດ	ເຊັ້ຍ ຈາດ	ເດືອນ 7 8	ສະດຸ້ງ, ແຫ, ຈີບ	ຫ້ວຍ
13	ປາປົກ	ເຊັ້ຍ ປົກ	ເດືອນ 7 8	ສະດຸ້ງ, ແຫ	ຫ້ວຍ
14	ປາຄໍ່ກົ້ງ	ເຊັ້ຍ ອາແຍນ	ເດືອນ 7 8	ສະດຸ້ງ,ມອງ	ຫ້ວຍ
15	ປາຂະແຍງ	ເຊັ້ຍ ຂະແຍງ	ເດືອນ 7 8	ສະດຸ້ງ, ມອງ, ຈີ	ຫ້ວຍ
16	ປາຄາວມັນ	ເຊັ້ຍ ຄາວມັນ	ເດືອນ 7 8	ສະດຸ້ງ, ແຫ	ຫ້ວຍ
17	ປາເຂັ້ງ	ເຊັ້ຍ ເຂັ້ງ	ເດືອນ 9 10	ສະດຸ້ງ, ມອງ	ຫ້ວຍ
18	ປາຄີລາມ	ເຊັ້ຍ ສະລາມ	ເດືອນ 6 7	ສະດຸ້ງ, ແຫ	ຫ້ວຍ
19	ປາກະແຕບ	ເຊັ້ຍ ກະແຕບ	ເດືອນ 6 10	ສະດຸ້ງ, ແຫ	ຫ້ວຍ
20	ປາກະເດີດ	ເຊັ້ຍ ກະເດີດ	ເດືອນ 7 10	ສະດຸ້ງ, ແຫ	ຫ້ວຍ
21	ປາຊິວ	ອາດຣຽງ	ເດືອນ 9 10	ສະດຸ້ງ, ແຫ, ຈີບ	ຫ້ວຍ
22	ກຸ້ງຝອຍ	ອາຊວມ	ເດືອນ 10	ສະດຸ້ງ, ແຫ, ມອ	ຫ້ວຍ, ນາ
23	ປາລົ້ນໝາ	ເຊັ້ຍ ເລັຍ ອາຈໍ	ເດືອນ 10	ແຫ, ມອງ	ຫ້ວຍ
24	ປາຄາບຂອງ	ເຊັ້ຍ ຄາບຂອງ	ເດືອນ 9	, ແຫ, ມອງ	ຫ້ວຍ

◆ ຊະນິດພັນໄມ້

	ຊະນິດ	ສະຖານທີ່	ສະຖານະພາບ	% ປ່ຽນແປງ 5 ປີ ຜ່ານມາ	ສາເຫດ
1	ໄມ້ດູ່	ດົງຂວາງ	ໜ້ອຍ	80%	ຄວາມຕ້ອງການຕະຫຼາດສູງ
2	ໄມ້ແຕ້ຂ່າ	ດົງຂວາງ	ໜ້ອຍ	80%	ຄວາມຕ້ອງການຕະຫຼາດສູງ
3	ໄມ້ຍາງ	ດົງຂວາງ	ປານກາງ	50%	ຊົມໃຊ້
4	ໄມ້ເຊືອກ	ດົງຂວາງ	ຫຼາຍ	80%	ຊົມໃຊ້
5	ໄມ້ຊາດ	ດົງຂວາງ	ຫຼາຍ	80%	ຊົມໃຊ້
6	ໄມ້ກຸງ	ດົງຂວາງ	ຫຼາຍ	80%	ຊົມໃຊ້
7	ໄມ້ເປືອຍ	ດົງຂວາງ	ຫຼາຍ	90%	ຊົມໃຊ້
8	ໄມ້ແດງ	ດົງຂວາງ	ຫຼາຍ	80%	ຊົມໃຊ້
9	ໄມ້ຈິກ	ດົງຂວາງ	ໜ້ອຍ	80%	ຊົມໃຊ້
10	ໄມ້ຮັ່ງ	ດົງຂວາງ	ປານກາງ	50%	ຊົມໃຊ້

2.4 ປະຕິທິນຂອງບ້ານ Calendar of Village

ເດືອນ (ສາກົນ)						
	1	2	3	4	5	6
ກະສິກຳ						
ເຂົ້ານາ					ຕົກກ້າ, ໄຖຮຸດ	ເລີ່ມໄຖດຳ, ດຳນາ, ປົວລະບັດຮັກສາ, ເບິ່ງນ້ຳ, ເສຍຫຍ້າ
ຜົນຜະລິດອື່ນ ໃນນາ						
ອື່ນໆ						
ວຽກອື່ນໆ ຕ່ຳສາດຜົຂາຍ ຜົນລະ 15-20 ພັນ						
ບຸນ	ເຮັດລະປົບ ແລະ ງານດອງ	ເຮັດລະປົບ ແລະ ງານດອງ	ເຮັດລະປົບ ແລະ ງານດອງ ບຸນກອງເຂົ້ຳ	ບຸນປີໃໝ່ລາວ		
ພິທີ						
ເຄື່ອງປ່າຂອງດົງ						
ສັດປ່າ						
ສັດນ້ຳ			ຫາປຸກຂາຍກິໂລລະ 30,000 ກີບ ແລະ ປາຕ່ຳ 20,000 ກີບ/ກິໂລ	ຫາປຸກຂາຍກິໂລລະ 30,000 ກີບ ແລະ ປາຕ່ຳ 20,000 ກີບ/ກິໂລ	ຫາປຸກຂາຍກິໂລລະ 30,000 ກີບ ແລະ ປາຕ່ຳ 20,000 ກີບ/ກິໂລ	

ເດືອນ (ສາກົນ)						
	7	8	9	10	11	12
ກະສິກຳ						
ເຂົ້ານາ	ບາງຄອບຄົວຂະຫຍາຍເນື້ອທີ່ນາ	ບາງຄອບຄົວຂະຫຍາຍເນື້ອທີ່ນາ	ບາງຄອບຄົວຂະຫຍາຍເນື້ອທີ່ນາ ແລະ ເລີ່ມເກັບກ່ຽວເຂົ້າດໍ	ກ່ຽວເຂົ້າດໍ ແລະ ເຂົ້ານາງ	ກ່ຽວເຂົ້າງັນ	
ວຽກອື່ນໆ ຕ່ຳສາດຜີ		ເກັບຜືມາຕາກໄວ້ປະມານ 2 ອາທິດ			ຕ່ຳສາດຜີ	ຕ່ຳສາດຜີ
ພິທີ			ບຸນຫໍ່ເຂົ້າປະດັບດິນ			
ເຄື່ອງປ່າຂອງດົງ	ເຫັດລະໂງກກິໂລລະ 10,000 ກີບ ມີແມ່ຄ້າຈາກບ້ານອື່ນມາຮັບຊື້ ຫາຂໍ້ຊີ້ຂາຍກິໂລລະ 10,000 ກີບ ໄປຂາຍຢູ່ດົງເຫັນ, ກະປູແດງ	ຫາຂໍ້ຊີ້ຂາຍກິໂລລະ 10,000 ກີບ ໄປຂາຍຢູ່ດົງເຫັນ ຈີ່ຫຼ່ຳ	ເກັບໜໍ່ໄມ້ຂາຍ ແຕ່ບໍ່ໄດ້ແປຮູບ ຫາຂໍ້ຊີ້ຂາຍກິໂລລະ 10,000 ກີບ ໄປຂາຍຢູ່ດົງເຫັນ	ຫາຂໍ້ຊີ້ຂາຍກິໂລລະ 10,000 ກີບ ໄປຂາຍຢູ່ດົງເຫັນ	ຫາຂໍ້ຊີ້ຂາຍກິໂລລະ 10,000 ກີບ ໄປຂາຍຢູ່ດົງເຫັນ ກະປູແດງ	ຫາຂໍ້ຊີ້ຂາຍກິໂລລະ 10,000 ກີບ ໄປຂາຍຢູ່ດົງເຫັນ
ສັດປ່າ	ໝູທ້ອງຂາວ, ນົກເຂົ້າ, ໄກ່ປ່າ ແລະ ນົກຍາງ ມີແຕ່ບໍ່ຫຼາຍ	ໝູທ້ອງຂາວ, ນົກເຂົ້າ, ໄກ່ປ່າ ແລະ ນົກຍາງ ມີແຕ່ບໍ່ຫຼາຍ	ໝູທ້ອງຂາວ, ນົກເຂົ້າ, ໄກ່ປ່າ ແລະ ນົກຍາງ ມີແຕ່ບໍ່ຫຼາຍ	ໝູທ້ອງຂາວ, ນົກເຂົ້າ, ໄກ່ປ່າ ແລະ ນົກຍາງ ມີແຕ່ບໍ່ຫຼາຍ	ໝູທ້ອງຂາວ, ນົກເຂົ້າ, ໄກ່ປ່າ ແລະ ນົກຍາງ ມີແຕ່ບໍ່ຫຼາຍ	ໝູທ້ອງຂາວ, ນົກເຂົ້າ, ໄກ່ປ່າ ແລະ ນົກຍາງ ມີແຕ່ບໍ່ຫຼາຍ
ສັດນ້ຳ						

2.6. ຜົນຜະລິດຂອງຊາວບ້ານທີ່ຂາຍ Sold Produce by Villagers

ລ/ດ	ຜົນຜະລິດ	ລາຄາ ແລະ ເດືອນຂາຍ (ສູງສຸດ ແລະ ຕ່ຳສຸດ)	ວິທີຂາຍ	ຊື່ຜູ້ຊື້ / ບ່ອນທີ່ຂາຍ
1	ເຂົ້າ	ລາຄາສູງສຸດ: 2,000 ກີບ/ກິໂລ ເດືອນ 1-2 ລາຄາຕ່ຳສຸດ: 1,800 ກີບ/ກິໂລ ເດືອນ 1-2	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ພໍ່ຄ້າມາຊື້ພາຍໃນບ້ານ ຢູ່: ດົງເຫັນ ແລະ ຂາຍຢູ່ໂຮງສີເຂົ້າ
2	ຄວາຍ	ລາຄາສູງສຸດ: 32,000 ບາດ/ໂຕ ລາຄາຕ່ຳສຸດ: 8,000 ບາດ/ໂຕ	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ພໍ່ຄ້າຄົນຫວຽດ, ຄົນລາວ, ຕາຫ ຳ ຢູ່: ດົງເຫັນ
3	ງົວ	ລາຄາສູງສຸດ: 25,000 ບາດ/ໂຕ ລາຄາຕ່ຳສຸດ: 5,000 ບາດ/ໂຕ	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ພໍ່ຄ້າຄົນຫວຽດ, ຄົນລາວ, ຕາຫ ຳ ຢູ່: ດົງເຫັນ
4	ແບ້	ລາຄາສູງສຸດ: 700,000 ກີບ/ໂຕ ລາຄາຕ່ຳສຸດ: 250,000 ກີບ/ໂຕ	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ຄ ຳພັນ ນາຍບ້ານ ຢູ່: ສິ່ງຕ່ ຳໃຫ້ພໍ່ຄ້າໃນເມືອງ
5	ໝູ	ລາຄາສູງສຸດ: 1,300,000 ກີບ/ໂຕ ລາຄາຕ່ຳສຸດ: 250,000 ກີບ/ໂຕ	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ຄ ຳພັນ ນາຍບ້ານ ຢູ່: ສິ່ງຕ່ ຳໃຫ້ພໍ່ຄ້າໃນເມືອງ
6	ສັດປີກ	ລາຄາສູງສຸດ: 25,000 ກີບ/ໂຕ ລາຄາຕ່ຳສຸດ: 10,000 ກີບ/ໂຕ	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ຄ ຳພັນ ນາຍບ້ານ ຢູ່: ສິ່ງຕ່ ຳໃຫ້ພໍ່ຄ້າໃນເມືອງ
7	ຈີ້ໝູ	ລາຄາສູງສຸດ: 10,000 ກີບ/100 ໂຕ ລາຄາສູງສຸດ: 5,000 ກີບ/50 ໂຕ	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ຄ ຳພັນ ນາຍບ້ານ ຢູ່: ສິ່ງຕ່ ຳໃຫ້ພໍ່ຄ້າໃນເມືອງ
8	ເຄື່ອໝາກຂາມແປ	ລາຄາສູງສຸດ: 11,000 ກີບ/ກິໂລ ເດືອນ 8-9 ລາຄາຕ່ຳສຸດ: 5,000 ກີບ/ກິໂລ ເດືອນ 8-9	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ຄ ຳພັນ ນາຍບ້ານ ຢູ່: ສິ່ງຕ່ ຳໃຫ້ພໍ່ຄ້າໃນເມືອງ
9	ຫົວບົວບິກ	ລາຄາສູງສຸດ: 5,000 ກີບ/ກິໂລ ເດືອນ 8-9	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ຄ ຳພັນ ນາຍບ້ານ ຢູ່: ສິ່ງຕ່ ຳໃຫ້ພໍ່ຄ້າໃນເມືອງ
10	ສາມດິນ	ລາຄາສູງສຸດ: 10,000 ກີບ/ກິໂລ ເດືອນ 7-9 ລາຄາຕ່ຳສຸດ: 6,000 ກີບ/ກິໂລ ເດືອນ 7-9	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ຄ ຳພັນ ນາຍບ້ານ ຢູ່: ສິ່ງໃຫ້ພໍ່ຄ້າບ້ານນາໄລ່ດົງ, ເມືອງ
11	ໄຂ່ມົດແດງ	ລາຄາສູງສຸດ: 50,000 ກີບ/ກິໂລ ເດືອນ 4-5 ລາຄາຕ່ຳສຸດ: 30,000 ກີບ/ກິໂລ ເດືອນ 4-5	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ພໍ່ຄ້າມາຈາກບ້ານນາໄລ່ດົງ ຢູ່ : ມາຊື້ຢູ່ໃນບ້ານ
12	ແມງແຄງ	ລາຄາສູງສຸດ: 200,000 ກີບ/ກິໂລ ລາຄາຕ່ຳສຸດ: 150,000 ກີບ/ກິໂລ	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ພໍ່ຄ້າມາຈາກບ້ານນາໄລ່ດົງ ຢູ່: ມາຊື້ຢູ່ໃນບ້ານ
13	ຂີ້ຊີ	ລາຄາສູງສຸດ: 10,000 ກີບ/ກິໂລ ລາຄາຕ່ຳສຸດ: 5,000 ກີບ/ກິໂລ	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ມີພໍ່ຄ້າມາຊື້ຢູ່ພາຍໃນບ້ານ
14	ໝາກຂາມ	ລາຄາສູງສຸດ: 40,000 ກີບ/ໝື່ນ ເດືອນ 3-4 ລາຄາຕ່ຳສຸດ: 20,000 ກີບ/ໝື່ນ ເດືອນ 3-4	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ມີພໍ່ຄ້າມາຊື້ຢູ່ພາຍໃນບ້ານ
15	ໝາກກອກ	ລາຄາສູງສຸດ: 3,000 ກີບ/ກິໂລ	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ມີພໍ່ຄ້າມາຊື້ຢູ່ພາຍໃນບ້ານ
16	ກະປຸແດງ (ພໍ່ແຕ່ໄດ້ກິນ)	-	ພໍ່ຄ້າມາຊື້ /ໄປຂາຍນອກ	-
17	ເຫັດປວກ	ລາຄາສູງສຸດ: 30,000 ກີບ/ກິໂລ ເດືອນ 6-7 ລາຄາຕ່ຳສຸດ: 10,000 ກີບ/ກິໂລ ດືອນ 6-7	ພໍ່ຄ້າມາຊື້ /ໄປຂາຍນອກ	ຊື່: ພໍ່ຄ້າໃນບ້ານ, ນອກບ້ານ

18	ເຫັດລະ ໂງກ	ລາຄາສູງສຸດ: 25,000 ກີບ/ກິໂລ ດືອນ 6-7 ລາຄາຕ່ຳສຸດ: 10,000 ກີບ/ກິໂລ ເດືອນ 6-7	ພໍ່ຄ້າມາຊື້ /ໄປ ຂາຍນອກ	ຊື່: ພໍ່ຄ້າໃນບ້ານ, ນອກບ້ານ
19	ເຫັດເຜາະ	ລາຄາສູງສຸດ: 50,000 ກີບ/ກິໂລ ເດືອນ 5 ລາຄາຕ່ຳສຸດ: 10,000 ກີບ/ກິໂລ ເດືອນ 5	ພໍ່ຄ້າມາຊື້ /ໄປ ຂາຍນອກ	ຊື່: ພໍ່ຄ້າໃນບ້ານ, ນອກບ້ານ
20	ໝາກ ລິ້ນໄມ້	ລາຄາສູງສຸດ: 5,000 ກີບ/ໝ່ວຍ ລາຄາຕ່ຳສຸດ: 2,000 ກີບ/ໝ່ວຍ	ພໍ່ຄ້າມາຊື້ /ໄປ ຂາຍນອກ	ຊື່: ພໍ່ຄ້າໃນບ້ານ, ນອກບ້ານ
21	ດອກເຜົ້ງ	ລາຄາສູງສຸດ: 10,000 ກີບ/ກິໂລ ລາຄາຕ່ຳສຸດ: 3,000 ກີບ/ກິໂລ	ພໍ່ຄ້າມາຊື້ /ໄປ ຂາຍນອກ	ຢູ່: ພໍ່ຄ້າມາຊື້ແຕ່ດົງເຫັນ

III. ແຜນທີ່ ແລະ ຂໍ້ມູນຈຸດພິກັດ GPS Map and GPS Data

ສຳຫຼວດ ວັນທີ 6 ເດືອນ 9 ປີ 2018 ຫາ ວັນທີ 7 ເດືອນ 12 ປີ 2019

ບ້ານໂນນຮັ່ງ: ທ ຄຳພັນ (ນາຍບ້ານໂນນຮັ່ງ), ທ ວອນ ຮອງນາຍບ້ານ, ທ ຄຳກ່າຍ ຮອງນາຍບ້ານ, ທ ທອງໄຊ ຮອງນາຍບ້ານ ແລະ ບ້ານ ແລະ ຊາວບ້ານອື່ນໆ.

5 ບ້ານທີ່ຕິດຈອດ: ບ້ານ ສົງສະຫວ່າງ ທ ສົມຄິດ ນາຍບ້ານ, (ເດີ່ນປ້ອມ) ທ ພູວົງ ຮອງເລຂາພັກບ້ານ, ບ້ານ ໂຄກສະຫວ່າງ ທ ຄຳ ມ່ວນ ນາຍບ້ານ, ບ້ານ ນາທົ່ມ ທ. ບຸນຊື່ນ ແນວໂຮມບ້ານ, ບ້ານ ດົງຫວາຍດິນ ທ ສິດທິພອນ ນາຍບ້ານ.

ພາກລັດ: ທ. ໄຊສົງຄາມ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ທ. ອິນປັນ ຫ້ອງການພາຍໃນເມືອງ.

ອົງການ: ທ. ສີສະຫວັນ ອິນທະໂຄນ ແລະ ທ. ຮຽວເຮ ຢາມາມູໂຣະ

ເຄື່ອງທີ່ໃຊ້. GPS GARMIN 60 CSx

ລະບົບຂໍ້ມູນພູມສາດ CRS: WGS 1984 / UTM Zone 48N

ຜູ້ທີ່ຈັດການຂໍ້ມູນຈຸດພິກັດ GPS: ພັກສຸລິຍາ ພົມມະເທດ ແລະ ສີສະຫວັນ ອິນທະໂຄນ (ເຈວີຊີ)

ທີມງານສຳຫຼວດຂອບເຂດຊາຍແດນລະຫວ່າງບ້ານໂນນຮັ່ງເມືອງອາດສະພັ່ງທອງກັບບ້ານນາທົ່ມເມືອງອາດສະພອນ

3.1 ແຜນທີ່ສະແດງທີ່ຕັ້ງຂອງບ້ານ ໂນນຮັ່ງ Location of Nonhang Villag



ແຜນທີ່ 1: ແຜນທີ່ສະແດງທີ່ຕັ້ງຂອງບ້ານ ໂນນຮັ່ງ

Fig. 1: Location of Nonhang Village

3.2 ແຜນທີ່ເຂດຄຸ້ມຄອງຂອງບ້ານ ໂນນຮັ່ງ Boundary Map of Nonhang Village



3.3 ແຜນທີ່ເຂດຄຸ້ມຄອງຂອງບ້ານ ໂນນຮັ່ງ ແລະ ພາບຖ່າຍອາກາດ Boundary Map of Nonhang Village with Aerial Photograph



3.4 ແຜນທີ່ພູມສັນຖານຂອງບ້ານໂນນຮັ່ງ Topographical Map of Nonhang Village



3.5 ແຜນທີ່ສາຍນ້ຳຂອງບ້ານ ໂນນຮັ່ງ Hydrology System Map of Nonhang Villag



3.6 ແຜນທີ່ການນຳໃຊ້ທີ່ດິນຂອງບ້ານ ໂນນຮັ່ງ Land Use Map of Nonhang Village



3.7 ແຜນທີ່ເຂດປຸກສ້າງຂອງບ້ານ ໂນນຮັ່ງ Residence Map of Nonhang Village



3.8 ແຫຼ່ງຂໍ້ມູນຈຸດພິກັດ GPS ສຳລັບເຂດຄຸ້ມຄອງ, ປຸກສ້າງ, ສາທາລະນະ, ປ່າໄມ້ຊຸມຊົນ ແລະ ສະຖານທີ່ສຳຄັນຂອງບ້ານ ໂນນຮັ່ງ Source of GPS Data of Boundary, Land for Residence, Public Use, Community Forest and Landmarks of Nonhang Village

1 ຂອບເຂດບ້ານໂນນຮັ່ງ

ລຳດັບ			ຂໍ້ມູນ GPS ລະບົບ CRS: WGS 1984 / UTM Zone 48N								
ລຳດັບ	ລະຫັດໃນ	ລາຍລະອຽດບໍ່ລິເວນຈຸດພິກັດ	ເສັ້ນຂະໜານ		ເສັ້ນແວງ			UTM		ຄວາມສູງ
	ແຜນທີ່							X	Y	
1	A037	ກິກໄມ້ເປ່ຍ ຫຼື ກິກໄມ້ງິ້ວປ່າ ແດນ 3 ບ້ານລະຫວ່າງ ບ້ານໂນນຮັ່ງ, ບ້ານນາໄຜ່ເງິ ແລະ ບ້ານໜອງເຕົ່ານ (ບ້ານ ດົງຫວາຍຕົນ)	N 16.77895	E	105.37843	48 Q		540328.18	1855140.09	160
2			N 16.77901	E	105.37864	48 Q		540350.97	1855146.36	159
3			N 16.77907	E	105.37888	48 Q		540376.14	1855153.89	162
4			N 16.77914	E	105.37910	48 Q		540399.70	1855160.75	167
5			N 16.77921	E	105.37934	48 Q		540424.89	1855168.88	166
6			N 16.77925	E	105.37943	48 Q		540435.17	1855173.53	160
7			N 16.77931	E	105.37953	48 Q		540445.73	1855179.68	159
8			N 16.77934	E	105.37956	48 Q		540448.35	1855183.47	162
9			N 16.77937	E	105.37957	48 Q		540449.97	1855186.40	167
10			N 16.77939	E	105.37964	48 Q		540457.69	1855188.63	166
11			N 16.77942	E	105.37981	48 Q		540475.57	1855191.92	160
12			N 16.77947	E	105.38008	48 Q		540504.14	1855198.19	167
13			N 16.77954	E	105.38101	48 Q		540603.22	1855206.10	162
14			N 16.78061	E	105.38519	48 Q		541048.52	1855324.64	161
15			N 16.78091	E	105.38776	48 Q		541322.79	1855358.53	161
16			N 16.78612	E	105.39300	48 Q		541879.51	1855936.21	163
17			N 16.78691	E	105.39892	48 Q		542510.46	1856024.85	160
18	A054	ກິກໄມ້ຫຼັງກ່ຳ ແດນ 3 ບ້ານລະຫວ່າງ ບ້ານໂນນຮັ່ງ, ບ້ານໜອງເຕົ່ານ (ບ້ານ ດົງຫວາຍຕົນ) ແລະ ບ້ານ ນາຫົ່ມ.	N 16.78700	E	105.40686	48 Q		543356.78	1856036.64	167
19			N 16.78398	E	105.41112	48 Q		543810.85	1855703.18	162
20			N 16.78105	E	105.41813	48 Q		544558.64	1855381.05	161
21			N 16.78083	E	105.41836	48 Q		544583.64	1855356.76	161
22			N 16.78056	E	105.41837	48 Q		544584.99	1855326.73	163
23			N 16.78035	E	105.41837	48 Q		544584.31	1855303.78	160
24			N 16.78028	E	105.41841	48 Q		544588.81	1855295.77	159
25			N 16.78021	E	105.41858	48 Q		544607.33	1855288.07	162
26			N 16.78006	E	105.41895	48 Q		544646.52	1855271.69	167
27			N 16.77998	E	105.41939	48 Q		544693.35	1855263.16	166
28			N 16.78002	E	105.41981	48 Q		544737.93	1855267.15	160
29			N 16.78008	E	105.42001	48 Q		544759.50	1855273.89	167
30			N 16.78011	E	105.42040	48 Q		544800.56	1855277.08	162
31			N 16.78019	E	105.42068	48 Q		544830.27	1855286.43	161
32			N 16.78014	E	105.42099	48 Q		544863.52	1855280.72	161
33			N 16.78012	E	105.42132	48 Q		544899.14	1855278.24	163
34			N 16.78006	E	105.42167	48 Q		544936.80	1855272.65	160
35			N 16.78008	E	105.42168	48 Q		544937.69	1855274.25	159
36			N 16.77998	E	105.42201	48 Q		544972.41	1855263.12	162
37			N 16.78004	E	105.42221	48 Q		544994.00	1855269.89	167
38			N 16.78010	E	105.42223	48 Q		544996.19	1855276.27	166
39			N 16.78001	E	105.42223	48 Q		544996.32	1855266.31	160
40			N 16.77998	E	105.42236	48 Q		545010.12	1855263.35	159
41			N 16.77995	E	105.42275	48 Q		545051.59	1855259.98	162
42			N 16.77996	E	105.42301	48 Q		545078.81	1855261.15	167
43			N 16.77992	E	105.42313	48 Q		545091.85	1855257.01	166
44			N 16.77997	E	105.42334	48 Q		545114.59	1855262.87	160
45			N 16.78007	E	105.42355	48 Q		545136.43	1855273.56	167
46			N 16.78014	E	105.42376	48 Q		545159.35	1855281.98	162
47			N 16.78023	E	105.42396	48 Q		545179.90	1855291.51	161
48			N 16.78032	E	105.42424	48 Q		545210.11	1855301.79	161
49			N 16.78031	E	105.42452	48 Q		545239.53	1855300.11	163
50			N 16.78031	E	105.42452	48 Q		545240.06	1855300.62	160
51			N 16.78029	E	105.42482	48 Q		545272.08	1855298.52	159
52			N 16.78029	E	105.42515	48 Q		545307.19	1855298.33	162
53			N 16.78029	E	105.42542	48 Q		545335.36	1855298.92	167
54			N 16.78031	E	105.42589	48 Q		545385.70	1855301.25	166
55			N 16.78032	E	105.42589	48 Q		545385.73	1855301.75	160
56			N 16.78037	E	105.42623	48 Q		545422.45	1855307.09	167
57			N 16.78048	E	105.42654	48 Q		545454.74	1855319.58	162
58			N 16.78058	E	105.42674	48 Q		545476.35	1855330.49	161
59			N 16.78062	E	105.42690	48 Q		545492.98	1855335.10	161
60			N 16.78068	E	105.42722	48 Q		545527.40	1855341.57	163
61			N 16.78077	E	105.42752	48 Q		545559.60	1855351.91	160
62			N 16.78097	E	105.42878	48 Q		545694.16	1855374.61	159
63			N 16.78097	E	105.42972	48 Q		545793.53	1855374.81	162
64			N 16.78125	E	105.43014	48 Q		545838.40	1855405.38	167
65			N 16.78147	E	105.43047	48 Q		545873.69	1855429.81	166
66			N 16.78168	E	105.43093	48 Q		545922.54	1855453.01	160
67			N 16.78183	E	105.43126	48 Q		545958.15	1855470.09	159
68	A105	ກິກໄມ້ຊ້ຽລ ແດນ 3 ບ້ານລະຫວ່າງ ບ້ານໂນນຮັ່ງ, ບ້ານ ນາຫົ່ມ ແລະ ບ້ານ ສີງສະຫວ່າງ	N 16.78210	E	105.43164	48 Q		545998.57	1855500.44	162
69		ເສັ້ນທາງແດງ	N 16.78173	E	105.43233	48 Q		546072.02	1855459.78	167
70		ເສັ້ນທາງແດງ	N 16.78134	E	105.43295	48 Q		546138.27	1855416.81	166
71		ເສັ້ນທາງແດງ	N 16.78125	E	105.43335	48 Q		546180.87	1855406.01	160
72		ເສັ້ນທາງແດງ	N 16.78123	E	105.43389	48 Q		546238.30	1855404.75	167
73		ເສັ້ນທາງແດງ	N 16.78135	E	105.43424	48 Q		546275.32	1855417.39	162
74		ເສັ້ນທາງແດງ	N 16.78147	E	105.43483	48 Q		546338.61	1855431.02	161
75		ເສັ້ນທາງແດງ	N 16.78151	E	105.43520	48 Q		546378.00	1855436.12	161
76		ເສັ້ນທາງແດງ	N 16.78137	E	105.43547	48 Q		546406.19	1855420.58	163
77		ເສັ້ນທາງແດງ	N 16.78106	E	105.43625	48 Q		546489.63	1855386.38	160
78		ເສັ້ນທາງແດງ	N 16.78068	E	105.43674	48 Q		546542.53	1855344.35	159
79		ເສັ້ນທາງແດງ	N 16.78021	E	105.43703	48 Q		546573.58	1855291.82	162
80		ເສັ້ນທາງແດງ	N 16.77982	E	105.43723	48 Q		546595.02	1855248.87	167
81		ເສັ້ນທາງແດງ	N 16.77932	E	105.43738	48 Q		546610.88	1855194.10	166
82		ເສັ້ນທາງແດງ	N 16.77903	E	105.43749	48 Q		546622.10	1855161.51	160
83		ເສັ້ນທາງແດງ	N 16.77892	E	105.43760	48 Q		546634.61	1855149.92	167
84		ເສັ້ນທາງແດງ	N 16.77871	E	105.43784	48 Q		546660.02	1855126.96	162
85		ເສັ້ນທາງແດງ	N 16.77841	E	105.43829	48 Q		546707.91	1855093.17	161
86		ເສັ້ນທາງແດງ	N 16.77828	E	105.43861	48 Q		546742.07	1855079.19	161
87		ເສັ້ນທາງແດງ	N 16.77823	E	105.43900	48 Q		546783.86	1855073.33	163
88		ເສັ້ນທາງແດງ	N 16.77824	E	105.43925	48 Q		546810.15	1855075.41	160
89		ເສັ້ນທາງແດງ	N 16.77826	E	105.43949	48 Q		546836.21	1855076.98	159
90		ເສັ້ນທາງແດງ	N 16.77831	E	105.44001	48 Q		546890.76	1855083.08	162
91		ເສັ້ນທາງແດງ	N 16.77833	E	105.44122	48 Q		547020.20	1855085.20	167
92		ເສັ້ນທາງແດງ	N 16.77865	E	105.44249	48 Q		547155.57	1855120.89	166
93		ເສັ້ນທາງແດງ	N 16.77873	E	105.44318	48 Q		547228.45	1855130.40	160
94		ເສັ້ນທາງແດງ	N 16.77834	E	105.44375	48 Q		547289.58	1855086.98	159
95		ເສັ້ນທາງແດງ	N 16.77837	E	105.44374	48 Q		547289.08	1855090.67	162
96		ເສັ້ນທາງແດງ	N 16.77840	E	105.44373	48 Q		547288.03	1855093.85	167
97		ເສັ້ນທາງແດງ	N 16.77790	E	105.44423	48 Q		547340.74	1855038.26	166
98		ເສັ້ນທາງແດງ	N 16.77772	E	105.44447	48 Q		547366.97	1855018.58	160
99		ເສັ້ນທາງແດງ	N 16.77768	E	105.44462	48 Q		547382.76	1855013.82	167
100		ເສັ້ນທາງແດງ	N 16.77780	E	105.44546	48 Q		547472.35	1855027.31	162
101		ເສັ້ນທາງແດງ	N 16.77777	E	105.44579	48 Q		547507.32	1855024.66	161
102	A139	ເສັ້ນທາງແດງ	N 16.77775	E	105.44599	48 Q		547528.15	1855021.79	161
103	A140	ໂນນກິກໄມ້ຍ່ຽ ແດນ 3 ບ້ານລະຫວ່າງ ບ້ານໂນນຕາດ (ໂນນຮັ່ງ), ບ້ານ ສີງ ສະຫວ່າງ ແລະ ບ້ານຕົ່ມປ໋ອມ (ສີງສະຫວ່າງ)	N 16.77733	E	105.44621	48 Q		547552.04	1854976.13	163
104			N 16.77523	E	105.44879	48 Q		547827.83	1854744.20	160
105	A142	ກິກໄມ້ຈິກ ແດນ 3 ບ້ານລະຫວ່າງ ບ້ານໂນນຕາດ (ໂນນຮັ່ງ), ບ້ານ ຕົ່ມ ປ໋ອມ (ສີງສະຫວ່າງ) ແລະ ບ້ານໂຄກສະຫວ່າງ	N 16.77555	E	105.45195	48 Q		548164.53	1854780.16	159
106			N 16.77527	E	105.45176	48 Q		548144.50	1854749.53	162
107			N 16.77493	E	105.45121	48 Q		548085.63	1854711.42	167
108			N 16.77477	E	105.45114	48 Q		548077.92	1854693.66	166
109			N 16.77469	E	105.45110	48 Q		548073.65	1854685.21	160
110			N 16.77467	E	105.45096	48 Q		548058.60	1854682.77	167
111			N 16.77463	E	105.45084	48 Q		548046.06	1854678.71	162
112			N 16.77459	E	105.45073	48 Q		548034.59	1854674.15	161
113			N 16.77456	E	105.45067	48 Q		548027.65	1854670.77	161
114			N 16.77453	E	105.45060	48 Q		548020.24	1854666.85	163
115			N 16.77441	E	105.45072	48 Q		548033.58	1854654.16	160
116			N 16.77435	E	105.45077	48 Q		548038.93	1854647.35	159
117			N 16.77428	E	105.45070	48 Q		548031.63	1854639.91	162
118			N 16.77424	E	105.45060	48 Q		548020.51	1854635.06	167
119			N 16.77428	E	105.45046	48 Q		548005.45	1854638.99	166
120			N 16.77421	E	105.45037	48 Q		547995.95	1854631.60	160
121			N 16.77413	E	105.45025	48 Q		547983.72	1854622.71	159
122			N 16.77413	E	105.45005	48 Q		547962.64	1854622.39	162
123			N 16.77402	E	105.44994	48 Q		547950.88	1854610.60	167
124			N 16.77388	E	105.44989	48 Q		547945.23	1854595.19	166
125			N 16.77382	E	105.44974	48 Q		547929.75	1854588.62	160
126			N 16.77376	E	105.44964	48 Q		547918.68	1854581.23	167
127			N 16.77365	E	105.44962	48 Q		547915.98	1854569.79	162
128			N 16.77349	E	105.44954	48 Q		547907.55	1854552.01	161
129			N 16.77346	E	105.44943	48 Q		547896.81	1854548.19	161
130			N 16.77343	E	105.44929	48 Q		547881.56	1854545.51	163
131			N 16.77321	E	105.44919	48 Q		547870.57	1854521.18	160
132			N 16.77307	E	105.44912	48 Q		547863.87	1854505.74	159
133			N 16.77291	E	105.44912	48 Q		547863.08	1854488.10	162
134			N 16.77274	E	105.44918	48 Q		547869.47	1854469.23	167
135			N 16.77252	E	105.44918	48 Q		547869.83	1854444.10	166

136			N	16.77246	E	105.44917	48	Q	547868.80	1854437.44	160
137			N	16.77232	E	105.44919	48	Q	547871.22	1854422.89	167
138			N	16.77219	E	105.44912	48	Q	547863.31	1854408.49	162
139			N	16.77193	E	105.44904	48	Q	547855.09	1854379.27	161
140			N	16.77164	E	105.44902	48	Q	547852.67	1854346.92	161
141			N	16.77129	E	105.44891	48	Q	547840.91	1854308.26	163
142			N	16.77106	E	105.44885	48	Q	547835.12	1854282.76	160
143			N	16.77084	E	105.44876	48	Q	547825.87	1854258.57	159
144			N	16.77063	E	105.44864	48	Q	547812.55	1854235.11	162
145			N	16.77054	E	105.44853	48	Q	547800.96	1854224.77	167
146			N	16.77054	E	105.44837	48	Q	547784.07	1854225.07	166
147			N	16.77059	E	105.44812	48	Q	547757.22	1854230.26	160
148			N	16.77059	E	105.44810	48	Q	547754.79	1854230.68	159
149			N	16.77063	E	105.44792	48	Q	547735.71	1854235.44	162
150			N	16.77064	E	105.44768	48	Q	547710.68	1854236.24	167
151			N	16.77068	E	105.44751	48	Q	547692.06	1854240.93	166
152			N	16.77057	E	105.44740	48	Q	547680.26	1854228.42	160
153			N	16.77049	E	105.44737	48	Q	547677.06	1854219.02	167
154			N	16.77036	E	105.44736	48	Q	547676.19	1854205.05	162
155			N	16.77023	E	105.44738	48	Q	547678.50	1854191.08	161
156			N	16.77017	E	105.44750	48	Q	547691.28	1854183.65	161
157			N	16.77010	E	105.44787	48	Q	547730.92	1854176.37	163
158			N	16.77006	E	105.44806	48	Q	547750.89	1854171.62	160
159			N	16.76997	E	105.44808	48	Q	547753.57	1854162.64	159
160			N	16.76990	E	105.44799	48	Q	547743.28	1854154.21	162
161			N	16.76981	E	105.44781	48	Q	547724.74	1854144.78	167
162			N	16.76980	E	105.44750	48	Q	547692.04	1854143.17	166
163			N	16.76980	E	105.44730	48	Q	547670.26	1854142.71	160
164			N	16.76976	E	105.44707	48	Q	547645.44	1854138.17	167
165			N	16.76973	E	105.44699	48	Q	547637.23	1854135.20	162
ຜົນໄດ້ຮັບ: ໄດ້ປັບປຸງລາຄາໃນການປັບໄໝສຳລັບຜູ້ທີ່ລະເມີດກົດລະບຽບໂດຍອີງໃສ່ປະເພດໄມ້ເນື້ອອ່ອນ ແລະ ເນື້ອແຂງ, ການກຳນົດກົດລະບຽບຍ່ອຍໃນການປັບໄໝເຊັ່ນ: ການບຸກລຸກປ່າໂດຍເຈດຕະນາ, ການຖາງປ່າ, ການຈູດປ່າ ແລະ ການນຳໃຊ້ຊັບພະຍາກອນແບບບໍ່ໄດ້ຮັບອະນຸຍາດ-ລະເມີດຕໍ່ກົດລະບຽບ, ການນຳໃຊ້ເຄື່ອງປ່າຂອງດົງ ແລະ ຜະລິດຕະຜົນຈາກປ່າ, ການນຳໃຊ້ສັດນ້ຳ-ສັດປ່າ, ການເພີ່ມກົດລະບຽບໃນການບໍລິຫານເງິນປັບໄໝ ແລະ ການສະໜັບສະໜຸນຜູ້ມີຜົນງານ

.

ຄັ້ງທີ 24: ເດືອນ 9 ປີ 2019

ຜູ້ເຂົ້າຮ່ວມ: ທັງໝົດ 15 ຄົນ ຍິງ 0 ຄົນ, ພະນັກງານອົງການເຈວີຊີ 2 ຄົນ, ພະນັກງານກະສິກຳ-ປ່າໄມ້ເມືອງ 1 ຄົນ ແລະ ພະນັກງານທີ່ດິນເມືອງ 1 ຄົນ, ນາຍບ້ານພ້ອມຄະນະ 10 ຄົນ.

ຫົວຂໍ້: ດອນຕົວຢ່າງປ່າໄມ້ເພື່ອເກັບກຳຄວາມຫຼາກຫຼາຍຂອງຊະນິດພັນ ແລະ ເຄື່ອງປ່າຂອງດົງ

ຜົນໄດ້ຮັບ: ໄດ້ສຸ່ມດອນຕົວຢ່າງປ່າໄມ້ເພື່ອເກັບກຳຄວາມຫຼາກຫຼາຍຂອງຊະນິດພັນ ແລະ ເຄື່ອງປ່າຂອງດົງ ສຳລັບປ່າໄມ້ຊຸມຊົນຂອງບ້ານເຊິ່ງວ່າໄດ້ແບ່ງອອກເປັນ 5 ຕອນຄື: ດອນທີ 1 ຊະນິດພັນໄມ້ 11 ຊະນິດ, ເຄື່ອງປ່າຂອງດົງ 2 ຊະນິດ, ດອນທີ 2 ຊະນິດພັນໄມ້ 9 ຊະນິດ, ເຄື່ອງປ່າຂອງດົງ 2 ຊະນິດ, ດອນທີ 3 ຊະນິດພັນໄມ້ 6 ຊະນິດ, ເຄື່ອງປ່າຂອງດົງ 2 ຊະນິດ, ດອນທີ 4 ຊະນິດພັນໄມ້ 11 ຊະນິດ, ເຄື່ອງປ່າຂອງດົງ 1 ຊະນິດ, ດອນທີ 5 ຊະນິດພັນໄມ້ 14 ຊະນິດ, ເຄື່ອງປ່າຂອງດົງ 1 ຊະນິດ, ຊະນິດພັນທີ່ພົບເຫັນຫຼາຍທີ່ສຸດແມ່ນໄມ້ກຸງ, ໄມ້ປົກ, ໄມ້ຈິກ, ໄມ້ແດງ, ໄມ້ອາລາງ, ໄມ້ຮັງ, ໄມ້ຊາດ ເນື່ອງຈາກເຂດນັ້ນປົກຫຸ້ມດ້ວຍປ່າປະສົມ ແລະ ປ່າໂຄກ.

ຄັ້ງທີ 25: ເດືອນ 9 ປີ 2019

ຜູ້ເຂົ້າຮ່ວມ: ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ 1 ຄົນ, ໂຄງການ 1 ຄົນ

ຫົວຂໍ້: ຕິດຕາມການລ້ຽງງົວ

ຜົນໄດ້ຮັບ: ໄດ້ຕິດຕາມການລ້ຽງງົວບ້ານໂນນຮັງ ເມືອງ ອາດສະພັງທອງ ຜ່ານການຕິດຕາມງົວທີ່ສະໜອງໃຫ້ທັງໝົດ 6 ໂຕ ປະຈຸບັນ ໄດ້ເກີດລູກຕື່ມອີກ 1 ໂຕ, ພ້ອມດຽວກັນນັ້ນທາງທີມງານແມ່ນໄດ້ສັກຢາວັກຊິນເພື່ອປ້ອງກັນພະຍາດເຕົ້າໂຮມເລືອດໃຫ້ງົວ ທັງໝົດ 4 ໂຕ.

ຄັ້ງທີ 26: ເດືອນ 10 ປີ 2019

ຜູ້ເຂົ້າຮ່ວມ: ທັງໝົດ 14 ຄົນ ຍິງ 0 ຄົນ, ພະນັກງານອົງການເຈວີຊີ 2 ຄົນ, ພະນັກງານກະສິກຳ-ປ່າໄມ້ເມືອງ 1 ຄົນ ແລະ ພະນັກງານທີ່ດິນເມືອງ 1 ຄົນ, ນາຍບ້ານພ້ອມຄະນະ 10 ຄົນ.

ຫົວຂໍ້: ປັບປຸງກົດລະບຽບສະບັບສຸດທ້າຍສຳລັບປ່າໄມ້ຊຸມຊົນຂອງບ້ານ

ຜົນໄດ້ຮັບ: ໄດ້ປັບປຸງລາຄາໃນການປັບໄໝສຳລັບຜູ້ທີ່ລະເມີດກົດລະບຽບໂດຍອີງໃສ່ປະເພດໄມ້ເນື້ອອ່ອນ ແລະ ເນື້ອແຂງ, ການກຳນົດກົດລະບຽບຍ່ອຍໃນການປັບໄໝເຊັ່ນ: ການບຸກລຸກປ່າໂດຍເຈດຕະນາ, ການຖາງປ່າ, ການຈູດປ່າ ແລະ ການນຳໃຊ້ຊັບພະຍາກອນແບບບໍ່ໄດ້ຮັບອະນຸຍາດ-ລະເມີດຕໍ່ກົດລະບຽບ, ການນຳໃຊ້ເຄື່ອງປ່າຂອງດົງ ແລະ ຜະລິດຕະຜົນຈາກປ່າ, ການນຳໃຊ້ສັດນ້ຳ-ສັດປ່າ, ການເພີ່ມກົດລະບຽບໃນການບໍລິຫານເງິນປັບໄໝ ແລະ ການສະໜັບສະໜູນຜູ້ມີຜົນງານ.

ຄັ້ງທີ 27: ເດືອນ 10 ປີ 2019

ຜູ້ເຂົ້າຮ່ວມ: ທັງໝົດ 30 ຄົນ, ພະນັກງານອົງການເຈວີຊີ 2 ຄົນ, ພະນັກງານກະສິກຳ-ປ່າໄມ້ເມືອງ 1 ຄົນ ແລະ ພະນັກງານທີ່ດິນເມືອງ 1 ຄົນ, ນາຍບ້ານພ້ອມຄະນະ 26 ຄົນ.

ຫົວຂໍ້: ປັບປຸງແຜນທີ່ຂອບເຂດຊາຍອດນບ້ານ

ຜົນໄດ້ຮັບ: ສຳເລັດການດັດແກ້-ປັບປຸງແຜນທີ່ຂອບເຂດບ້ານໂນນຮັງ-ໂພນຕາດ ແລະ ຈະນຳສະເໜີໃຫ້ປະຊາຊົນອີກຄັ້ງພາຍຫຼັງປັບປຸງສຳເລັດ.

ຄັ້ງທີ 28: ເດືອນ 10 ປີ 2019

ຜູ້ເຂົ້າຮ່ວມ: ທັງໝົດ 12 ຄົນ, ຊາບ້ານ 10 ຄົນ, ພະນັກງານອົງການເຈວີຊີ 2 ຄົນ, ພະນັກງານກະສິກຳ-ປ່າໄມ້ເມືອງ 1 ຄົນ.

ຫົວຂໍ້: ປະຊຸມເພື່ອວາງແຜນການເກັບຜົນຜະລິດເຂົ້າ

ຜົນໄດ້ຮັບ: ໄດ້ເຂົ້າຮ່ວມປະຊຸມກັບກຸ່ມສະມາຊິກປູກເຂົ້າເພື່ອວາງແຜນການເອົາຂໍ້ມູນການສົມທຽບເຂົ້າດ້ວຍການເຮັດແບບສຸ່ມໃຫ້ກຸ່ມສະມາຊິກແຕ່ລະຄົນເປັນຜູ້ປະຕິບັດນາຂອງເຂົ້າເຈົ້າເອງ ແລະ ທີມງານໄດ້ນຳພາທົດລອງປະຕິບັດຕົວຈິງມີ 1 ສະຖານທີ່ (1ນາ) ເພື່ອເປັນວິທີການຫຼືຮູບແບບການປະຕິບັດຕົວຈິງ

.

ຄັ້ງທີ 29: ເດືອນ 11 ປີ 2019

ຜູ້ເຂົ້າຮ່ວມ: ທັງໝົດ 15 ຄົນ, ຍິງ 1 ຄົນ, ພະນັກງານອົງການເຈວີຊີ 2 ຄົນ, ພະນັກງານກະສິກຳ-ປ່າໄມ້ເມືອງ 1 ຄົນ ແລະ ພະນັກງານທີ່ດິນເມືອງ 1 ຄົນ.

ຫົວຂໍ້: ຜ່ານກົດລະບຽບປ່າສະຫງວນຂອງບ້ານ ແລະ ນຳພາຜູ້ໃຫ້ທຶນຢ້ຽມຊົມຂອບເຂດປ່າສະຫງວນຂອງບ້ານ

ຜົນໄດ້ຮັບ: ນຳສະເໜີກົດລະບຽບປ່າສະຫງວນຂອງບ້ານ ແລະ ນຳພາຜູ້ໃຫ້ທຶນຢ້ຽມຊົມຂອບເຂດປ່າສະຫງວນຂອງບ້ານ.

ຄັ້ງທີ 30: ເດືອນ 11 ປີ 2019

ຜູ້ເຂົ້າຮ່ວມ: ຊາວບ້ານ 6 (ນາຍບ້ານໂນນຮັງ ທ ຄຳພັນ ແລະ ຄະນະບ້ານໂພນຕາດ), ທ ສີສະຫວັນ ພະນັກງານໂຄງການ ແລະ ທ ບົວຄຳ ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

ຫົວຂໍ້: ກວດການ້ຳບາດານເພື່ອກະກຽມການໃຊ້ນ້ຳຂອງຊາວບ້ານໃນລະດູແລ້ງ.

ຜົນໄດ້ຮັບ: ໄດ້ເອົາຂໍ້ມູນນ້ຳບາດານເພື່ອຕິດຕາມການສ້ອມແປງນ້ຳບາດານຂອງອາສາສະໝັກບ້ານເຫັນວ່າບ້ານໂນນຮັງ ແລະ ບ້ານໂພນຕາດມີນ້ຳບາດານທັງໝົດ 14 ບໍ່ ແລະ ເພ 1 ບໍ່, ເຊິ່ງເປັນບໍ່ຢູ່ໂຮງຮຽນໄດ້ແນະນຳໃຫ້ອາສາສະໝັກສ້ອມ ແປງນ້ຳບາດານສືບຕໍ່ໃນການສ້ອມແປງເອງ ເພາະວ່າທາງອາສາສະໝັກໄດ້ຮັບການຝຶກອົບຮົມແລ້ວໃນປີຜ່ານມາ ແລະ ໃນປີຜ່ານມາທາງໂຄງການໄດ້ມອບອຸປະກອນຂອງນ້ຳບາດານຈຳນວນໜຶ່ງໄວ້ໃຫ້ບ້ານແລ້ວ.

ຄັ້ງທີ 31: ເດືອນ 11 ປີ 2019

ຜູ້ເຂົ້າຮ່ວມ: ພະນັກງານເຈວີຊີ 1 ຄົນ, ພະນັກງານສະຫະພັນແມ່ຍິງແຂວງ 1 ກຸ່ມງານເມືອງ 2 ຄົນ, ກຸ່ມອາສາສະໝັກຂັ້ນບ້ານ 11 ຄົນ ແລະ ຊາວບ້ານ 80 ຄົນ, **ລວມທັ້ງໝົດ**: 84 ຄົນ, ຍິງ 50 ຄົນ.

ຫົວຂໍ້: ຝຶກອົບຮົມບົດບາດຍິງຊາຍໃຫ້ກັບກຸ່ມອາສາສະໝັກ 11 ຄົນ ເພື່ອໃຫ້ກຸ່ມດັ່ງກ່າວເຜີຍແຜ່ກັບຊາວບ້ານຕໍ່

ຜົນໄດ້ຮັບ: ໄດ້ຝຶກອົບຮົມບົດບາດຍິງຊາຍໂດຍການແນ່ໃສ່ໃຫ້ກຸ່ມອາສາສະໝັກເຜີຍແຜ່ຕໍ່ ເຊິ່ງໄດ້ເຮັດໂຕຈິງໃນ 3 ຫົວຂໍ້ເຊັ່ນ: ເພດ ແລະ ບົດບາດ, ການມີສ່ວນຮ່ວມຂອງແມ່ຍິງ ແລະ ຄວາມສະເໝີພາບລະຫວ່າງຍິງ-ຊາຍ.

ຄັ້ງທີ 32: ເດືອນ 12 ປີ 2019

ຜູ້ເຂົ້າຮ່ວມ: ທັງໝົດ 27 ຄົນ ຍິງ 12 ຄົນ, ພະນັກງານອົງການເຈວີຊີ 4 ຄົນ, ພະນັກງານກະຊວງການຕ່າງປະເທດ 1 ຄົນ, ກະຊວງກະສິກຳ ແລະ ປ່າໄມ້ 2 ຄົນ, ພະແນກການຕ່າງປະເທດ 1 ຄົນ, ພະແນກກະສິກຳ ແລະ ປ່າໄມ້ 3 ຄົນພະນັກງານຫ້ອງການກະສິກຳ-ປ່າໄມ້ເມືອງ 1 ຄົນ, ພະນັກງານຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມເມືອງ 1 ຄົນ, ພະນັກງານຫ້ອງການສາທາລະນະສຸກ 1 ຄົນ.

ຫົວຂໍ້: ນຳພາແຂກຈາກກະຊວງລົງຢ້ຽມຢາມບ້ານກິດຈະກຳໃນບ້ານເປົ້າໝາຍ

ຜົນໄດ້ຮັບ: ການປຶກສາຫາລືຮ່ວມກັບບ້ານ, ຄະນະບ້ານເພື່ອນຳສະເໜີຄວາມເປັນມາ, ຈຸດພິເສດ ແລະ ການເຂົ້າມາຊ່ວຍເຫຼືອຂອງໂຄງການ, ສະເໜີກ່ຽວກັບບັນດາກິດຈະກຳທີ່ໄດ້ປະຕິບັດພາຍໃນບ້ານ ແລະ ເບິ່ງກິດຈະກຳຕົວຈິງ ເຊັ່ນ: ສຳຫຼວດ ແລະ ແຕ້ມແຜນທີ່ຂອບເຂດບ້ານ, ປ່າໄມ້ຊຸມຊົນ, ນ້ຳບາດານ ແລະ ນ້ຳສ້າງ.

V. ເອກະສານຕິດຂັດ Appendix

ກ່ຽວກັບ ປ່າໄມ້ຊຸມຊົນ About Community Forest

ກຸມພາ ປີ 2020 February 2020

ຂຽນໂດຍ: ອົງການປົກຄອງບ້ານ ໂນນຮັງ ແລະ ອົງການອາສາສະໝັກຍີ່ປຸ່ນ (JVC)

ປ່າໄມ້ຊຸມຊົນທີ່ພົບກັນເຫັນທົ່ວໄປໃນປະເທດລາວແມ່ນພື້ນທີ່ປ່າໄມ້ລວມຂອງປະຊາຊົນທ້ອງຖິ່ນ ຫຼື ການບໍລິຫານນຳໃຊ້ປ່າໄມ້ໃນລະດັບທ້ອງຖິ່ນ ເຊິ່ງຕິດພັນກັບຊີວິການເປັນຢູ່ຂອງພວກເຂົາເຈົ້າ. ປ່າໄມ້ດັ່ງກ່າວໄດ້ບໍລິຫານ ແລະ ນຳໃຊ້ໂດຍທີ່ປະຊາຊົນມີສ່ວນຮ່ວມເພື່ອເປັນປະໂຫຍດສ່ວນລວມຂອງປະຊາຊົນທີ່ຢູ່ອາໄສເຂດໃກ້ຄຽງ. ຕົວຢ່າງວ່າທັງເປັນບ່ອນຮັກສາ ແລະ ສະໜອງຊັບພະຍາກອນປ່າໄມ້ທາງດ້ານສະບຽງອາຫານ, ວັດຖຸຈຳເປັນໃນການດຳລົງຊີວິດ ແລະ ແຫຼ່ງລາຍຮັບ ເຊັ່ນ: ບັນດາເຄື່ອງປ່າຂອງດົງ, ສັດນ້ຳ-ສັດປ່າ, ໄມ້ທ່ອນ ແລະ ຍັງເປັນສະຖານທີ່ທາງດ້ານຮີດຄອງປະເພນີ, ຄວາມເຊື່ອຖືສະເພາະຂອງປະຊາຊົນ, ບ່ອນທ່ອງທ່ຽວ ແລະ ອື່ນໆນຳອີກ. ແຕ່ປ່າໄມ້ຊຸມຊົນຈະບໍ່ໄດ້ລວມກິດຈະການປ່າໄມ້ທີ່ເປັນອຸດສາຫະກຳຂະໜາດໃຫຍ່ ຫຼື ກິດຈະການປ່າໄມ້ທີ່ໄດ້ຮັບຜົນຕອບແທນພຽງເປັນຄ່າຈ້າງແຮງງານເທົ່ານັ້ນ.

ຢູ່ຫຼາຍບ້ານໃນເຂດຊົນນະບົດປະເທດລາວມີຊາວບ້ານຈຳນວນຫຼາຍທີ່ການເກັບກ່ຽວຜະລິດຕະພັນປ່າໄມ້ ແລະ ສັດນ້ຳເປັນວິທີການຕົ້ນຕໍສຳລັບໄດ້ເຂົ້າກິນໂດຍການແລກປ່ຽນ. ເພື່ອໃຫ້ປະຊາຊົນເຂດຊົນນະບົດດຳລົງຊີວິດຢ່າງໝັ້ນຄົງສິ່ງສຳຄັນແມ່ນການຄຸ້ມຄອງປ່າໄມ້ ແລະ ສາຍນ້ຳທີ່ໃກ້ຄຽງບ້ານເປັນຂອງຊາວຕົນເອງໂດຍການຮ່ວມກັບພາກສ່ວນກ່ຽວຂ້ອງ.

ເຖິງຢ່າງໃດກໍ່ຕາມ, ການປ່ຽງແປງຂອງສະພາບແວດລ້ອມມີຜົນກະທົບຢ່າງຫຼວງຫຼາຍຕໍ່ກັບປະຊາຊົນໂດຍສະເພາະຜູ້ທີ່ຢູ່ອາໄສເຂດຊົນນນະບົດ. ໂດຍສະເພາະແມ່ນການເຊື່ອມໂຊມຂອງສະພາບປ່າໄມ້, ການຫຼຸດລົງຂອງເຄື່ອງປ່າຂອງດົງເປັນອາຫານ, ການຫຼຸດລົງຂອງຊີວະນາໆພັນ ແລະ ອື່ນໆ. ການເພີ່ມຂຶ້ນຂອງກິດຈະກຳການພັດທະນາ ແລະ ການລົງທຶນແມ່ນໄດ້ເພີ່ມຄວາມກົດດັນຕໍ່ກັບສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດທີ່ປະຊາຊົນຊົນນະບົດນຳໃຊ້. ນອກນັ້ນຍັງມີກໍລະນີການຮັກສາສິ່ງແວດລ້ອມຫ້າມການນຳໃຊ້ຊັບພະຍາກອນປ່າໄມ້ຂອງປະຊາຊົນນຳອີກ.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ໄດ້ກ່າວວ່າ ເພື່ອວຽກການປົກປັກຮັກສາສະພາບແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ, ຈະມີນະໂຍບາຍການຮັກສາ ແລະ ຄຸ້ມຄອງແຫລ່ງນ້ຳ, ການຄ້ຳປະກັນແຫຼ່ງອາຫານ ແລະ ນະໂຍບາຍສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງໃນການຮັກສາຄວາມສົມດຸນລະຫວ່າງການປົກປັກຮັກສາ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ ເຊັ່ນ: ຄວາມສົມດຸນຂອງລະບົບນິເວດ, ການຟື້ນຟູດິນ, ນ້ຳ ແລະ ປ່າໄມ້[3]. ປ່າໄມ້ຊຸມຊົນແມ່ນມາດຕະການໜຶ່ງໃນການວຽກງານປົກປັກຮັກສາສະພາບແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ.

ອີງຕາມກົດໝາຍການປົກປັກຮັກສາສິ່ງແວດລ້ອມ (ປີ 2012 ສະບັບປັບປຸງ) ມາດຕາ 82, ໜ່ວຍງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂອງບ້ານມີໜ້າທີ່ ແລະ ສິດໃນການສ້າງລະບຽບການຄຸ້ມຄອງລະບຽບການ ແລະ ພັດທະນາໃນປ່າໄມ້ຊຸມຊົນໃນຂອບເຂດບ້ານຂອງຕົນ. ແລ້ວປ່າໄມ້ຊຸມຊົນບາງທີອາດຈະໄດ້ສ້າງເປັນປ່າສະຫງວນ ແລະ ປ່າປ້ອງກັນລະດັບບ້ານ (ດຳລັດວ່າດ້ວຍປ່າສະຫງວນ ເລກທີ ປີ 2015 ແລະ ດຳລັດວ່າດ້ວຍປ່າປ້ອງກັນ ປີ 2010).

ເຖິງຢ່າງໃດກໍ່ຕາມ, ເພື່ອຮັບປະກັນປະຊາຊົນສາມາດນຳໃຊ້ຊັບພະຍາກອນປ່າໄມ້ທີ່ມີຄວາມໝັ້ນຄົງ ສິ່ງສຳຄັນແມ່ນບໍ່ພຽງແຕ່ຊາວບ້ານຄວບຄຸມການນຳໃຊ້ຊັບພະຍາກອນທຳມະຊາດເອງເທົ່ານັ້ນ, ແຕ່ຍັງຕ້ອງຮຽນຮູ້ກ່ຽວກັບການປ່ຽນແປງຂອງສະພາບແວດລ້ອມໃນທ້ອງຖິ່ນ ແລະ ຕອບສະໜອງການປ່ຽນແປງ ຫຼື ເຫດການຕ່າງໆໂດຍທີ່ຮ່ວມມືກັບບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ເຊັ່ນ: ຫຼີກລ້ຽງການຂະຫຍາຍພື້ນທີ່ກະສິກຳ, ສຳປະທານທີ່ດິນເພື່ອດຳເນີນກິດຈະກຳສວນປູກແບບຝຸ່ມເຝືອຍ ຫຼື ການຈຳກັດບໍ່ໃຫ້ປະຊາຊົນນຳໃຊ້ຊັບພະຍາກອນຫຼາຍເກີນໄປ.

[3]ກະຊວງແຜນການ ແລະ ການລົງທຶນ, 2016: ໜ້າທີ 125.

■ກ່ຽວກັບ ປ່າໄມ້ຊຸມຊົນດົງຂວາງ ຂອງບ້ານ ໂນນຮັງ About Dong Khvang Community Forest of Nonhang Village

ກຸມພາ ປີ 2020 February 2020

ຂຽນໂດຍ: ອົງການປົກຄອງບ້ານ ໂນນຮັງ ແລະ ອົງການອາສາສະໝັກຍີ່ປຸ່ນ (JVC)

Written by: Nonhang Village Authority and Japan International Volunteer Center (JVC)

ດົງຂວາງ ແມ່ນພື້ນທີ່ປ່າໄມ້ຂອງບ້ານ ໂນນຮັງ (ລວມທັງຄຸ້ມໂນນຮັງ ແລະ ຄຸ້ມໂພນຕາດ) ເຊິ່ງຕັ້ງຢູ່ເຂດບ້ານ ໂພນຕາດ ແລະ ຢູ່ທິດຕາເວັນອອກສ່ຽງເໜືອຂອງຂອບເຂດໝູ່ບ້ານໂນນຮັງ. ມີເນື້ອທີ່ທັງໝົດ 43 ເຮັກຕາ. ເຖິງແມ່ນວ່າເນື້ອທີ່ດິນນອກຈາກເຂດປູກສ້າງ ແລະ ດິນນາມີ 488 ເຮັກຕາ ເທົ່າກັບ 17.9 % ຂອງເນື້ອທີ່ດິນຂອບເຂດບ້ານທັງໝົດ 2,731 ເຮັກຕາ, ເນື້ອທີ່ປ່າໄມ້ລວມຂອງບ້ານ ຫຼື ດິນເປົ່າຫວ່າງ (ບໍ່ມີການຈັບຈອງ) ປະມານ153 ເຮັກຕາ ເທົ່າກັບ 5.6 %ໃນຂອບເຂດບ້ານທັງໝົດ. (ເບິ່ງຮູບ 'ແຜນທີ່ສະແດງຂອບເຂດປ່າສະຫງວນ ດົງຂວາງ ຂອງບ້ານໂນນຮັງ (ໂພນຕາດ)' ແລະ ຕ່າງໆ ໃນ V. ເອກສານຕິດຄັດ). ດັ່ງນັ້ນປ່າດັ່ງກ່າວທີ່ເປັນຂອງລວມບ້ານ ແລະ ບ່ອນແຫຼ່ງອາຫານຂອງຊາວບ້ານມີຄວາມຫາຍາກໃນບ້ານ.

ປ່າດັ່ງກ່າວສ້າງຕັ້ງຂຶ້ນເປັນປ່າໄມ້ບ້ານເມື່ອ ປີ 1997 ໂດຍປະຊາຊົນບ້ານໂພນຕາດ ແລະ ປີ 1998 ໄດ້ຮັບການວັດແທກຂອບເຂດຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ອາດສະພັງທອງ. ກົດລະບຽບໃນການຄຸ້ມຄອງແມ່ນຜ່ານມາໄດ້ສ້າງຕັ້ງຄະນະກຳມະການໃນການຄຸ້ມຄອງປ່າໄມ້ດັ່ງກ່າວສາມາດນຳໃຊ້ທຸກຢ່າງຖ້າເປັນແບບບໍ່ດັບສູນໃນເຂດປ່າດັ່ງກ່າວຍົກເວັ້ນໄມ້ທ່ອນ (ນ້ອຍ-ໃຫຍ່) ຕະຫຼອດປີ. ບໍ່ໃຫ້ມີການບຸກເບີກເຂດຕອນດິນໃດໆໃນເຂດປ່າໄມ້ຊຸມຊົນນັ້ນ, ຜ່ານມາພາຍຫຼັງການສຳຫຼວດຂອບເຂດໄດ້ຕິດຕັ້ງປ້າຍ ແຕ່ປະຈຸບັນແມ່ນເປ້ເຜສູນຫາຍແລ້ວ. ປະຈຸບັນໃນແຕ່ລະປີ ຄຸ້ມໂນນຮັງ ແລະ ຄຸ້ມໂພນຕາດໄດ້ເອົາສີສະເປໄປສີດໃສ່ຕົ້ນໄມ້ ເພື່ອເປັນຫຼັກໝາຍເຂດແດນປ່າດັ່ງກ່າວ. ເນື້ອໃນຂອງລະບຽບ ການປັບໄໝ ມູນຄ່າທີ່ຈະປັບໄໝຕໍ່ຜູ້ລະເມີດກົດລະບຽບນັ້ນແມ່ນ ອີງໃສ່ຊະນິດໄມ້ທີ່ຜູ້ລະເມີດໄດ້ຕັດໄມ້ ແລະ ຍຶດຂອງກາງ ໂດຍອີງໃສ່ລາຄາໃນທ້ອງຖິ່ນ ໂດຍປະກອບມີ 3 ຄັ້ງ. ເງື່ອນໄຂສຳລັບການນຳໃຊ້: ອຳນາດການປົກຄອງທັງສອງບ້ານ ແລະ ປະຊາຊົນປຶກສາຫາລືກ່ອນການນຳໃຊ້ໄມ້ໃນປ່າດັ່ງກ່າວ ໂດຍສະເພາະການນຳໃຊ້ເພື່ອສ່ວນລວມເຊັ່ນ: ການສ້າງວັດ, ສ້າງໂຮງຮຽນ ແລະ ອື່ນ (ຜູ້ໃຫ້ຂໍ້ມູນ ຄົນ ຄຳພັນ ນາຍບ້ານ ໂນນຮັງ, ທອງໄຊ ຮອງນາຍບ້ານ ໂນນຮັງ).

ການຄຸ້ມຄອງປ່າໄມ້ຊຸມຊົນ (ດົງຂວາງ) ໃນໄລຍະຜ່ານມາປະຊາຊົນບ້ານ ໂນນຮັງ ນຳໃຊ້ກົດລະບຽບພາຍໃນທ້ອງຖິ່ນ ແລະ ກຳນົດພື້ນທີ່ປ່າໄມ້ດ້ວຍພວກເຂົາເອງ ເຊິ່ງຢູ່ພາຍໃນຂອບເຂດຂອງບ້ານ ຈຸດປະສົງໃນການສ້າງຕັ້ງປ່າໄມ້ຊຸມຊົນຂອງພວກເຂົາກໍ່ເພື່ອຮັກສາຊັບພະຍາກອນຕ່າງໆໂດຍປ້ອງກັນການລັກລອບຕັດຕົ້ນໄມ້ທີ່ຜິດກົດໝາຍ, ການຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ການປ້ອງກັນການຈັບຈອງທີ່ດິນແບບຊະຊາຍ.

ແຕ່ໃນເວລາດຽວກັນອາດຈະມີຄົນທີ່ຢາກຂະຫຍາຍພື້ນທີ່ກະສິກຳເຂົ້າໃນເຂດດັ່ງກ່າວ. ເພື່ອບໍ່ຢາກໃຫ້ມີຜົນກະທົບຕໍ່ການຂະຫຍາຍແນວນັ້ນສຳລັບເຮັດນາເປັນວິຖີການດຳລົງຊີວິດຕົ້ນຕໍຂອງຊາວບ້ານ ໄດ້ສົນທະນາພິຈາລະນາສົມດຸນກົດລະບຽບ ແລະ ການນຳໃຊ້ຂອງປະຊາຊົນ. ໃນສຸດທ້າຍແລ້ວຕົກລົງກັນເຫັນດີວ່າສະຫງວນເຂດດັ່ງກ່າວ ເພາະຍັງມີບ່ອນທີ່ປະຊາຊົນຖ່າງ ແລະ ກຳນົດເຂດຄືເກົ່າ.

ດົງຂວາງມີຄວາມອຸດົມສົມບູນທາງດ້ານຊັບພະຍາກອນທຳມະຊາດ ແລະ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ມີສາຍຫ້ວຍດົງຂວາງ (ດົງຂວາງເປັນຍອດນ້ຳຂອງຫ້ວຍ), (ເບິ່ງຮູບແຜນທີ່ ແລະ ຕາຕະລາງຕ່າງໆ' ໃນ V. ເອກສານຕິດຄັດ).

ເພື່ອຄຸ້ມຄອງບໍ່ໃຫ້ມີການບຸກເບີກເຂດປ່າໄມ້ຊຸມຊົນນັ້ນ ແລະ ໃຫ້ເພີ່ມໂອກາດຊາວບ້ານສາມາດນຳໃຊ້ເຄື່ອງປ່າຂອງດົງ ແລະ ສັດປ່າ-ສັດນ້ຳເພື່ອນຳໃຊ້ພາຍໃນຄອບຄົວ ແລະ ນຳໃຊ້ໄມ້ເພື່ອສາທາລະນະປະໂຫຍດຂອງບ້ານແບບຍືນຍົງ ເປັນປ່າສະຫງວນທີ່ຄຸ້ມຄອງການນຳໃຊ້ຊັບພະຍາກອນລະດັບບ້ານ, ກົດລະບຽບເຫຼົ່ານີ້ຖືກສ້າງຕັ້ງຂຶ້ນຕາມປະເພນີທີ່ໄດ້ຈັດຕັ້ງປະຕິບັດ ແລະ ໂດຍຜ່ານການປັບປຸງບາງສ່ວນ ເຊິ່ງມາເປັນເອກະສານທາງການໂດຍການຮັບຮອງເອົາຈາກເຈົ້າເມືອງ ອີງຕາມກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ), ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ປີ 2012, ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ ປີ 2007 ແລະ ອີງໃສ່ດຳລັດ ວ່າດ້ວຍປ່າສະຫງວນ ສະບັບເລກທີ 134 ປີ 2015.

ດົງຂວາງເປັນປ່າໂຄກ ແລະ ປ່າເຫຼົ້າເປັນສ່ວນຫຼາຍ ແລະ ໂອກາດຖືກທຳລາຍໜ້ອຍ ເຊິ່ງເໝາະສົມສຳລັບ ເຄື່ອງປ່າຂອງດົງ

ບາງຊະນິດ ແລະ ສັດປ່າ-ສັດນ້ຳໃນການອາໄສຢູ່ ແລະ ປະສົມພັນ. ພວກມັນຈະສາມາດແຜ່ພັນ ຫຼື ເຄື່ອນຍ້າຍໄປບ່ອນອື່ນ ແລະ ສາມາດເປັນແຫຼ່ງອາຫານສຳລັບຊາວບ້ານ. ປ່າດັ່ງກ່າວມີໜ້າທີ່ຮັບປະກັນສະບຽງອາຫານໃຫ້ແກ່ຊາວບ້ານ ແລະ ຍັງເປັນປ່າປ້ອງກັນຍອດນ້ຳຂອງຫ້ວຍນຳອີກ. ການໄດ້ຮັບການສະໜອນຄຸ້ມຄອງພື້ນທີ່ດັ້ງກ່າວເປັນແຫຼ່ງອາຫານທຳມະຊາດ, ການຮັບຮູ້ການປ່ຽນແປງຂອງສະພາບແວດລ້ອມ ແລະ ການຕອບສະໜອງຕໍ່ສິ່ງເຫຼົ່ານີ້ໂດຍນຳໃຊ້ຕາຕະລາງຂໍ້ມູນເຄື່ອງປ່າຂອງດົງ, ໄມ້ ແລະ ສັດນ້ຳ-ສັດປ່າ (ຕາຕະລາງ1-3 ໃນ 'ເອກະສານຊ້ອນທ້າຍ') ແລະ ຕ່າງໆ ຈະເປັນປະໂຫຍດໃນການຮັບປະກັນວິທີຫາກິນສຳລັບຊາວບ້ານ ແລ້ວອາໄສ , ຈະເຮັດໃຫ້ຊີວິດການເປັນຢູ່ຂອງຊາວບ້ານມີຄວາມໝັ້ນຄົງ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງສະຫວັນນະເຂດ

ເມືອງ ອາດສະພັງທອງ

ບ້ານ ໂນນຮັງ

ເລກທີ.51/ລນ.ອຫ

ວັນທີ.30/1/2020

ກົດລະບຽບວ່າດ້ວຍການຄຸ້ມຄອງປ່າສະຫງວນ ດົງຂວາງ ຂອງບ້ານໂນນຮັງ (ໂພນຕາດ) ເມືອງ ອາດສະພັງທອງ ແຂວງ ສະຫວັນນະເຂດ

- ອີງຕາມກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມີຖຸນາ 2019.
- ອີງຕາມມາດຕາ 82 ຂອງກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ເລກທີ 29/ສພຊລົງວັນທີ 18 ທັນວາ 2012
- ອີງຕາມມາດຕາ 3 ຂໍ້ 14,15,16, ມາດຕາ 25, ມາດຕາ 52 ຂໍ້ 4, 5, 6, 7 ມາດຕາ 57 ຂໍ້ 2, ມາດຕາ 66, 67, 70, 71 ຂໍ້ 2, 3 ຂອງກົດໝາຍວ່າດ້ວຍ ສັດນ້ຳ-ສັດປ່າ ສະບັບເລກທີ 07/ສພຊລົງ ວັນທີ 24 ທັນວາ 2007
- ອີງໃສ່ດຳລັດວ່າດ້ວຍ ປ່າສະຫງວນ ສະບັບເລກທີ 134/ລບ ລົງວັນທີ 13 ພຶດສາພາ
- ອີງໃສ່ກອງປະຊຸມປຶກສາຫາລືຂອງຄະນະບ້ານ ແລະ ອົງການປົກຄອງບ້ານ ແລະ ປະຊາຊົນພາຍໃນບ້ານ ໂນນຮັງ (ໂພນຕາດ) ເມືອງ ອາດສະພັງທອງ ແຂວງສະຫວັນນະເຂດ, ຄັ້ງວັນທີ 24 ກໍລະກົດ, 5, 6, 19 ກັນຍາ 3 ຕຸລາ, 8 ພະຈິກ 2019 ວ່າດ້ວຍການກຳນົດກົດລະບຽບການຄຸ້ມຄອງປ່າສະຫງວນ ດົງຂວາງ ຂອງບ້ານໂນນຮັງ.

ມາດຕາ 1: ວ່າດ້ວຍຈຸດປະສົງ

1. ເພື່ອເປັນການຮັກສາລະບົບນິເວດ, ທີ່ດິນ, ປ່າໄມ້ ແລະ ສັດປ່າ ໃນເຂດປ່າດົງຂວາງຈາກການຖືກບຸກລຸກ-ທຳລາຍ ໃຫ້ມີຄວາມອຸດົມສົມບູນ ແລະ ໃຫ້ເພີ່ມໂອກາດຊາວບ້ານສາມາດນຳໃຊ້ປ່າໄມ້, ໄມ້ ແລະ ເຄື່ອງ ປ່າຂອງດົງ ເພື່ອຄອບຄົວ ແລະ ສາທາລະນະປະໂຫຍດຂອງບ້ານແບບຍືນຍົງ.
2. ເພື່ອເປັນແບບຢ່າງໃຫ້ລູກຫຼານໃນການຮັກສາປ່າໄມ້ ແລະ ເປັນບ່ອນຖອດຖອນບົດຮຽນໃຫ້ແກ່ບ້ານອື່ນ.

ມາດຕາ 2: ອ່າດ້ວຍຂອບເຂດຊາຍແດນ

ອີງໃສ່ຫານສຳຫຼວດປ່າສະຫງວນຂອງບ້ານ ດົງຂວາງນີ້ ຄັ້ງວັນທີ 21 ພຶດສະພາ, 24 ກໍລະກົດ, 21 ສິງຫາ20 ກັນຍາ 2019, ຂໍ້ມູນທີ່ຕັ້ງ ແລະ ພູມສັນຖານ: ດົງຂວາງ ຫຼື ປ່າສະຫງວນຂອງບ້ານໂນນຮັງ (ໂພນຕາດ) ຕັ້ງຢູ່ເສັ້ນ ແວງທີ 105°25'13.08"E ຫາ ເສັ້ນຂະໜານທີ 16°46'22.05"N ລະດັບຄວາສູງຈາກລະດັບໜ້ານ້ຳທະເລ ສູງ ສຸດ 167M.asl ແລະ ຕ່ຳສຸດ 159M.asl ໄລຍະຫ່າງຈາກເຂດປູກສ້າງບ້ານ ໂພນຕາດ 2.5 ກິໂລແມັດ, ຈາກເຂດ ປູກສ້າງບ້ານ ໂນນຮັງ 5.5 ກິໂລແມັດ, ສຳນັກງານປົກຄອງເມືອງອາດສະພັງທອງປະມານ 17 ກິໂລແມັດໃນ ທິດຕາເວັນອອກສ່ຽງເໜືອ.

ໄດ້ກຳນົດເອົາເຂດດົງຂວາງ ເປັນປ່າສະຫງວນຂອງບ້ານ ໂນນຮັງ (ໂພນຕາດ) ເຊິ່ງມີເນື້ອທີ່ທັງໝົດ 43 ເຮັກຕາ:

- ທິດເໜືອ (N): ຕິດກັບດິນ ທ. ທິດໂນນ ແລະ ທ. ແປ້
- ທິດໃຕ້ (S): ຕິດກັບດິນ ທ. ຄຳພັນ
- ທິດຕາເວັນອອກ (E): ຕິດກັບດິນ ທ. ນັ່ງ, ທ. ແປ້ ແລະ ທ. ບຸນປອງ
- ທິດຕາເວັນຕົກ (W): ຕິດກັບດິນ ທ. ເສີດ (ນ້ອຍ), ທ. ຊຽນ ແລະ ທ. ລັ່ງ (ໃຫຍ່)

ລາຍລະອຽດຂອງຂອບເຂດ ແລະ ທີ່ຕັ້ງແມ່ນແຜນທີ່ ແລະ ລາຍການຈຸດພິກັດດັ່ງລຸ່ມ



Map Legend ເຄື່ອງໝາຍແຜນທີ່

- GPS Points ຈຸດພິກັດ ຈີພີເອັດ

River line ສາຍນ້ຳ
- River ຫ້ວຍໃຫຍ
- Stream ຫ້ວຍນ້ອຍ
- Small stream ຮ່ອງນ້ຳ

Road condition ສະພາບເສັ້ນທາງ
- Temporary road ທາງຊົ່ວຄາວ
- Unpaved road ທາງດິນແດງ
- Community Forest ເຂດປ່າຊຸມຊົ່ມ

Contour line ເສັ້ນລະດັບຄວາມສູງ
- ເສັ້ນລະດັບຄວາມສູງຫຼັກ
- ເສັ້ນລະດັບຄວາມສູງທາງ
- ເສັ້ນລະດັບຄວາມສູງສຳຮອງ

ສະໜັບສະໜູນໂດຍ: ອົງການອາສາສະໝັກປີ່ປຸ່ນ Japan International Volunteer Center (JVC)

ແຫ່ງຂໍ້ມູນ: ກົມແຜນທີ່ແຫ່ງຊາດ (NGD) ພາບຖ່າຍທາງອາກາດປີ 2012. Aerial Photos Data Source

ຮູບທີ1: ແຜນທີ່ສະແດງຂອບເຂດປ່າສະຫງວນ ດົງຂວາງ ຂອງບ້ານໂນນຮັງ (ໂພນຕາດ)



ຮູບທີ2: ແຜນທີ່ສະແດງຂອບເຂດ ແລະ ລາຍລະອຽດປ່າສະຫງວນ ດົງຂວາງ ຂອງບ້ານໂນນຮັງ (ໂພນຕາດ)

1 ປ່າສະຫງວນ (ປ່າໄມ້ຊຸມຊົນ) ຂອງ ບ້ານ ໂນນຮັງ (ໂພນຕາດ)

ລຳດັບ		ລາຍລະອຽດ	ຂໍ້ມູນ GPS ລະບັບ CRS: WGS 1984 / UTM Zone 48N					ຄວາມສູງ (ແມັດ / m)
ເລກທີ	ລະຫັດໃນແຜ່ນທີ່	ບໍລິເວນຈຸດພິກັດ	ເສັ້ນຂະໜານ	ເສັ້ນແວງ	UTM			
						X	Y	
1	B01	ຕົ້ນແດງ	N 16.7689	E 105.4206	48	Q 544827.99	1854037.51	160
2	B02	ຕົ້ນເປືອຍ	N 16.7689	E 105.4205	48	Q 544815.42	1854035.28	159
3	B03	ຕົ້ນຊາດ	N 16.7690	E 105.4204	48	Q 544800.60	1854050.68	162
4	B04	ຕົ້ນແດງ	N 16.7691	E 105.4202	48	Q 544779.12	1854062.40	167
5	B05	ຕົ້ນເປືອຍ	N 16.7692	E 105.4199	48	Q 544751.00	1854071.89	166
6	B06	ຕົ້ນຊາດ	N 16.7693	E 105.4196	48	Q 544715.50	1854076.96	160
7	B07	ຕົ້ນແດງ	N 16.7694	E 105.4192	48	Q 544678.49	1854093.05	167
8	B08	ຕົ້ນເປືອຍ	N 16.7695	E 105.4191	48	Q 544661.45	1854105.51	162
9	B09	ຕົ້ນຊາດ	N 16.7695	E 105.4187	48	Q 544623.74	1854104.70	161
10	B10	ຕົ້ນແດງ	N 16.7694	E 105.4186	48	Q 544614.16	1854088.51	161
11	B11	ຕົ້ນເປືອຍ	N 16.7694	E 105.4185	48	Q 544597.87	1854096.56	163
12	B12	ຕົ້ນຊາດ	N 16.7696	E 105.4183	48	Q 544577.14	1854109.01	160
13	B13	ຕົ້ນແດງ	N 16.7694	E 105.4179	48	Q 544535.76	1854090.55	165
14	B14	ຕົ້ນເປືອຍ	N 16.7693	E 105.4177	48	Q 544511.39	1854075.80	160
15	B15	ຕົ້ນຊາດ	N 16.7692	E 105.4175	48	Q 544492.91	1854070.61	159
16	B16	ຕົ້ນແດງ	N 16.7692	E 105.4174	48	Q 544485.51	1854074.27	162
17	B17	ຕົ້ນເປືອຍ	N 16.7691	E 105.4172	48	Q 544466.31	1854058.80	167
18	B18	ຕົ້ນຊາດ	N 16.7691	E 105.4169	48	Q 544432.30	1854055.79	166
19	B19	ຕົ້ນແດງ	N 16.7692	E 105.4167	48	Q 544410.84	1854065.30	160
20	B20	ຕົ້ນຊາດ	N 16.7692	E 105.4166	48	Q 544402.68	1854074.10	167
21	B21	ຕົ້ນບົກ	N 16.7693	E 105.4166	48	Q 544398.24	1854078.50	162
22	B22	ຕົ້ນອາລາງ	N 16.7695	E 105.4165	48	Q 544387.09	1854102.73	161
23	B23	ຕົ້ນຊາດ	N 16.7696	E 105.4164	48	Q 544376.71	1854116.67	161
24	B24	ຕົ້ນບົກ	N 16.7699	E 105.4164	48	Q 544375.90	1854149.01	163
25	B25	ຕົ້ນຮັງ	N 16.7706	E 105.4164	48	Q 544379.63	1854221.78	163
26	B26	ຕົ້ນຊາດ	N 16.7708	E 105.4163	48	Q 544366.28	1854242.33	160
27	B27	ຕົ້ນຈິກ	N 16.7711	E 105.4163	48	Q 544367.68	1854278.35	165
28	B28	ຕົ້ນຊາດ	N 16.7713	E 105.4164	48	Q 544380.21	1854301.16	160
29	B29	ຕົ້ນບົກ	N 16.7717	E 105.4168	48	Q 544422.09	1854340.94	159
30	B30	ຕົ້ນອາລາງ	N 16.7724	E 105.4175	48	Q 544492.90	1854427.81	162
31	B31	ຕົ້ນຊາດໃຫຍ່	N 16.7729	E 105.4176	48	Q 544509.06	1854481.50	167
32	B32	ຕົ້ນບົກ	N 16.7732	E 105.4177	48	Q 544516.39	1854510.91	166
33	B33	ຕົ້ນກຸງ	N 16.7736	E 105.4179	48	Q 544537.74	1854557.26	160
34	B34	ຕົ້ນພອກ	N 16.7737	E 105.4181	48	Q 544559.90	1854570.53	167
35	B35	ຕົ້ນຍາງ	N 16.7741	E 105.4183	48	Q 544579.05	1854607.32	162
36	B36	ຕົ້ນຈິກນ້ອຍ	N 16.7745	E 105.4183	48	Q 544577.45	1854661.71	161
37	B37	ຕົ້ນຮັງ	N 16.7751	E 105.4183	48	Q 544583.25	1854717.58	161
38	B38	ຕົ້ນແດງ	N 16.7760	E 105.4187	48	Q 544622.79	1854817.61	163
39	B39	ຕົ້ນຈິກ	N 16.7761	E 105.4188	48	Q 544629.41	1854832.33	160
40	B40	ຕົ້ນຊາດ	N 16.7762	E 105.4188	48	Q 544630.13	1854844.09	165
41	B41	ຕົ້ນບົກ	N 16.7765	E 105.4189	48	Q 544645.59	1854877.19	160
42	B42	ຕົ້ນອາລາງນ້ອຍ	N 16.7766	E 105.4190	48	Q 544648.51	1854891.16	159
43	B43	ຕົ້ນຊາດ	N 16.7768	E 105.4190	48	Q 544655.86	1854916.17	162
44	B44	ຕົ້ນບົກ	N 16.7771	E 105.4191	48	Q 544658.75	1854944.84	167
45	B45	ຕົ້ນກຸງ	N 16.7773	E 105.4192	48	Q 544671.83	1854970.59	166
46	B46	ຕົ້ນພອກ	N 16.7777	E 105.4194	48	Q 544696.90	1855005.18	160
47	B47	ຕົ້ນຍາງ	N 16.7777	E 105.4195	48	Q 544704.27	1855012.55	167
48	B48	ຕົ້ນຈິກ	N 16.7780	E 105.4197	48	Q 544724.91	1855043.46	162
49	B49	ຕົ້ນຮັງໃຫຍ່	N 16.7780	E 105.4197	48	Q 544730.08	1855048.61	161
50	B50	ຕົ້ນຊາດ	N 16.7780	E 105.4200	48	Q 544758.94	1855040.59	161
51	B51	ຕົ້ນຈິກ	N 16.7779	E 105.4202	48	Q 544776.69	1855037.69	163
52	B52	ຕົ້ນຊາດ	N 16.7777	E 105.4205	48	Q 544811.50	1855012.04	160
53	B53	ຕົ້ນບົກ	N 16.7775	E 105.4209	48	Q 544855.18	1854988.61	165
54	B54	ຕົ້ນອາລາງ	N 16.7774	E 105.4211	48	Q 544872.95	1854978.36	160
55	B55	ຕົ້ນຊາດ	N 16.7772	E 105.4214	48	Q 544912.18	1854959.34	159
56	B56	ຕົ້ນບົກ	N 16.7770	E 105.4218	48	Q 544949.95	1854936.63	162
57	B57	ຕົ້ນກຸງນ້ອຍ	N 16.7769	E 105.4219	48	Q 544959.59	1854921.95	167
58	B58	ຕົ້ນພອກ	N 16.7768	E 105.4220	48	Q 544968.48	1854916.83	166
59	B59	ຕົ້ນຍາງ	N 16.7767	E 105.4223	48	Q 545002.33	1854905.88	160
60	B60	ຕົ້ນຈິກ	N 16.7764	E 105.4225	48	Q 545030.52	1854864.04	167
61	B61	ຕົ້ນຮັງ	N 16.7760	E 105.4227	48	Q 545046.89	1854817.78	162
62	B62	ຕົ້ນຊາດ	N 16.7755	E 105.4228	48	Q 545055.12	1854772.96	161
63	B63	ຕົ້ນຈິກ	N 16.7753	E 105.4228	48	Q 545062.57	1854746.52	161
64	B64	ຕົ້ນຊາດ	N 16.7751	E 105.4228	48	Q 545062.63	1854720.06	163
65	B65	ຕົ້ນບົກ	N 16.7747	E 105.4229	48	Q 545063.46	1854675.97	160
66	B66	ຕົ້ນອາລາງ	N 16.7744	E 105.4229	48	Q 545068.70	1854647.31	165
67		ຕົ້ນຊາດ	N 16.7742	E 105.4229	48	Q 545065.78	1854626.73	160
68		ຕົ້ນບົກ	N 16.7741	E 105.4229	48	Q 545070.24	1854616.45	159
69		ຕົ້ນກຸງ	N 16.7739	E 105.4229	48	Q 545063.65	1854587.04	162
70		ຕົ້ນພອກ	N 16.7737	E 105.4229	48	Q 545071.83	1854566.47	167
71		ຕົ້ນຍາງ	N 16.7733	E 105.4230	48	Q 545080.78	1854527.54	166
72		ຕົ້ນຈິກ	N 16.7732	E 105.4231	48	Q 545087.47	1854510.65	160
73		ຕົ້ນຮັງ	N 16.7730	E 105.4231	48	Q 545094.92	1854487.88	167
74		ຕົ້ນຊາດ	N 16.7729	E 105.4231	48	Q 545091.98	1854477.59	162
75		ຕົ້ນຈິກ	N 16.7727	E 105.4231	48	Q 545089.07	1854454.80	161
76		ຕົ້ນຊາດ	N 16.7725	E 105.4230	48	Q 545084.67	1854440.82	161
77		ຕົ້ນບົກ	N 16.7721	E 105.4229	48	Q 545065.72	1854396.68	163
78		ຕົ້ນອາລາງ	N 16.7721	E 105.4227	48	Q 545050.95	1854386.36	160
79		ຕົ້ນຊາດ	N 16.7717	E 105.4225	48	Q 545027.38	1854342.21	165
80		ຕົ້ນບົກ	N 16.7715	E 105.4224	48	Q 545015.57	1854329.69	160
81		ຕົ້ນກຸງ	N 16.7714	E 105.4223	48	Q 545001.55	1854314.97	159
82		ຕົ້ນພອກ	N 16.7712	E 105.4220	48	Q 544977.94	1854289.19	162
83		ຕົ້ນຍາງ	N 16.7710	E 105.4218	48	Q 544955.05	1854275.18	167
84		ຕົ້ນຈິກ	N 16.7707	E 105.4218	48	Q 544949.21	1854240.62	166
85		ຕົ້ນຮັງ	N 16.7704	E 105.4216	48	Q 544931.53	1854206.78	160
86		ຕົ້ນຊາດ	N 16.7702	E 105.4216	48	Q 544927.15	1854181.78	167
87		ຕົ້ນຈິກ	N 16.7698	E 105.4214	48	Q 544913.94	1854133.98	162
88		ຕົ້ນເປືອຍ	N 16.7696	E 105.4213	48	Q 544901.40	1854117.04	161
89		ຕົ້ນຊາດ	N 16.7695	E 105.4213	48	Q 544896.26	1854101.60	161
90		ຕົ້ນແດງ	N 16.7693	E 105.4212	48	Q 544892.59	1854085.42	163
91		ຕົ້ນເປືອຍ	N 16.7692	E 105.4211	48	Q 544881.52	1854075.11	160
92		ຕົ້ນຊາດ	N 16.7690	E 105.4211	48	Q 544873.07	1854052.31	165
93	B01	ຕົ້ນແດງ	N 16.7689	E 105.4206	48	Q 544827.99	1854037.51	160

ລາຍການທີ1: ລາຍການຈຸດພິກັດຂອບເຂດປ່າສະຫງວນ ດົງຂວາງ ຂອງບ້ານໂນນຮັງ (ໂພນຕາດ)

ມາດຕາ 3: ວ່າດ້ວຍຄະນະກຳມະການຄຸ້ມຄອງປ່າສະຫງວນຂອງບ້ານ

ຄະນະກຳມະການຄຸ້ມຄອງປ່າສະຫງວນຂອງບ້ານໂນນຮັງ-ໂພນຕາດ ມີດັ່ງນີ້:

- **ຄະນະຄຸ້ມຄອງລວມ**

1. ນາຍບ້ານ ເປັນປະທານ.
2. ເຖົ້າແກ່ແນວໂຮມບ້ານ ເປັນກຳມະການ.
3. ຜູ້ຊົງຄຸນວຸດທິ (ເຈົ້າກົກເຈົ້າເຫຼົ່າ).
4. ທີ່ດິນ ແລະ ປ່າໄມ້ບ້ານ.
5. ສະຫະພັນແມ່ຍິງບ້ານ ແລະ ຊາວໜຸ່ມ.

❖ **ຈຸລາດຕະເວນ**

1. ອາສາສະໝັກປ່າໄມ້ບ້ານ/ທີ່ດິນບ້ານ.
2. ປ້ອງກັນຄວາມສະຫງົບ (ປກສ) ແລະ ປ້ອງກັນຊາດ (ປກຊ).
3. ເຈົ້າກົກເຈົ້າເຫຼົ່າ.
4. ສະຫະພັນແມ່ຍິງ.

ມາດຕາ 4: ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງປ່າສະຫງວນຂອງບ້ານ

ຄະນະກຳມະການທີ່ຖືກແຕ່ງຕັ້ງທຸກຂະແໜງການໃນບ້ານ ຕ້ອງເປັນຜູ້ຊີ້ນຳນຳພາຊາວບ້ານໃນການປົກປັກຮັກສາທີ່ດິນ ແລະ ປ່າໄມ້ທີ່ຢູ່ໃນເຂດປ່າສະຫງວນຂອງບ້ານດັ່ງນີ້:

- ເຜີຍແຜ່ກົດລະບຽບ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບການປົກປັກຮັກສາປ່າໄມ້ໃຫ້ກັບປະຊາຊົນໃນບ້ານໄດ້ຮັບຮູ້ຢ່າງເປັນປະຈຳ.
- ໜ່ວຍງານລາດຕະເວນຕ້ອງເປັນເຈົ້າການໃນການຕິດຕາມ, ກວດກາ ແລະ ລາດຕະເວນໃນເຂດປ່າໄມ້ດັ່ງກ່າວ ໂດຍການພັດປ່ຽນກັນເດືອນລະຄັ້ງຕົ້ໜ ງຈຸລາດຕະເວນ ເຊິ່ງປະກອບມີ 4 ຈຸ.
- ນຳສະເໜີບັນຫາຕ່າງໆ, ວິທີແກ້ໄຂ ແລະ ສະຫຼຸບລາຍງານການເຄື່ອນໄຫວກິດຈະກຳຂອງປ່າຊົມໃຊ້ໃນບ້ານ ໃຫ້ແກ່ພາກສ່ວນອົງການຈັດຕັ້ງທີ່ກ່ຽວຂ້ອງຮັບຮູ້.
- ຄະນະກຳມະການຈະຕ້ອງປະຕິບັດຕາມລະບຽບທີ່ບ້ານວາງອອກ ພ້ອມທັງນຳໃຊ້ບັນດາມາດຕະການຕໍ່ບຸກຄົນໃດຕົໜ ງທີ່ມີການລະເມີດກົດລະບຽບໂດຍບໍ່ມີຂໍ້ຍົກເວັ້ນ.

ມາດຕາ 5: ວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້

- ສາມາດນຳໃຊ້ໄມ້ ປະເພດບໍ່ຫວງຫ້າມ ເພື່ອສາທາລະນະປະໂຫຍດຂອງບ້ານເຊັ່ນ: ປຸກສ້າງຫ້ອງການ, ວັດ, ໂຮງຮຽນ, ສຸກສາລາຂອງບ້ານ ແຕ່ຕ້ອງໄດ້ຮັບການອະນຸຍາດຈາກອົງການປົກຄອງເມືອງ, ເທດສະບານ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.
- ສາມາດເກັບກູ້ຜະລິດຕະຜົນປ່າໄມ້ ເພື່ອນຳໃຊ້ໃນຄອບຄົວ(ຫ້າມຫາຂາຍ).

- ຊາວບ້ານສາມາດເກັບເອົາໄມ້ທີ່ຕາຍແລ້ວຕາມທຳມະຊາດ ທີ່ມີຂະໜາດໜ້າຕ່າງ 10 ຊັ່ງຕີແມັດລົງມາ ເພື່ອເຮັດຟືນ.

ມາດຕາ 6: ວ່າດ້ວຍຂໍ້ຫ້າມ

1. ຫ້າມຄົນພາຍໃນບ້ານ ແລະ ນອກບ້ານເຂົ້າໄປຕັດໄມ້ທຸກປະເພດໃນເຂດປ່າໄມ້ຊຸມຊົນຂອງບ້ານ.
2. ຫ້າມຄົນພາຍໃນບ້ານ ແລະ ນອກບ້ານເຂົ້າໄປຈູດປ່າ ຫຼື ບຸກເບີກທີ່ດິນໃນເຂດປ່າໄມ້ຊຸມຊົນຂອງບ້ານ.
3. ຫ້າມຄົນພາຍໃນບ້ານ ແລະ ນອກບ້ານເກັບເຄື່ອງປ່າຂອງດົງ ໃນເຂດປ່າໄມ້ຊຸມຊົນຂອງບ້ານ ແບບດັບສູນ ຫຼື ເພື່ອຂາຍເປັນສິນຄ້າ.
4. ຫ້າມຄົນພາຍໃນບ້ານ ຫຼື ນອກບ້ານລ່າສັດປ່າທຸກປະເພດໃນເຂດປ່າໄມ້ຊຸມຊົນຂອງບ້ານ.
5. ຫ້າມບຸກຄົນ ຫຼື ບໍລິສັດເຂົ້າມາເຊົ່າ ຫຼື ເຮັດການສຳປະທານ ໃນເຂດປ່າໄມ້ຊຸມຊົນຂອງບ້ານຢ່າງເດັດຂາດ.

6.ຫ້າມຄົນພາຍໃນບ້ານ ຫຼື ພາຍນອກ ທຳລາຍປ້າຍປ່າໄມ້ຊຸມຊົນຂອງບ້ານຢ່າງເດັດຂາດ.

ມາດຕາ 7: ວ່າດ້ວຍມາດຕະການຕໍ່ຜູ້ລະເມີດ

1. ຖ້າຫາກຄົນໃນບ້ານ ແລະ ນອກບ້ານລະເມີດຫາເຄື່ອງປ່າຂອງດົງໃນເຂດປ່າ (ໜໍ່ໄມ້, ເຫັດ, ຫວາຍ, ຂີ້ຊີ ແລະ ອື່ນໆ) ເພື່ອຂາຍ ໃນເຂດປ່າໄມ້ຊຸມຊົນຂອງບ້ານ ແມ່ນຈະຖືກປັບໃໝດັ່ງນີ້:
   - ລະເມີດຄັ້ງທີ 1: ຄະນະກຳມະການຄຸ້ມຄອງປ່າໄມ້ຊຸມຊົນ ຈະໄດ້ຕັກເຕືອນ ແລະ ສຶກສາອົບຮົມໃຫ້ແກ່ ຜູ້ລະເມີດກິດລະບຽບ.
   - ລະເມີດຄັ້ງທີ 2: ຈະຖືກປັບໃໝ 100,000 ກີບ (ໜຶ່ງແສນກີບ) ພ້ອມສຶກສາອົບຮົມ.
   - ລະເມີດຄັ້ງທີ 3: ຈະຖືກປັບໃໝ 200,000 ກີບ (ສອງແສນກີບ) ພ້ອມສຶກສາອົບຮົມ.
2. ຖ້າຫາກບຸກຄົນໃດລະເມີດລ່າສັດປ່າໃນເຂດປ່າໄມ້ຊຸມຊົນຂອງບ້ານ ເຊັ່ນ: ເຫງົ້ນ, ກະຮອກ, ງູ, ແລະ ສັດອື່ນໆ ແມ່ນຈະຖືກປັບໃໝຕັ້ງແຕ່ 50,000 ຫາ 500,000 ກີບ (ຫ້າໝື່ນກີບ ຫາ ຫ້າແສນກີບ) ຕໍ່ ຄັ້ງ; ຄັ້ງຕໍ່ໄປຈະໄດ້ປັບໃໝ 2 ເທົ່າ ພ້ອມສຶກສາອົບຮົມ.
3. ຖ້າບຸກຄົນໃດຫາກລະເມີດຕັດໄມ້ໃນເຂດປ່າໄມ້ຊຸມຊົນ (ປ່າສະຫງວນ) ຂອງບ້ານແມ່ນຈະຖືກປັບໃໝ ດັ່ງນີ້:

   ສຳລັບໄມ້ເນື້ອອ່ອນ

   - ໄມ້ເນື້ອອ່ອນ ທີ່ມີໜ້າຕ່າງ 05 ຫາ 10 ຊັ່ງຕີແມັດ ຄັ້ງທີ 1 ແມ່ນຈະຖືກປັບໃໝ 50,000 ກີບ (ຫ້າ ໝື່ນກີບ)ຕໍ່ຕົ້ນ, ສົມບັດສົມມາ ແລະ ໝູໂຕທີ່ມີນ້ຳໜັກ 10 ກິໂລ ພ້ອມຍຶດຂອງກາງ ແລະ ສຶກສາ ອົບຮົມ; ຄັ້ງທີ 2 ແມ່ນຈະຖືກປັບໃໝ 100,000 ກີບ (ໜຶ່ງແສນກີບ)ຕໍ່ຕົ້ນ, ສົມບັດສົມມາ ແລະ ໝູ 1 ໂຕ ນ້ຳໜັກ 10 ກິໂລ ພ້ອມຍຶດຂອງກາງ ແລະ ສຶກສາອົບຮົມ.

- ໄມ້ເນື້ອອ່ອນ ທີ່ມີໜ້າຕ່າງ 11 ຫາ 20 ຊັ່ງຕີແມັດ ຄັ້ງທີ 1 ຈະຖືກປັບ ໄໝ 300,000 ກີບ (ສາມ ແສນກີບ)ຕໍ່ຕົ້ນ,ສົມບັດສົມມາ ແລະ ໝູ 1 ໂຕນ້ຳໜັກ 15 ກິໂລ ພ້ອມຍຶດຂອງກາງ ແລະ ສຶກສາ ອົບຮົມ; ຄັ້ງທີ 2 ຈະຖືກປັບໄໝ 600,000 ກີບ (ຫົກແສນກີບ)ຕໍ່ຕົ້ນ,ສົມບັດສົມມາ ແລະ ໝູ 1 ໂຕ ນ້ຳໜັກ 15 ກິໂລ ພ້ອມຍຶດຂອງກາງ ແລະ ສຶກສາອົບຮົມ; ຄັ້ງທີ 3 ຈະຖືກປັບໄໝ 900,000 ກີບ (ເກົ້າແສນກີບ)ຕໍ່ຕົ້ນ,ສົມບັດສົມມາ ແລະ ໝູ 1 ໂຕ ນ້ຳໜັກ 20 ກິໂລ ພ້ອມຍຶດຂອງກາງ, ແຕ່ ຖ້າກໍລະນີຮ້າຍແຮງໄປກວ່ານີ້ແມ່ນຈະມີການດຳເນີນຕາມລະບຽບກົດໝາຍ.
- ໄມ້ເນື້ອອ່ອນ ທີ່ມີໜ້າຕ່າງ 20 ຊັ່ງຕີແມັດຂຶ້ນໄປ ຄັ້ງທີ 1 ແມ່ນຈະຖືກປັບໄໝ 3,000,000 ກີບ (ສາມລ້ານກີບ) ຕໍ່ຕົ້ນ,ສົມບັດສົມມາ ແລະ ໝູ 1 ໂຕນ້ຳໜັກ 20 ກິໂລຂຶ້ນໄປ ພ້ອມຍຶດຂອງກາງ ແລະ ສຶກສາອົບຮົມ; ຄັ້ງທີ 2 ແມ່ນຈະຖືກປັບໄໝ 2 ເທົ່າ,ສົມບັດສົມມາ ແລະ ໝູ 1 ໂຕ ນ້ຳໜັກ 20 ກິໂລຂຶ້ນໄປ ພ້ອມຍຶດຂອງກາງ ແລະ ນຳພາກສ່ວນທີ່ກ່ຽວຂ້ອງສຳຫຼວດຜູ້ກະທຳຜິດ.

ສຳລັບໄມ້ເນື້ອແຂງ

- ບຸກຄົນໃດຫາກລະເມີດເຂົ້າໄປຕັດໄມ້ເນື້ອແຂງທີ່ມີໜ້າຕ່າງເທົ່າໃດກໍ່ຕາມ ຄັ້ງທີ 1 ແມ່ນຈະຖືກປັບໄ ໝ 3 ເທົ່າ ຂອງລາຄາໄມ້ທີ່ຖືກຕັດນັ້ນຕາມລາຄາທ້ອງຕະຫຼາດ, ພ້ອມສົມບັດສົມມາບ້ານ ແລະ ໝູ 1 ໂຕ ນ້ຳໜັກ 20 ກິໂລ, ພ້ອມຍຶດຂອງກາງ ແລະ ກ່າວເຕືອນ; ຖ້າມີການລະເມີດຄັ້ງທີ 2 ແມ່ນຈະ ຖືກປັບໄໝ 5 ເທົ່າ ຂອງລາຄາໄມ້ທີ່ຖືກຕັດນັ້ນ ຕາມລາຄາທ້ອງຕະຫຼາດ, ພ້ອມສົມບັດສົມມາບ້ານ ແລະ ໝູ 1 ໂຕ ນ້ຳໜັກ 20 ກິໂລ ພ້ອມຍຶດຂອງກາງ ແລະ, ແຕ່ຖ້າກໍລະນີຮ້າຍແຮງໄປກວ່ານີ້ແມ່ນ ຈະມີການດຳເນີນຕາມລະບຽບກົດໝາຍ.

4. ຖ້າຫາກບຸກຄົນ ຫຼື ການຈັດຕັ້ງ ເຂົ້າໄປເຮັດກິດຈະກຳໃນເຂດຄຸ້ມຄອງປ່າໄມ້ຂອງບ້ານເຊັ່ນ: ການຖາກ ຖາງ ແລະ ການຈູດປ່າ ຄັ້ງທີ 1 ແມ່ນຈະຖືກຕັກເຕືອນ-ສຶກສາອົບຮົມ ແລະ ປັບໃໝຕາມຄ່າເສຍຫາຍ ຂອງໄມ້ທີ່ຖືກຕັດ; ຖ້າມີການລະເມີດຄັ້ງທີ 2 ແມ່ນຈະຖືກນຳສິ່ງໃຫ້ກຸ່ມໃຫ້ເປັນຜູ້ສຶກສາອົບຮົມ, ພ້ອມ ທັງປັບໃໝ 2 ເທົ່າ ຕາມຄ່າເສຍຫາຍຂອງໄມ້ທີ່ຖືກຕັດ.
5. ຖ້າຫາກຄະນະກຳມະການລະເມີດຕໍ່ລະບຽບ ຫຼື ໄດ້ສົມຮູ້ຮ່ວມຄິດກັບຜູ້ກະທຳຜິດ ຄັ້ງທີ 1 ແມ່ນຈະຖືກ ຕັກເຕືອນ ແລະ ປັບໄໝເທົ່າກັນກັບຜູ້ກະທຳຜິດໃນແຕ່ລະກໍລະນີ; ຄັ້ງທີ 2 ແມ່ນຈະຖືກປັບໄໝສອງເທົ່າ, ພ້ອມທັງປົດອອກຈາກຄະນະກຳມະການປ່າສະຫງວນຂອງບ້ານ.
6. ຖ້າຫາກຜູ້ໃດທຳລາຍປ້າຍຂອບເຂດຊາຍແດນຈະຖືກປັບໄໝ 30,000 ຕໍ່ປ້າຍ ພ້ອມທັງເຮັດປ້າຍແທນ ຄືນ.
7. ຖ້າຫາກເດັກນ້ອຍທີ່ມີອາຍຸ 15 ປີລົງມາ ລະເມີດກົດລະບຽບຕາມແຕ່ລະກໍລະນີ ຄັ້ງທຳອິດ ແມ່ນ ຕັກເຕືອນ ຄັ້ງທີ2 ຜູ້ປົກຄອງຈະຕ້ອງຮັບຜິດຊອບທັງໝົດ.

ມາດຕາ 8: ວ່າດ້ວຍນະໂຍບາຍຕໍ່ຜູ້ມີຜົນງານ

1. ຖ້າຫາກຜູ້ໃດພົບເຫັນຜູ້ລະເມີດກົດລະບຽບຈົນສາມາດເປັນພະຍານເຮັດໃຫ້ຜູ້ກະທຳຜິດສາມາດຈັບກຸມໄດ້ ຈະໄດ້ຮັບຄ່າຕອບແທນ 20% ຂອງມູນຄ່າປັບໄໝ.
2. ເຂົ້າເປັນກອງທຶນບ້ານ (ບໍລິຫານເຂດຄຸ້ມຄອງປ່າໄມ້) 80% ຂອງມູນຄ່າປັບໄໝ.

ມາດຕາ 9. ວ່າດ້ວຍການປັບປຸງ

ກົດລະບຽບສະບັບນີ້ຈະຖືກໄດ້ພິຈາລະນາໂດຍຄະນາກຳມະການຢ່າງໜ້ອຍຄັ້ງໜຶ່ງຕໍ່ປີ. ຖ້າຫາກມີຄວາມຈຳເປັນປັບປຸງກົດລະບຽບສະບັບນີ້ຄະນາກຳມະການຈະສະເໜີຫານປັບປຸງໃຫ້ຂະແໜງການທີ່ກ່ຽວຂ້ອງ.

ມາດຕາ 10: ວ່າດ້ວຍຜົນສັກສິດ

ກົດລະບຽບສະບັບນີ້ແມ່ນມີຜົນສັກສິດນັບຕັ້ງແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວັນທີ.28/.1/..20

ປ. ກ. ສ. ກຸ່ມບ້ານ...02.....

ບຸນມ້ວຍ ສຸລິຍະວົງສາ

ວັນທີ.28/.01/..20

ນາຍບ້ານໂນນຮັ່ງ

ຄຳພັນ ສຸວັນມະ

ວັນທີ29/.01/.2020

ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

ເມືອງ ອາດສະພັງທອງ

ພູຫຼວງ ໄຊຍະພຸມີ

ວັນທີ.29/.1/..2020

ຫ້ອງການກະສິກຳ ແລະ ປ່າໄມ້

ເມືອງ ອາດສະພັງທອງ

ພອນເພັດ ໄຊປັນຍາ

ວັນທີ.29/..1../.2020

ຫ້ອງການຍຸຕິທຳ ເມືອງ ອາດສະພັງທອງ

ວັນມະເລດ ໂຄດຕະວົງ

ວັນທີ.30/.1../.2020

ເຈົ້າເມືອງ ເມືອງ ອາດສະພັງທອງ

ອຸໄພວັນ ໄຊຍະວົງ

ເອກະສານຊ້ອນທ້າຍ

APPENDIX

ປະຫວັດຄວາມເປັນມາ
ຂອງປ່າ "ດົງຂວາງ"

1) ຂໍ້ມູນທົ່ວໄປກ່ຽວກັບປ່າດົງຂວາງ
   - ຊື່ປ່າໄມ້: ດົງຂວາງ
   - ສ້າງຕັ້ງເມື່ອ: ປີ 1997 ໂດຍປະຊາຊົນບ້ານໂພນຕາດ ແລະ 1998 ໄດ້ຮັບການອັດແທກຂອບເຂດ ຈາກຫ້ອງການກະສິກຳ ແລະ ປ່າໄມ້ເມືອງອາດສະພັງທອງ
   - ເຂດບ້ານ: ໂພນຕາດ ; ບ້ານ ໂນນຮັ່ງ; ກຸ່ມນາໄລ່.
   - ເນື້ອທີ່: 43 ຮຕ
2) ຊັບພະຍາກອນ ແລະ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ
   - ແຫຼ່ງນ້ຳ: ສາຍຫ້ວຍດົງຂວາງ (ດົງຂວາງເປັນຍອດນ້ຳຂອງຫ້ວຍ)
   - ການປົກຫຸ້ມ: ປ່າປະສົມ 30% ປ່າໂຄກ 40% ປ່າເຫຼົ່າ 25% ເດີ່ນຫຍ້າ 10% ແລະ ດິນອື່ນໆ 5% (ດິນທີ່ເປັນນ້ຳ, ສາຍຫວຍ, ເສັ້ນທາງ)
   - ຊະນິດພັນໄມ້ປະກອບມີຫຼາຍຊະນິດພັນເຊິ່ງສາມາດແຍກອອກເປັນ 2 ປະເພດໄດ້ແກ່: ເນື້ອແຂງ ແລະ ເນື້ອອ່ອນ (ເນື້ອແຂງປະກອບມີ 5 ຊະນິດ: ໄມ້ກຸ່ງ, ໄມ້ແດງ, ໄມ້ແຕ້ຂ່າ, ໄມ້ປະດົງ, ໄມ້ເຄັ່ງ ແລະ ເນື້ອອ່ອນສ່ວນຫຼາຍພົບປະເພດໄມ້ກຸ່ງ, ໄມ້ບົກ, ໄມ້ຈົກ, ໄມ້ແດງ, ໄມ້ອາລາງ, ໄມ້ຮັ່ງ, ໄມ້ຊາດ
   - ເຄື່ອງປ່າຂອງດົງ: ປະເພດເຫັດລະໂງກ, ເຫັດປອກ, ຂີ້ຊີ, ດອກເຜິ້ງ ແລະ ອື່ນໆ
   - ສັດນ້ຳ-ສັດປ່າ: ສັດປະເພດນ້ອຍເຊັ່ນ ແລນ, ກະຮອກ, ກະແຕ, ນົກ, ໜູ, ໄກ່ປ່າ, ປາຄໍ່, ປະດຸກ ແລະ ອື່ນໆ.
3) ກົດລະບຽບໃນການຄຸ້ມຄອງ
   - ຜ່ານມາໄດ້ສ້າງຕັ້ງຄະນະກຳມະການໃນການຄຸ້ມຄອງປ່າໄມ້ດົ່ງກ່າວ
   - ສາມາດນຳໃຊ້ທຸກຢ່າງໃນເຂດປ່າດົ່ງກ່າວຍົກເວັ້ນໄມ້ທ່ອນ (ນ້ອຍ-ໃຫຍ່)
   - ບໍ່ໃຫ້ມີການບຸກເບີກເຂດຕອນດິນໃດໆໃນເຂດປ່າໄມ້ຊຸມຊົນນັ້ນ
   - ຜ່ານມາພາຍຫຼັງການສຳຫຼວດຂອບເຂດໄດ້ຕິດຕັ້ງປ້າຍ ແຕ່ປະຈຸບັນແມ່ນເປ້ເພສູນຫາຍແລ້ວ
   - ປະຈຸບັນໃນແຕ່ລະປີທັ້ງສອງບ້ານໄດ້ເອົາສີສະເປໄປສີດໃສ່ຕົ້ນໄມ້ ເພື່ອເປັນຫຼັກໝາຍເຂດແດນປ່າດົ່ງກ່າວ.

   ➧ ເນື້ອໃນຂອງລະບຽບ

   - ລະບຽບການປັບໄໝ: ມູນຄ່າທີ່ຈະປັບໄໝຕໍ່ຜູ້ລະເມີດກົດລະບຽບນັ້ນແມ່ນອີງໃສ່ຊະນິດໄມ້ທີ່ຜູ້ລະເມີດໄດ້ຕັດໄມ້ ແລະ ຍຶດຂອງກາງ ໂດຍອີງໃສ່ລາຄາໃນທ້ອງຖິ່ນ ໂດຍປະກອບມີ 3 ຄັ້ງ:
     (ສຳຫຼັບໄມ້ເນື້ອອ່ອນ)
     1. ຄັ້ງທີ I: ຈະໄດ້ປັບໄໝຕາມມູນຄ່າຂອງໄມ້, ພ້ອມໝູ 20 ກິໂລ 1 ໂຕ, ເຫຼົ້າ 1 ແກ້ວ.
     2. ຄັ້ງທີ II: ຈະໄດ້ປັບໄໝຕາມມູນຄ່າຂອງໄມ້ 2 ເທົ່າ, ພ້ອມໝູ 20 ກິໂລ 1 ໂຕ, ເຫຼົ້າ 1 ແກ້ວ.

3. ຄັ້ງທີ III: ຈະໄດ້ປັບໄໝຕາມມູນຄ່າຂອງໄມ້ 3 ເທົ່າ, ພ້ອມໝູ 20 ກິໂລ 1 ໂຕ, ເຫຼົ້າ 1 ແກ້ວ.

(ສຳຫຼັບໄມ້ເນື້ອແຂງ)

1. ຈະໄດ້ປັບໄໝຕາມມູນຄ່າຂອງໄມ້ 5 ເທົ່າ, ພ້ອມໝູ 20 ກິໂລ 1 ໂຕ, ເຫຼົ້າ 1 ແກ້ວ.

- ເງື່ອນໄຂສຳຫຼັບການນຳໃຊ້: ອຳນາດການປົກຄອງທ້ົງສອງບ້ານ ແລະ ປະຊາຊົນປຶກສາຫາລືກ່ອນການນຳໃຊ້ໄມ້ໃນປ່າດັ່ງກ່າວ ໂດຍສະເພາະການນຳໃຊ້ເພື່ອສ່ວນລວມເຊັ່ນ: ການສ້າງວັດ, ສ້າງໂຮງຮຽນ ແລະ ອື່ນໆ.
- ເງື່ອນໄຂສຳຫຼັບຜູ້ມີຜົນງານ: ຜູ້ທີ່ມີຜົນງານໂດຍໃຫ້ຂໍ້ມູນກັບນາຍບ້ານໄດ້ຮັບຮັບ 20% ຈາກມູນຄ່າປັບໄໝ ແລະ ອີກ 80% ແມ່ນເປັນກອງທຶນລວມຂອງບ້ານ.

ຮູບພາບການດຳເນີນກິດຈະກຳ

- ການເກັບກຳຂໍ້ມູນເບື້ອງຕົ້ນເປັນຂັ້ນຕອນທຳອິດໃນການສຶກສາສະພາບການ ແລະ ສຳຫຼວດກ່ຽວກັບປ່າໄມ້ໃນບ້ານເປົ້າໝາຍເພື່ອມີຄວາມຄິດໃນການສ້າງປ່າສະຫງວນຂອງບ້ານ
- ການສ້າງຄວາມເຂົ້າໃຈໃຫ້ຊາວບ້ານກ່ຽວກັບການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ເພື່ອເປັນພື້ນປະໂຫຍດໃນອະນາຄົດ

- ປະຊຸມປຶກສາຫາລືກັບຄະນະບ້ານ ຫຼື ຜູ້ທີ່ຮູ້ຈັກກ່ຽວກັບຂໍ້ມູນຊັບພະຍາກອນທຳມະຊາດໃນບ້ານເປັນຕົ້ນແມ່ນ ກ່ຽວກັບທີ່ດິນ, ປ່າໄມ້ , ເຄື່ອງປ່າຂອງດົງ, ສັດປ່າ ແລະ ແມ່ນ້ຳ, ສັດນ້ຳ.
- ກ່ຽວກັບເນື້ອທີ່ແຕ່ລະປະເພດດິນ, ປ່າໄມ້, ກ່ຽວກັບຊະນິດຂອງເຄື່ອງປ່າຂອງດົງ, ສັດປ່າ, ແມ່ນ້ຳ ທີ່ຊາວບ້ານນຳໃຊ້ໄດ້ ແລະ ຄວາມສົມບູນຂອງປ່າ, ແມ່ນ້ຳຕ່າງໆ.



- ຍ່າງສຳຫຼວດຕົວຈິງ: ເອົາຜູ້ທີ່ຮູ້ພື້ນທີ່ດີໃນບ້ານນຳພາສຳຫຼວດ ແລະ ທີມງານຕ້ອງໄດ້ກຽມແຜນທີ່ ແລະ ເຄື່ອງວັດແທກເນື້ອທີ່ (ຈີພີເອັສ). ເອົາແມ່ຍິງ ແລະ ຜູ້ທີ່ບໍ່ມີໂອກາດ ເຂົ້າຮ່ວມສຳຫຼວດເພື່ອເປັນການສ້າງຄວາມເຂົ້າໃຈໃຫ້ເຂົາເຈົ້າໃນເລື່ອງຂອບເຂດຊາຍແດນ ໂດຍເອົາສີສົດຕາມການສຳຫຼວດເພື່ອງ່າຍໃນການປັກປ້າຍເຂດແດນ ແລະ ກຳນົດເປັນຈຸດກັນຊົນປ່າສະຫງວນ.

- ການລົງສຳຫຼວດຕົວຈິງໂດຍການວາງດອນຕົວຢ່າງ ເພື່ອຈົດບັນທຶກ ກ່ຽວກັບສະພາບປ່າ, ເຄື່ອງຂອງດົງ ແລະ ຊະນິດໄມ້ຕ່າງໆ ເພື່ອເປັນການເອົາຂໍ້ມູນພື້ນຖານໃນການສະຫງວນ ແລະ ຄຸ້ມຄອງໃຫ້ຖືກຕ້ອງຕາມສະພາບການຕົວຈິງ.
- ການຮ່ວມມືຈາກພາກລັດ ແລະ ພະນັກງານວິຊາການຂອງໂຄງການໃນການເກັບກຳຂໍ້ມູນໃຫ້ຊັດເຈນ, ໂດຍອີງໃສ່ປະສົບການເພື່ອສຶກສາຂໍ້ມູນຄວາມຫຼາກຫຼາຍຂອງຊັບພະຍາກອນປ່າໄມ້.



Map Legend ເຄື່ອງໝາຍແຜນທີ່

- GPS Points

River line ສາຍນ້ຳ
- River ຫ້ວຍໃຫຍ່
- Stream ຫ້ວຍນ້ອຍ
- Small stream ຮ່ອງນ້ຳ

Road condition ສະພາບເສັ້ນທາງ
- Temporary road ທາງຊົ່ວຄາວ
- Unpaved road ທາງດິນແດງ
- Community Forest ເຂດປ່າຊຸມຊົນ

Forest Type ປະເພດປ່າໄມ້
- Dipterocarp Forest
- Grassland
- Mixed Deciduous Forest
- Unstocked Forest

JICA Japan International Volunteer Center

ສະໜັບສະໜູນໂດຍ
ອົງການອາສາສະໝັກຍີ່ປຸ່ນປະຈຳລາວ

ແຜນທີ່ສະແດງຂອບເຂດຊາຍແດນຂອງປ່າໄມ້ຊຸມຊົນ (ດົງຂວາງ)



Map Legend ເຄື່ອງໝາຍແຜນທີ່

- GPS Points

River line ສາຍນ້ຳ
- River ຫ້ວຍໃຫຍ່
- Stream ຫ້ວຍນ້ອຍ
- Small stream ຮ່ອງນ້ຳ

Road condition ສະພາບເສັ້ນທາງ
- Temporary road ທາງຊົ່ວຄາວ
- Unpaved road ທາງດິນແດງ
- Community Forest ເຂດປ່າຊຸມຊົນ

Forest Type ປະເພດປ່າໄມ້
- Dipterocarp Forest
- Grassland
- Mixed Deciduous Forest
- Unstocked Forest

JVC Japan International Volunteer Center

ສະໜັບສະໜູນໂດຍ
ອົງການອາສາສະໝັກຍີ່ປຸ່ນປະຈຳລາວ

ແຜນທີ່ສະແດງປະເພດປ່າໄມ້ ແລະ ການນຳໃຊ້ທີ່ດິນໃນເຂດປ່າໄມ້ຊຸມຊົນ (ດົງຂວາງ)



Map Legend / เถื่องพายแผนที่

- Village point จุดบ้าน
- Facilities จุดสำคัญของบ้าน
- BW&SW บ่อน้ำ และ บาดาล
- Boundary Points จุดปักเขต
- Main Points จุดใหญ่
- Sub Points จุดสองๆ
- Boundary line ขอบเขตบ้าน
- River line สายน้ำ
- River ห้วยใหญ่
- Stream ห้วยน้อย
- Small stream ของน้ำ
- Road condition สะพดเส้นสาๆ
- Temporary road สาๆดินดาว
- Unpaved road สาๆดินแดง
- Contour line เส้นละดับดวามสูง
- เส้นละดับดวามสูงใหญ่
- เส้นละดับดวามสูงสาๆ
- Community Forest เดอะดินไม้
- Residential Area เดอะดินบุกอ้าๆ

Map of Nonhang (Phontad) Boundary Line and Village Description, Atsaphangthong District, Savannakhet Province.

แผนที่ขอบเขดชายแดน ແລະ ลายละอๆดบ้านโพนฮัง (บ้าน โพนตาด), เมือๆ อาดสะพังทอๆ, แขวๆ สะหวันนะเขด.

Project for food security and livelihood improvement through sustainable agriculture and community based natural resource management

JICA Japan International Volunteer Center

ຕາຕະລາງ 1 : ເກັບກຳຂໍ້ມູນເຄື່ອງປ່າຂອງດົງ NTFP

ແຂວງ:	ສະຫວັນນະເຂດ	ບ້ານ:	ໂນນຮັງ (ໂພນຕາດ)
ເມືອງ:	ອາດສະພັງທອງ	ກຸ່ມບ້ານ:	ນາໄລ່

		ຈຸດປະສົງ/ເປົ້າໝາຍ				ປະເມີນຜົນຜະລິດທີ່ເກັບກູ້ ແລະ ລາຍຮັບ											
ລຳດັບ	ຊະນິດ (ຊື່ທ້ອງຖິ່ນ/ຊື່ລາວທົ່ວໄປ)	ຂາຍ	ຊົມໃຊ້	ອາ ຫານ	ປາປົວ ພະຍາດ	ຈ/ນ ຄ/ຄ	ຫ/ໜ (kg)	ຈ/ນເກັບໄດ້ ຕໍ່ຄອບຄົວ	ຈ/ນເກັບໄດ້ ໝົດ ບ້ານ	ມູນຄ່າ (ກີບ)	ລາຍຮັບລວມ ບ້ານ (ກີບ)	ຊື່ສະຖານທີ່/ພື້ນທີ່ເກັບ	ໄລຍະເວລາຈາກ ບ້ານ (ຊົ່ວໂມງ)	ປະເພດປ່າ	ສະຖານະພາບ (ເພີ້ມ,ຄົງທີ່,ຫຼຸດ)	% ປ່ຽນແປງ 5 ປີ ຜ່ານມາ	ເຫດຜົນການປ່ຽນແປງ
1	ຫໍ່ໄມ້	✓	✓	✓		ໝົດບ້ານ	5ກິໂລຕໍ່30ຄົນ	1.66ກິໂລ/ຄົນ	ໝົດບ້ານ	20,000	-	ແຄມບ້ານ	2	ປ່າເຫຼົ່າ	ຄົງທີ່	70%	ຄົນຫາຫຼາຍ
2	ຜັກຫວານ		✓	✓		ໝົດບ້ານ	ກິໂລ	2ກິໂລ/ຄົນ	ໝົດບ້ານ	30,000	-	ປ່າໃນບ້ານ	4	ປ່າໂຄກ	ຄົງທີ່	ບໍ່ປ່ຽນແປງ	ມີການຈັບຈອງ
3	ຫວາຍ	✓	✓	✓		ໝົດບ້ານ	ກິໂລ	1.5ກິໂລ/ຄົນ	ໝົດບ້ານ	5,000	-	ແຄມນາ	2	ປ່າເຫຼົ່າ	ຄົງທີ່	ບໍ່ປ່ຽນແປງ	ມີການຈັບຈອງ
4	ຫໍ່ສານ			✓		ໝົດບ້ານ	ກິໂລ	1ກິໂລ/ຄົນ	ໝົດບ້ານ	5,000	-	ປ່າໃນບ້ານ	5	ປ່າໂຄກ	ຄົງທີ່	ບໍ່ປ່ຽນແປງ	ຄົນຫາຫຼາຍ
5	ຂໍ້ຊີ	✓		✓	✓	ໝົດບ້ານ	ກິໂລ	3ກິໂລ/ຄົນ	ໝົດບ້ານ	80,000	-	ຕາມນາ ຕາມໂຄກ	5	ປ່າໂຄກ	ຄົງທີ່	ບໍ່ປ່ຽນແປງ	ຄົນຫາຫຼາຍ
6	ຜັກຂະ			✓		ໝົດບ້ານ	ກິໂລ	1ກິໂລ/ຄົນ	ໝົດບ້ານ	10,000	-	ປ່າໃນບ້ານ	1	ປ່າໂຄກ	ຄົງທີ່	ບໍ່ປ່ຽນແປງ	ໄຟໄໝ້
7	ຜັກກະເດົາ			✓	✓	ໝົດບ້ານ	ກິໂລ	1.3ກິໂລ/ຄົນ	ໝົດບ້ານ	20,000	-	ປ່າໃນບ້ານ	5	ປ່າໂຄກ	ຄົງທີ່	ບໍ່ປ່ຽນແປງ	ຄົນຫຼາຍ
8	ຜັກດາງຂົມ			✓		ໝົດບ້ານ	ກິໂລ	1ກິໂລ/ຄົນ	ໝົດບ້ານ	2,000	-	ແຄມນາ	2	ປ່າເຫຼົ່າ	ຄົງທີ່	ບໍ່ປ່ຽນແປງ	ຄົນຕັດ
9	ຜັກຕົ້ວ			✓		ໝົດບ້ານ	ກິໂລ	1.8ກິໂລ/ຄົນ	ໝົດບ້ານ	1,000	-	ແຄມນາ	2	ປ່າເຫຼົ່າ	ຄົງທີ່	ບໍ່ປ່ຽນແປງ	ຄົນຫາຫຼາຍ
10	ຜັກສະເໝັກ			✓		ໝົດບ້ານ	ກິໂລ	1.2ກິໂລ/ຄົນ	ໝົດບ້ານ	3,000	-	ແຄມນາ	2	ປ່າເຫຼົ່າ	ຄົງທີ່	ບໍ່ປ່ຽນແປງ	ຄົນຫາຫຼາຍ
11	ຜັກກະໂດນ			✓		ໝົດບ້ານ	ກິໂລ	1.8ກິໂລ/ຄົນ	ໝົດບ້ານ	1,000	-	ແຄມນາ	2	ປ່າເຫຼົ່າ	ຄົງທີ່	ບໍ່ປ່ຽນແປງ	ຄົນຫາຫຼາຍ

ຕາຕະລາງ 2: ກ່ຽວກັບການເກັບກູ້ ແລະ ນຳໃຊ້ປ່າໄມ້

ແຂວງ:	ສະຫວັນນະເຂດ	ບ້ານ	ໄນນຮັງ (ໄພນຕາດ)
ເມືອງ:	ອາດສະພັງທອງ	ກຸ່ມບ້ານ	ນາໄລ່

		ຈຸດປະສົງ/ເປົ້າໝາຍ				ປະເມີນຜົນຜະລິດທີ່ເກັບກູ້ ແລະ ລາຍຮັບ											
ລະຄັບ	ຊະນິດ (ຊື່ທ້ອງຖິ່ນ/ຊື່ລາວທົ່ວໄປ)	ຂາຍ	ຊົມໃຊ້	ອາ ຫານ	ຢາປົວ ພະຍາດ	ຈ/ນຄ/ຄ ເກັບ	ຫົວ ໜ່ວຍ	ຈ/ນເກັບໄດ້ ຕໍ່ຄອບຄົວ	ຈ/ນເກັບໄດ້ ໝົດບ້ານ	ມູນຄ່າ (ກີບ)	ລາຍຮັບລວມ ບ້ານ (ກີບ)	ຊື່ສະຖານທີ່/ພື້ນທີ່ເກັບ	ໄລຍະເວລາຈາກບ້ານ	ປະເພດປ່າ	ສະຖານະພາບ (ເພີ່ມ,ຄົງທີ່,ຫຼຸດ)	% ປ່ຽນແປງ 5 ປີ ຜ່ານມາ	ເຫດຜົນການປ່ຽນແປງ
1	ໄມ້ດຸ່	✓	✓	✓		ໝົດບ້ານ	kg	1.8kg	ໝົດບ້ານ	50,000		ດົງຂວາງ	30	ປ່າໂຄກ	ໜ້ອຍ	80%	ຄວາມຕ້ອງການຕະຫຼາດສູງ
2	ໄມ້ແຕ້ຂ່າ	✓	✓	✓		ໝົດບ້ານ	kg	2kg	ໝົດບ້ານ	200,000		ດົງຂວາງ	20	ປ່າປະສົມ	ໜ້ອຍ	80%	ຄວາມຕ້ອງການຕະຫຼາດສູງ
3	ໄມ້ຍາງ	✓	✓	✓		50%ຂອງບ້ານ	m^3	$5m^3$	ໝົດບ້ານ	10,000		ດົງຂວາງ	10	ປ່າປະສົມ	ປານກາງ	50%	ຊົມໃຊ້
4	ໄມ້ເຊືອກ	✓	✓	✓		50%ຂອງບ້ານ	m^3	$2m^3$	ໝົດບ້ານ	10,000		ດົງຂວາງ	30	ປ່າປະສົມ	ຫຼາຍ	80%	ຊົມໃຊ້
5	ໄມ້ຊາດ	✓	✓	✓		50%ຂອງບ້ານ	m^3	$2m^3$	ໝົດບ້ານ	20,000		ດົງຂວາງ	30	ປ່າປະສົມ	ຫຼາຍ	80%	ຊົມໃຊ້
6	ໄມ້ກຸງ		✓	✓		50%ຂອງບ້ານ	m^3	$4m^3$	ໝົດບ້ານ	15,000		ດົງຂວາງ	10	ປ່າປະສົມ	ຫຼາຍ	80%	ຊົມໃຊ້
7	ໄມ້ເປືອຍ		✓	✓	✓	50%ຂອງບ້ານ	m^3	$3m^3$	ໝົດບ້ານ	12,000		ດົງຂວາງ	0	ປ່າປະສົມ	ຫຼາຍ	90%	ຊົມໃຊ້
8	ໄມ້ແດງ		✓	✓	✓	50%ຂອງບ້ານ	m^3	$1.2m^3$	ໝົດບ້ານ	30,000		ດົງຂວາງ	20	ປ່າປະສົມ	ຫຼາຍ	80%	ຊົມໃຊ້
9	ໄມ້ຈິກ		✓	✓		50%ຂອງບ້ານ	m^3	$6m^3$	ໝົດບ້ານ	10,000		ດົງຂວາງ	30	ປ່າໂຄກ	ໜ້ອຍ	80%	ຊົມໃຊ້
10	ໄມ້ຮັງ		✓	✓		50%ຂອງບ້ານ	m^3	$7m^3$	ໝົດບ້ານ	5,000		ດົງຂວາງ	30	ປ່າໂຄກ	ປານກາງ	50%	ຊົມໃຊ້

ຕາຕະລາງ 3: ເກັບກຳຂໍ້ມູນກ່ຽວກັບສັດນ້ຳ-ສັດປ່າ

ບ້ານ	ໂນນຮັ່ງ (ໂພນຕາດ)	**ແຂວງ:**	ສະຫວັນນະເຂດ
ກຸ່ມບ້ານ	ນາໄລ່	**ເມືອງ:**	ອາດສະພັງທອງ

ລ/ດ	ຊື່ສັດປ່າ	ສະຖານຊື່ສະຖານທີ່ທີ່ພົບເຫັນ	ປ່າໄມ້/ປະເພດທີ່ດິນທີ່ມັນມັກອາໄສຢູ່	ໄລຍະເວລາຈາກບ້ານ	ຈ/ນຄ/ຄ ທີ່ນຳໃຊ້	ສະຖານະພາບ (ເພີ້ມ,ຄົງທີ່, ຫຼຸດ)	%ການປ່ຽນແປງ ພາຍໃນ 5 ປີ	ສາເຫດການປ່ຽນແປງ
1	ກະຮອກ	ດົງຂວາງ, ດົງກະແຕ	ປ່າໂຄກ	2	ບາງຄອບຄົວ	ຫຼຸດ	50%	ລ່າ
2	ກະແຕ	ດົງຂວາງ, ດົງກະແຕ	ປ່າເຫຼົ່າ	5	ບາງຄອບຄົວ	ຫຼຸດ	50%	ລ່າ
3	ຫອນ	ດົງຂວາງ, ດົງກະແຕ	ປ່າໂຄກ	4	ບາງຄອບຄົວ	ຫຼຸດ	70%	ລ່າ
4	ກະຕ່າຍ	ດົງຂວາງ, ດົງກະແຕ	ປ່າໂຄກ	3	ບາງຄອບຄົວ	ຫຼຸດ	70%	ທຳລາຍປ່າ
5	ກະເລັນ	ດົງຂວາງ, ດົງກະແຕ	ປ່າເຫຼົ່າ	3	ບາງຄອບຄົວ	ຫຼຸດ	20%	ບໍ່ມີອາຫານ
6	ນົກປີດປະລິ່ວ	ດົງຂວາງ, ດົງກະແຕ	ປ່າເຫຼົ່າ	3	ບາງຄອບຄົວ	ຫຼຸດ	10%	ລ່າ
7	ໄກ່ປ່າ	ດົງຂວາງ, ດົງກະແຕ	ປ່າເຫຼົ່າ	3	ບາງຄອບຄົວ	ຫຼຸດ	30%	ການລ່າ
8	ນົກເຂົ້າ	ດົງຂວາງ, ດົງກະແຕ	ປ່າເຫຼົ່າ	3	ບາງຄອບຄົວ	ຫຼຸດ	30%	ການລ່າ
9	ນົກເປົ້າ	ດົງຂວາງ, ດົງກະແຕ	ປ່າໂຄກ	2	ບາງຄອບຄົວ	ຫຼຸດ	50%	ການລ່າ
10	ໜູຫວາຍ	ດົງຂວາງ, ດົງກະແຕ	ປ່າໂຄກ	3	ບາງຄອບຄົວ	ຫຼຸດ	40%	ການລ່າ
11	ອີ້ນ	ດົງຂວາງ, ດົງກະແຕ	ປ່າໂຄກ	2	ບາງຄອບຄົວ	ຫຼຸດ	80%	ການລ່າ
12	ແລນ	ດົງຂວາງ, ດົງກະແຕ	ປ່າໂຄກ	2	ບາງຄອບຄົວ	ຫຼຸດ	60%	ການລ່າ
13	ນົກກົດ	ດົງຂວາງ, ດົງກະແຕ	ປ່າເຫຼົ່າ	2	ບາງຄອບຄົວ	ຫຼຸດ	50%	ການລ່າ
14	ເປັດປ່າ	ດົງຂວາງ, ດົງກະແຕ	ປ່າເຫຼົ່າ	3	ບາງຄອບຄົວ	ຫຼຸດ	20%	ການລ່າ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງ ສະຫວັນນະເຂດ

ເມືອງ ອາດສະພັງທອງ

ເລກທີ: ..52...../ຈມ

ວັນທີ: 30/...1...../2020

ຂໍ້ຕົກລົງ

ຂອງເຈົ້າເມືອງ ອາດສະພັງທອງ

ວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການຄຸ້ມຄອງປ່າສະຫງວນ

ຂອງບ້ານ ໂນນຮັ່ງ-ໂພນຕາດ

- ອີງຕາມ ຂໍ້ຕົກລົງຂອງເມືອງ ເລກທີ...52.../ , ລົງວັນທີ...30/1/2020
- ອີງຕາມ ການລົງຈັດຕັ້ງປະຕິບັດ ວຽກງານກຳນົດຂອບເຂດ ແລະ ສ້າງກົດລະບຽບ ປ່າສະຫງວນຂອງບ້ານ ດົງ ຂວາງ ຄັ້ງວັນທີ 21 ພຶດສະພາ, 24 ກໍລະກົດ, 21 ສິງຫາ, 20 ກັນຍາ, 24 ກໍລະກົດ, 5, 6, 19 ກັນຍາ 3, ຕຸລາ, 8 ພະຈິກ 2019
- ອີງຕາມ ການຕົກລົງເຫັນດີຂອງອົງການປົກຄອງບ້ານ ໂນນຮັ່ງ (+ໂພນຕາດ) ພ້ອມດ້ວຍເຖົ້າແກ່ແມ່ບ້ານ ແລະ ພໍ່, ແມ່ປະຊາຊົນໝົດບ້ານ ທີ່ປະກອບສ່ວນເຂົ້າໃນການປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ແຫຼ່ງ ນ້ຳ.

ມາດຕາ 1 : ແຕ່ງຕັ້ງບັນດາທ່ານ ທີ່ມີຊື່ດັ່ງລຸ່ມນີ້:

1.	ທ່ານ . ນາຍບ້ານ	1 ທ່ານ	ເປັນຫົວໜ້າ.
2.	ທ່ານ . ຮອງນາຍບ້ານ	1 ທ່ານ	ເປັນຮອງ.
3.	ທ່ານ . ແມ່ຮ	2 ທ່ານ	ເປັນຮອງ.
4.	ທ່ານ . ປ່າໄມ້ບ້ານ	2 ທ່ານ	ເປັນຄະນະ.
5.	ທ່ານ . ທີ່ດິນ	2 ທ່ານ	ເປັນຄະນະ
6.	ທ່ານ. ປກຊ	2 ທ່ານ	ເປັນຄະນະ
7.	ທ່ານ . ປກສ	2 ທ່ານ	ເປັນຄະນະ.
8.	ທ່ານ . ຊາວໜຸ່ມ	2 ທ່ານ	ເປັນຄະນະ.
9.	ທ່ານ.ສະຫະພັນແມ່ຍິງ	2 ທ່ານ	ເປັນຄະນະ.

ມາດຕາ 2 : ວ່າດ້ວຍຂອບເຂດສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງປ່າສະຫງວນຂອງບ້ານ

1. ຄະນະກຳມະການທີ່ຖືກແຕ່ງຕັ້ງທຸກຂະແໜງການໃນບ້ານ ຕ້ອງເປັນຜູ້ຊີ້ນຳນຳພາຊາວບ້ານໃນການປົກປັກຮັກສາທີ່ດິນ ແລະ ປ່າໄມ້ທີ່ຢູ່ໃນເຂດປ່າຊົມໃຊ້ຂອງບ້ານດັ່ງນີ້:
2. ເຜີຍແຜ່ກົດລະບຽບ ແລະ ເອກະສານຕ່າງໆ ທີ່ກ່ຽວຂ້ອງກັບການປົກປັກຮັກສາປ່າໄມ້ໃຫ້ກັບປະຊາຊົນໃນບ້ານໄດ້ຮັບຮູ້ຢ່າງເປັນປະຈຳ.
3. ໜ່ວຍງານລາດຕະເວນຕ້ອງເປັນເຈົ້າການໃນການຕິດຕາມ, ກວດກາ ແລະ ລາດຕະເວນໃນເຂດປ່າໄມ້ດັ່ງກ່າວ ໂດຍການຜັດປ່ຽນກັນເດືອນລະຄັ້ງຕໍ່ໜຶ່ງຈຸລາດຕະເວນ ເຊິ່ງປະກອບມີ 4 ຈຸ.
4. ນຳສະເໜີບັນຫາຕ່າງໆ, ວິທີແກ້ໄຂ ແລະ ສະຫຼຸບລາຍງານການເຄື່ອນໄຫວກິດຈະກຳຂອງປ່າຊົມໃຊ້ໃນບ້ານ ໃຫ້ແກ່ພາກສ່ວນອົງການຈັດຕັ້ງທີ່ກ່ຽວຂ້ອງຮັບຮູ້.
5. ຄະນະກຳມະການຈະຕ້ອງປະຕິບັດຕາມລະບຽບທີ່ບ້ານວາງອອກ ພ້ອມທັງນຳໃຊ້ບັນດາມາດຕະການຕໍ່ບຸກຄົນໃດໜຶ່ງທີ່ມີການລະເມີດກົດລະບຽບໂດຍບໍ່ມີຂໍ້ຍົກເວັ້ນ

ມາດຕາ 3 : ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງອຳນວຍຄວາມສະດວກ ພວກກ່ຽວທີ່ໄດ້ຖືກແຕ່ງຕັ້ງ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ມາດຕາ 4 : ຂໍ້ຕົກລົງສະບັບນີ້ ໃຊ້ໄວ້ເປັນຫຼັກຖານ ແລະ ສາມາດນຳໃຊ້ໄດ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າເມືອງ-ເມືອງອາດສະພັງທອງ

ອຸໄພວັນ ໄຊຍະວົງ

"Village data Book, History, Livelihood, Nature and Map of Nonhang Village, Atsaphangthong District, Savannakhet Province: [First Edition] (Village Data Book" Volume 03) "
Issued: 24 February 2020
Written by:
Nonhang Village Authority
Japan International Volunteer Center (JVC)
Published by
Japan International Volunteer Center (JVC)

Japan International Volunteer Center (JVC)
Contact of Laos Office in Savannakhet Province:
Address: Unit 20 House Number 460, Phonsavan Village, Kaisone Phomvihan city, Savannakhet province, Lao P.D.R.
Mail: P.O.Box 876 Kaisone Phonvihan city, Savannakhet province, Lao P.D.R.
TEL: 041252-263, FAX : 041 252-480
Email: info@ngo-jvc.net
URL: https://www.ngo-jvc.net/en/
ອົງການອາສາສະໝັກຍີ່ປຸ່ນ Japan International Volunteer Center (ເຈວີຊີ, JVC)
ຕິດຕໍ່:ຫ້ອງການປະຈຳລາວຢູ່ແຂວງສະຫວັນນະເຂດ
ທີ່ຢູ່: ໜ່ວຍ 20 ເຮືອນເລກທີ 460 ບ້ານໂພນສະຫວັນ, ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ, ສ.ປ.ປ. ລາວ, ເບີໂທ: 041-252-263 / ເຟັກ: 041-252-480